Unofficial Translation

# ແຜນການສຸກເສີນລະຫວ່າງອົງການ

# ສປປ ລາວ

ພຶດສະພາ 2024



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ມີທ່າອ່ຽງໃນການພົບພໍ້ກັບໄພພິບັດຫຼາຍຢ່າງ ໂດຍສະເພາະແມ່ນ ພະຍຸ ແລະ ໄພນໍ້າຖ້ວມ ທີ່ເກີດຂຶ້ນເລື້ອຍໆ ແລະ ສິ່ງຜົນໃຫ້ເກີດຜົນກະທົບທາງດ້ານສັງຄົມ ແລະ ເສດຖະກິດຢ່າງມະຫາສານ. ແຜນການສຸກເສີນລະຫວ່າງອົງການ (IACP) ນີ້ ຮັບຮູ້ບົດບາດການນໍາພາຂອງລັດຖະບານໃນວຽກງານການຄຸ້ມຄອງໄພພິບັດທຸກດ້ານ ແລະ ບົດບາດຂອງຄະນະປະຈໍາລະຫວ່າງອົງການ (IASC) ໃນການສະໜັບສະໜູນໂຄງສ້າງ ແລະ ຂີດຄວາມສາມາດ ດ້ານການກຽມຄວາມພ້ອມຮັບມືຕໍ່ກັບເຫດສຸກເສີນແຫ່ງຊາດ. ແຜນການດັ່ງກ່າວນີ້ ສະໜັບສະໜູນລັດຖະບານໃນການຮັບປະກັນການຮັບມືໃຫ້ມີປະສິດທິຜົນ, ທັນສະພາບການ ແລະ ມີການປະສານງານ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຫຼຸດຜ່ອນຜົນກະທົບຈາກໄພພິບັດທາງທໍາມະຊາດທີ່ຈະເກີດກັບຊຸມຊົນລາວ, ໂດຍຜ່ານກົນໄກ ແລະ ຍຸດທະສາດການປະສານງານທີ່ຊັດເຈນ, ພ້ອມທັງມີການກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບໄວ້ຢ່າງຈະແຈ້ງ.

*ເພື່ອຈຸດປະສົງໃນການວິເຄາະ ແລະ ການວາງແຜນ, ແຜນການນີ້ຈຶ່ງສຸມໃສ່ໄພພິບັດນໍ້າຖ້ວມ ທີ່ເກີດຈາກລົມມໍລະສຸມຂະໜາດໃຫຍ່. ໃນຂະນະດຽວກັນ, ພິທີການ, ການຈັດການດ້ານວຽກປະສານງານ ແລະ ວິທີການແບ່ງປັນຂໍ້ມູນຂ່າວສານ ແມ່ນໄດ້ລວມຢູ່ໃນເອກະສານຊ້ອນທ້າຍຂອງໄພນໍ້າຖ້ວມຈາກລົມມໍລະສຸມຂະໜາດນ້ອຍ ແລະຂະໜາດກາງ ທີ່ສົ່ງຜົນກະທົບຕໍ່ປະເທດ ເພື່ອໄວ້ເປັນບ່ອນອີງ.*

## ຄໍາສັບ

**AAP**

ຄວາມຮັບຜິດຊອບຕໍ່ຜູ້ໄດ້ຮັບຜົນກະທົບ, 11

**AAR**

ການທົບທວນຄືນພາຍຫຼັງການດໍາເນີນງານ, 9

**ASEAN**

ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້, 5

**CDMC**

ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນສູນກາງ, 5

**CERF**

ກອງທຶນຮັບມືເຫດສຸກເສີນຂັ້ນສູນກາງ, 8

**CFS**

ພື້ນທີ່ປອດໄພສໍາລັບເດັກ, 29

**CFW**

ແຜນງານເງິນສົດສໍາລັບການເຮັດວຽກ, 36

**CWD**

ເດັກນ້ອຍພິການ, 29

**DCC**

ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, 5

**DDMC**

ຄະນະຄຸ້ມຄອງໄພພິບັດຂັ້ນເມືອງ, 5

**DHIS2**

ຊອບແວຂໍ້ມູນຂ່າວສານສຸຂະພາບຂັ້ນເມືອງ, 14

**DIM**

ແບບຈໍາລອງຜົນກະທົບຈາກໄພພິບັດ, 4

**DMH**

ກົມອຸຕຸນິຍົມ ແລະ ອຸທົກກະສາດ, 5

**DSW**

ກົມສະຫວັດດີການສັງຄົມ, 5

**ECG**

ເງິນຊ່ວຍເຫຼືອສຸກເສີນ, 8

**EMTs**

ໜ່ວຍງານແພດສຸກເສີນ, 23

**EOD**

ການທໍາລາຍວັດຖຸລະເບີດ, 36

**ER**

ການຟື້ນຟູໃນໄລຍະເລີ່ມຕົ້ນ, 14

**ETF**

ຄະນະສະເພາະກິດເຫດສຸກເສີນ, 12

**FSAC**

ຂະແໜງຄໍ້າປະກັນສະບຽງອາຫານ ແລະ ກະສິກໍາ, 11

**GBV**

ຄວາມຮຸນແຮງທາງເພດ, 18

**IACP**

ແຜນການສຸກເສີນລະຫວ່າງອົງການ, 6

**IASC**

ຄະນະປະຈໍາລະຫວ່າງອົງການ, 5

**ICCG**

ກຸ່ມປະສານງານລະຫວ່າງເຂດ, 8

**ICT**

ເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານ, 15

**IMAM**

ການຄຸ້ມຄອງການຂາດສານອາຫານກະທັນຫັນແບບເຊື່ອມສານ, 14

**IMN**

ເຄືອຂ່າຍການຄຸ້ມຄອງຂໍ້ມູນຂ່າວສານ, 8

**INGOs**

ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ, 12

**INNGOs**

ອົງການທີ່ບໍ່ຂຶ້ນກັບລັດຖະບານ ທັ້ງລະດັບຊາດ ແລະ ນາໆຊາດ, 12

**IRA**

ການປະເມີນຜົນເບື້ອງຕົ້ນແບບວ່ອງໄວ, 14

**IYCF**

ການໃຫ້ອາຫານເດັກນ້ອຍ ແລະ ເດັກອ່ອນ, 14

**LNOB**

ບໍ່ປ່ອຍປະຜູ້ໃດໄວ້ເບື້ອງຫຼັງ, 10

**LWU**

ສະຫະພັນແມ່ຍິງລາວ, 29

**M&E**

ການຕິດຕາມແລະການປະເມີນຜົນ, 11

**MHPSS**

ສຸຂະພາບຈິດ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ, 17

**MoTC**

ກະຊວງເຕັກໂນໂລຊີ ແລະ ການສື່ສານ, 15

**MISP**

ຊຸດບໍລິການເບື້ອງຕົ້ນຂັ້ນຕໍ່າ, 14

**MoES**

ກະຊວງສຶກສາທິການ ແລະ ກິລາ, 14

**MoH**

ກະຊວງສາທາລະນະສຸກ, 14

**MoLSW**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, 5

**MoNRE**

ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, 5

**MOU**

ບົດບັນທຶກຄວາມເຂົ້າໃຈ, 12

**MPTC**

ກະຊວງໄປສະນີ ແລະ ໂທລະຄົມມະນາຄົມ, 15

**MSUs**

ການເຄື່ອນຍ້າຍໜ່ວຍຈັດເກັບແບບເຄື່ອນທີ່, 38

**MUAC**

ການວັດແທກຮອບກາງແຂນສ່ວນເທິງ, 14

**NFIs**

ລາຍການທີ່ບໍ່ແມ່ນອາຫານ, 4

**NGOs**

ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, 4

**OCHA**

ຫ້ອງການປະສານງານດ້ານມະນຸດສະທໍາ ແຫ່ງອົງການສະຫະປະຊາຊາດ, 7

**PDMC**

ຄະນະຄຸ້ມຄອງໄພພິບັດຂັ້ນແຂວງ, 5

**PFA**

ຄວາມຕ້ອງການດ້ານການຊ່ວຍເຫຼືອເບື້ອງຕົ້ນທາງຈິດໃຈ, 17

**PHEOC**

ສູນປະຕິບັດການສຸກເສີນດ້ານການແພດ ແລະ ສາທາລະນະສຸກ, 23

**PLW**

ແມ່ຍິງຖືພາ ແລະໃຫ້ນົມລູກ, 5

**PSEA**

ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ, 11

**PSH**

ການປ້ອງກັນການລ່ວງລະເມີດທາງເພດ, 37

**PWDs**

ຄົນພິການ, 11

**RNA**

ການປະເມີນຄວາມຕ້ອງການແບບຮີບດ່ວນ, 8

**ROAP**

ຫ້ອງການພາກພື້ນອາຊີ ແລະ ປາຊີຟິກ, 7

**SADDD**

ຂໍ້ມູນແຍກຕາມເພດ, ອາຍຸ, ຄວາມພິການ, 11

**SEA**

ການຂູດຮີດ ແລະ ການລ່ວງລະເມີດທາງເພດ, 18

**SOPs**

ມາດຕະຖານການດໍາເນີນງານ, 7

**SRH**

ສຸຂະພາບທາງເພດ ແລະຈະເລີນພັນ, 14

**UNCG**

ກຸ່ມສື່ສານແຫ່ງສະຫະປະຊາຊາດ, 31

**UNCT**

ທີມງານສະຫະປະຊາຊາດປະຈໍາປະເທດ, 5

**UNDAC**

ທີມປະເມີນສະຖານະການໄພພິບັດ ແລະ ປະສານງານແຫ່ງອົງການສະຫະປະຊາຊາດ, 7

**UNRC**

ຜູ້ປະສານງານ ແຫ່ງອົງການສະຫະປະຊາຊາດ, 5

**UNRCO**

ຫ້ອງການປະສານງານແຫ່ງອົງການສະຫະປະຊາຊາດ, 7

**UXO**

ລະເບີດບໍ່ທັນແຕກ, 4

**VPDU**

ໜ່ວຍປ້ອງກັນໄພພິບັດຂັ້ນບ້ານ, 5

**VRA**

ການຈັດການທີ່ແຕກຕ່າງກັນ, 14

**WASH**

ນ້ຳ, ສຸຂາພິບານ ແລະ ສຸຂະອະນາໄມ, 4

**WFS**

ພື້ນທີ່ປອດໄພສຳລັບແມ່ຍິງ, 29

# ແບບຈຳລອງຜົນກະທົບຈາກໄພພິບັດ (DIM)

## ການວາງແຜນສະຖານະການ

**ຄວາມເປັນມາ**

ສປປ ລາວ ໄດ້ພົບພໍ້ກັບປະກົດການທາງພູມີອາກາດ, ອຸທົກກະສາດ ແລະ ທໍລະນີສາດ ບໍ່ວ່າຈະເປັນ ໄພນໍ້າຖ້ວມ, ພາຍຸເຂດຮ້ອນ, ໄພແຫ້ງແລ້ງ, ຄື້ນຄວາມຮ້ອນ, ດິນເຈື່ອນ, ການແຜ່ລະບາດຂອງພະຍາດ ແລະ ການລະບາດຂອງພະຍາດຕິດຕໍ່, ແຜ່ນດິນໄຫວຂະໜາດນ້ອຍ ແລະ ລະເບີດບໍ່ທັນແຕກ (UXO). ໄພນໍ້າຖ້ວມຖືວ່າເປັນໄພທຳມະຊາດອັນໃຫຍ່ຫຼວງລະດັບປະເທດ, ໂດຍມີສາເຫດຕົ້ນຕໍຈາກນໍ້າລົ້ນຝັ່ງຈາກແມ່ນໍ້າຂອງ. ໄພນໍ້າຖ້ວມຕາມລະດູການເກີດຂຶ້ນໃນ ສປປ ລາວ ທຸກປີ ໂດຍສະເພາະໃນຊ່ວງລະດູມໍລະສຸມຈາກທິດຕາເວັນຕົກສຽງໃຕ້, ເຊິ່ງນັບຕັ້ງແຕ່ເດືອນກໍລະກົດ ຫາ ເດືອນກັນຍາ. ໄພນໍ້າຖ້ວມຖືວ່າເປັນໄພຂົ່ມຂູ່ອັນໃຫຍ່ຫຼວງໃນພື້ນທີ່ສ່ວນໃຫຍ່ຂອງ ສປປ ລາວ. ໄພນໍ້າຖ້ວມທີ່ຮຸນແຮງ ແລະ ແກ່ໄລຍະເວລາທີ່ຍາວທີ່ສຸດມັກຈະເກີດຂຶ້ນຢູ່ໃນບັນດາແຂວງພາກກາງ ແລະ ພາກໃຕ້, ແຕ່ໄພນໍ້າຖ້ວມກະທັນຫັນທີ່ເກີດຈາກພະຍຸເຂດຮ້ອນໄດ້ສົ່ງຜົນກະທົບຕໍ່ບັນດາແຂວງພາກເໜືອໃນເມື່ອກ່ອນ. ໄພນໍ້າຖ້ວມມັກຈະເປັນອັນຕະລາຍຕໍ່ຊີວິດ ແລະ ສ້າງຄວາມເສຍຫາຍຕໍ່ພື້ນຖານໂຄງລ່າງ, ການຕັ້ງຖິ່ນຖານຂອງມະນຸດ, ແລະ ການບໍລິການທີ່ຈຳເປັນ. ທ່າອ່ຽງຂອງຝົນຕົກ ລະບຸວ່າ: ລະດູຝົນແມ່ນເລີ່ມໄວກວ່າປົກກະຕິ, ໃນຂະນະທີ່ສະພາບອາກາດທີ່ເກີດຈາກການປ່ຽນ ແປງຂອງດິນຟ້າອາກາດເຊັ່ນ: ລົມພາຍຸໄຕ້ຝຸ່ນທີ່ຮຸນແຮງຂຶ້ນເລື້ອຍໆ ອາດຈະສົ່ງຜົນກະທົບຫຼາຍຕໍ່ ສປປ ລາວ.




**ການວາງແຜນສະຖານະການ**

ໃນການວາງແຜນສະຖານະການດັ່ງກ່າວນີ້, ລົມມໍລະສຸມຂະໜາດໃຫຍ່ຈະເຄື່ອນເຂົ້າສູ່ພາກໃຕ້ຂອງລາວໃນທ້າຍເດືອນກໍລະກົດ, ສົ່ງຜົນເຮັດໃຫ້ມີຝົນຕົກໜັກຕິດຕໍ່ກັນເປັນເວລາຫຼາຍວັນ. ເມື່ອຝົນສືບຕໍ່ຕົກຕໍ່ເນື່ອງ, ແມ່ນໍ້າຕ່າງໆໃນພື້ນທີ່ໄດ້ຮັບຜົນກະທົບ ຈະເລີ່ມມີປະລິມານນໍ້າລົ້ນຕາຝັ່ງ, ເຊິ່ງຈະເຮັດໃຫ້ເຂດພື້ນອ້ອມຂ້າງມີນໍ້າລົ້ນ ແລະ ຖ້ວມເຂດລຸ່ມນໍ້າ. ເຖິງແມ່ນວ່າບັນດາແຂວງຕ່າງໆໃນລາວ ຈະໄດ້ຮັບຜົນກະທົບໃນລະດັບໜຶ່ງໃນເບື້ອງຕົ້ນ, ແຕ່ວ່າພາກໃຕ້ຂອງປະເທດ ໂດຍສະເພາະ ແຂວງສະຫວັນນະເຂດ ແລະ ຈຳປາສັກ ແມ່ນໄດ້ຮັບຜົນກະທົບຫຼາຍທີ່ສຸດ. ເນື່ອງຈາກພູທີ່ສູງຊັນ ແລະ ຮ່ອມພູເລິກຂອງເຂດພາກໃຕ້ຂອງລາວ ສົ່ງຜົນເຮັດໃຫ້ປະລິ ມານນໍ້າໄຫຼລົງມາຢ່າງໄວວາ ກໍ່ໃຫ້ເກີດນໍ້າຖ້ວມກະທັນຫັນ ແລະ ດິນເຈື່ອນ. ນອກ ຈາກນັ້ນ, ແມ່ນໍ້າຂອງທີ່ໄຫຼຜ່ານພາກພື້ນດັ່ງ ກ່າວນັ້ນກໍຢູ່ໃນລະດັບສູງແລ້ວ ເນື່ອງມາຈາກມີຝົນຕົກໜັກຢູ່ທາງຕົ້ນນໍ້າໃນປະເທດເພື່ອນບ້ານ ເຊິ່ງສົ່ງຜົນເຮັດໃຫ້ປະລິມານນໍ້າຝົນໃນທ້ອງຖິ່ນມີຄວາມຮຸນແຮງຂຶ້ນ.

ສະພາບຝົນຕົກໜັກ, ນໍ້າຖ້ວມກະທັນຫັນ ແລະ ດິນເຈື່ອນໃນຫຼາຍພື້ນທີ່ ສົ່ງຜົນເຮັດໃຫ້ບ້ານເຮືອນ, ພື້ນຖານໂຄງລ່າງ ແລະ ພືດຜົນຜະລິດພືດ ໄດ້ຮັບຄວາມເສຍຫາຍຢ່າງໜັກໜ່ວງ, ເຊິ່ງໄດ້ສົ່ງຜົນກະທົບເຮັດໃຫ້ການສັນຈອນ ແລະ ການດຳລົງຊີວິດປະຈຳວັນໃນເຂດທີ່ໄດ້ຮັບຜົນກະທົບນັ້ນ ຢຸດລົງ

ຊົ່ວຄາວ. ຂະນະທີ່ຝົນຍັງຕົກຕໍ່ເນື່ອງ, ເຮັດໃຫ້ບາງພື້ນທີ່ມີນ້ຳຖ້ວມຂຶ້ນສູງກວ່າ 2 ແມັດ. ຊຸມຊົນໃນເຂດພື້ນທີ່ຕ່ຳ ແລະ ໃກ້ກັບແມ່ນ້ຳຂອງ ຕ້ອງ ຍົກຍ້າຍອອກຈາກບ້ານເຮືອນຂອງຕົນ ແລະ ຊອກຫາທີ່ຢູ່ອາໄສໃນສະຖານທີ່ພັກຊົ່ວຄາວ. ເຖິງຢ່າງໃດກໍຕາມ, ປະຊາຊົນຈຳນວນຫຼາຍ ກໍບໍ່ສາມາດ ຍົກຍ້າຍອອກຈາກເຮືອນຂອງເຂົາເຈົ້າໄດ້ທັນ ແລະ ຕິດຄ້າງຢູ່ໃນພື້ນທີ່ດັ່ງກ່າວ, ເຊິ່ງຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອ.

ໃນຊ່ວງເລີ່ມຕົ້ນຂອງນ້ຳຖ້ວມໃນລະດູມໍລະສຸມ ໄດ້ມີລາຍງານວ່າ ມີຜູ້ເສຍຊີວິດຈຳນວນ 40 ກວ່າຄົນ ເຊິ່ງສ່ວນໃຫຍ່ແມ່ນເນື່ອງມາຈາກນ້ຳຖ້ວມ ກະທັນຫັນໃນເຂດພາກໃຕ້ຂອງລາວ ແລະ ມີຜູ້ຫາຍສາບສູນ ເປັນຈຳນວນ 20 ກວ່າຄົນ. ມີປະຊາຊົນທີ່ໄດ້ຮັບບາດເຈັບຈາກໄພນ້ຳຖ້ວມ ຫຼື ໃນເວລາ ທີ່ພະຍາຍາມໜີຈາກເຂດນ້ຳຖ້ວມຢ່າງຮີບດ່ວນ ປະມານ 20,000 ຄົນ. ປະຊາຊົນຫຼາຍກວ່າ 830,000 ຄົນ ໄດ້ຮັບຜົນກະທົບໃນທົ່ວທຸກແຂວງ, ແລະ ປະມານ 150,000 ຄົນ ໃນຈຳນວນຜູ້ບອບບາງທີ່ສຸດ ແມ່ນຕ້ອງການຄວາມຊ່ວຍເຫຼືອດ້ານມະນຸດສະທຳ, ເຊິ່ງລວມມີ 35,000 ຄົນ ທີ່ຖືກ ຍົກຍ້າຍ ແລະ ໄປອາໄສຢູ່ຕາມເຮືອນຂອງພີ່ນ້ອງ ຫຼື ສູນພັກພື້ນທີ່ບໍ່ເປັນທາງການ ແລະ ທາງການ. ລວມທັງໝົດແລ້ວ ແມ່ນມີບ້ານເຮືອນທີ່ໄດ້ຮັບ ຄວາມເສຍຫາຍຈາກນ້ຳຖ້ວມ 7,500 ຫຼັງ ແລະ ໄດ້ຮັບຄວາມເສຍຫາຍເພີ່ມອີກ 7,500 ຫຼັງ.

ຄວາມຕ້ອງການໃນທັນທີຂອງປະຊາກອນທີ່ໄດ້ຮັບຜົນກະທົບ ແມ່ນອາຫານ, ສຸຂະພາບ, ທີ່ພັກອາໄສ, ສິ່ງຂອງທີ່ບໍ່ແມ່ນອາຫານ (NFIs) ແລະ ນ້ຳ, ສຸຂາພິບານ, ແລະ ສຸຂະອະນາໄມ (WASH). ປັດໃຈຫຼາຍຢ່າງທີ່ເພີ່ມຄວາມສ່ຽງໃຫ້ກັບປະຊາກອນນອກຈາກໄພນ້ຳຖ້ວມ ລວມມີອັດຕາຄວາມທຸກ ຍາກທີ່ສູງ, ຄວາມຫ່າງໄກສອກຫຼີກ, ພື້ນທີ່ທຸລະກັນດານ, ແລະ ໂຄງລ່າງພື້ນຖານບໍ່ພຽງພໍ. ນອກຈາກນັ້ນ, ຊຸມຊົນທີ່ມີຄວາມສ່ຽງຫຼາຍ ແມ່ນບໍ່ຮູ້ວ່າ ຈະຕ້ອງຍ້າຍໄປຢູ່ເຂດພື້ນທີ່ໃດ ໃນໄລຍະທີ່ເກີດນ້ຳຖ້ວມ. ລັດຖະບານ ແລະ ອົງການຈັດຕັ້ງບໍ່ຂຶ້ນກັບລັດຖະບານ (NGOs) ຈຶ່ງໄດ້ຈັດກິດຈະກຳ ຫຼຸດຜ່ອນຄວາມສ່ຽງດ້ານໄພພິບັດ, ລວມທັງການຝຶກຊ້ອມ, ໃນບາງຊຸມຊົນທີ່ມີຄວາມສ່ຽງ ເຊັ່ນ: ການກຳນົດພື້ນທີ່ປອດໄພສຳລັບການຍົກຍ້າຍໃນ ກໍລະນີເກີດໄພນ້ຳຖ້ວມ. ພາຍຫຼັງໄພນ້ຳຖ້ວມ, ຜູ້ທີ່ໄດ້ຍົກຍ້າຍ ຈະຫາສະຖານທີ່ພັກອາໄສຢູ່ທີ່ເຮືອນຂອງຍາດພີ່ນ້ອງ ໃນບ້ານຂອງຕົນເອງ ຫຼື ບ້ານ ໃກ້ຄຽງ ຫຼື ໄປພັກອາໄສຊົ່ວຄາວຢູ່ທີ່ໂຮງຮຽນ, ວັດວາອາຮາມ, ຫຼື ສະຖານທີ່ອື່ນໆ.

## ການວາງແຜນສົມມຸດຖານ

### ການກຳນົດວິທີການຮັບມື

- ໃນຂະນະທີ່ປະຊາຊົນຈຳນວນຫຼວງຫຼາຍໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມໃນຊ່ວງລະດູມໍລະສຸມ, ການຊ່ວຍເຫຼືອດ້ານມະນຸດສະທຳ ໃຫ້ບຸລິ ມະສິດແກ່ກຸ່ມທີ່ມີບອບບາງທີ່ສຸດ, ໂດຍສະເພາະໃນຊ່ວງ 14 ມື້ທຳອິດຂອງເຫດການສຸກເສີນ.
- ຄວາມຕ້ອງການຮີບດ່ວນທີ່ສຳຄັນ ແມ່ນທາງດ້ານ ອາຫານ, ສຸຂະພາບ, ທີ່ພັກອາໄສ ແລະ ນ້ຳ, ສຸຂາພິບານ, ແລະ ສຸຂະອະນາໄມ (WASH) ແລະ ຈະເປັນຈຸດສຸມຂອງການໃຫ້ຄວາມຊ່ວຍເຫຼືອແກ່ຊຸມຊົນດ້ານມະນຸດສະທຳ.
- ກຸ່ມທີ່ມີຄວາມບອບບາງສູງທີ່ຈະໄດ້ຮັບການບູລິມະສິດສຳລັບການຊ່ວຍເຫຼືອ, ປະກອບມີ:
    - ຜູ້ທີ່ຖືກຍົກຍ້າຍ, ໂດຍສະເພາະແມ່ນຜູ້ທີ່ອາໄສຢູ່ໃນສູນຟື້ນຟູຊົ່ວຄາວ.
    - ປະຊາຊົນທີ່ໃນຊຸມຊົນຊົນນະບົດ ແລະ ຫ່າງໄກສອກຫຼີກ, ໂດຍສະເພາະຜູ້ທີ່ຖືກລະບຸວ່າເປັນກຸ່ມທີ່ມີຄວາມບອບບາງ ແລະ ຢູ່ໃນ ລະດັບຄວາມທຸກຍາກທີ່ຕ່ຳສຸດ ເຊິ່ງມີຂໍ້ຈຳກັດໃນການເຂົ້າເຖິງຊັບພະຍາກອນ ແລະ ການບໍລິການຂອງຊຸມຊົນ.
    - ປະຊາຊົນຜູ້ທີ່ໄດ້ສູນເສຍຊີວິດການເປັນຢູ່ ເນື່ອງຈາກໄພນ້ຳຖ້ວມ ແລະ ພື້ນຖານໂຄງລ່າງທີ່ໄດ້ຮັບຄວາມເສຍຫາຍ.
    - ເດັກນ້ອຍທີ່ມີສະພາວະຂາດສານອາຫານແບບຈ່ອຍຜອມ, ເຊິ່ງມີອາຍຸຕ່ຳກວ່າ 5 ປີ.
    - ແມ່ຍິງຖືພາ ແລະ ແມ່ຍິງທີ່ກຳລັງໃຫ້ນົມລູກ (PLW).
    - ຄົນພິການ, ເຊິ່ງລວມມີ ຜູ້ທີ່ມີຂໍ້ຈຳກັດດ້ານການເຄື່ອນໄຫວ ຫຼື ຄວາມຫຍຸ້ງຍາກໃນການສື່ສານ.
    - ປະຊາກອນທີ່ບອບບາງ ເຊັ່ນ: ຜູ້ສູງອາຍຸ, ຄົວເຮືອນທີ່ມີຫົວໜ້າຄົນດຽວ, ຄົວເຮືອນທີ່ມີຫົວໜ້າຄອບຄົວເປັນແມ່ຍິງ, ແລະ ແມ່ຍິງ ແລະເດັກນ້ອຍ.

- ບຸກຄົນທີ່ມີລັກຊະນິຍົມທາງເພດທີ່ຫຼາກຫຼາຍ, ລັກສະນະທາງເພດ ແລະ ການສະແດງອອກທາງເພດ, ແລະ ລັກສະນະທາງເພດ.

## ການຮັບມືຂອງລັດຖະບານ

- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW) ໂດຍຜ່ານກົມສະຫວັດດີການສັງຄົມ (DSW) ເຊິ່ງມີການສົມທົບກັບ ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນສູນກາງ (CDMC) ສະໜັບສະໜູນການປະສານງານຍຸດທະສາດຂອງການຈັດຕັ້ງປະຕິບັດການກຽມພ້ອມຮັບມືຕໍ່ກັບໄພພິບັດທັງໝົດ, ລວມທັງການເກັບກໍາຂໍ້ມູນ ແລະ ການປະເມີນ, ການຮັບມື ແລະ ການຟື້ນຟູ. ກົມສະຫວັດດີການສັງຄົມ ມີພາລະບົດບາດສໍາຄັນໃນການສື່ສານການລາຍງານກ່ຽວກັບສະຖານະການໄພພິບັດ, ການຮັບມືສຸກເສີນ ແລະ ກິດຈະກໍາການຟື້ນຟູທີ່ວາງແຜນໄວ້ໃຫ້ແກ່ກະ ຊວງຕ່າງໆ, ລວມທັງ ຜ່ານທັງຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງ (PDMC), ຄະນະຄຸ້ມຄອງໄພພິບັດຂັ້ນເມືອງ (DDMC), ແລະ ໜ່ວຍງານປ້ອງກັນໄພພິບັດຂັ້ນບ້ານ (VPDU), ແລະ ໃນການປະສານງານກັບ ກົມອຸຕຸນິຍົມ ແລະ ອຸທົກກະສາດ (DMH) ໃນການເຜີຍແຜ່ຂໍ້ມູນກ່ຽວກັບການແຈ້ງເຕືອນໄພລ່ວງໜ້າ.
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຍັງເຮັດໜ້າທີ່ເປັນຈຸດປະສານງານຂອງ ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້ (ອາຊຽນ) ໃນການຄຸ້ມຄອງໄພພິບັດ. ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (MoNRE) ໂດຍຜ່ານ ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ (DCC) ແລະ ກົມອຸຕຸນິຍົມ ແລະ ອຸທົກກະສາດ ແມ່ນຮັບຜິດຊອບໃນດ້ານວຽກງານການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ, ການສ້າງແຜນທີ່ຄວາມສ່ຽງ, ການແຈ້ງເຕືອນໄພລ່ວງໜ້າ ລວມທັງການຄຸ້ມຄອງທີ່ດິນ, ນໍ້າ, ແລະ ຊັບພະຍາກອນທໍາມະຊາດໃນສະພາບການເກີດໄພພິບັດ. ນອກນີ້ ຍັງເປັນຈຸດປະສານງານສໍາລັບຂອບວຽກເຊັນໄດ (Sendai) ສໍາລັບການຫຼຸດຜ່ອນຄວາມສ່ຽງດ້ານໄພພິບັດ.
- ໃນກໍລະນີສຸກເສີນທີ່ຮ້າຍແຮງ, ສາມາດສົມມຸດວ່າ ຄວາມສາມາດຂອງຊາດໃນການປະສານງານດ້ານການຮັບມື ແມ່ນມີຈໍາກັດ ແລະ ຍິນດີຮັບການຊ່ວຍເຫຼືອຈາກພາຍນອກ.
- ພາຍໃຕ້ການນໍາພາໂດຍລວມຂອງລັດຖະບານ, ຄະນະປະຈໍາລະຫວ່າງອົງການ (IASC) ແມ່ນກົນໄກການປະສານງານໂດຍລວມຂອງການປະຕິບັດດ້ານມະນຸດສະທໍາຂອງລັດຖະບານ ແລະ ໜ່ວຍງານລະຫວ່າງປະເທດປະຈໍາພື້ນທີ່. IASC ແມ່ນຢູ່ພາຍໃຕ້ການເປັນປະທານຮ່ວມໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW) ແລະ ຜູ້ປະສານງານແຫ່ງອົງການສະຫະປະຊາຊາດ (UNRC). UNRC ຮັບຜິດຊອບໃນການນໍາພາ ແລະ ປະສານງານການຮັບມືສຸກເສີນລະຫວ່າງປະເທດ ໂດຍຜ່ານທີມງານສະຫະປະຊາຊາດປະຈໍາປະເທດ (UNCT), ເຊິ່ງປະກອບດ້ວຍຫົວໜ້າອົງການຂອງອົງການສະຫະປະຊາຊາດປະຈໍາພື້ນທີ່. UNRC ຮັບປະກັນວ່າການດໍາເນີນງານດ້ານມະນຸດສະທໍາຂອງປະຊາຄົມໂລກ ແມ່ນການປະກອບສ່ວນຕໍ່ການດໍາເນີນງານ ແລະ ການນໍາພາຂອງລັດຖະບານ.

## ຂໍ້ຈໍາກັດ ແລະ ສິ່ງທ້າທາຍດ້ານການປະຕິບັດງານ

- **ໂຄງສ້າງພື້ນໄດ້ຮັບຄວາມເສຍຫາຍ:** ນໍ້າຖ້ວມໄດ້ຖ້ວມຖະໜົນຫົນທາງ ແລະ ຂົວຂ້າມຕ່າງໆ ໂດຍສະເພາະໃນເຂດລຸ່ມນໍ້າ, ເຊິ່ງສິ່ງຜົນເຮັດໃຫ້ຫຼາຍຊຸມຊົນຖືກຕັດຂາດຈາກໂລກພາຍນອກ. ນອກຈາກນີ້, ເສດຂອງສິ່ງກໍ່ສ້າງຕ່າງໆທີ່ຖືກທໍາລາຍ ແລະ ດິນເຈື່ອນ ຍັງເປັນສິ່ງກີດຂວາງຖະໜົນຫົນທາງ ກໍ່ໃຫ້ເກີດຄວາມຫຍຸ້ງຍາກໃນການເຂົ້າໄປໃຫ້ຄວາມຊ່ວຍເຫຼືອ ແລະ ບັນເທົາທຸກ ເພື່ອໄປເຖິງເຂດທີ່ໄດ້ຮັບຜົນກະທົບ.
- **ພູມສັນຖານທີ່ບໍ່ສາມາດເຂົ້າເຖິງໄດ້ ແລະ ສະຖານທີ່ຫ່າງໄກສອກຫຼີກ**: ຫຼາຍຊຸມຊົນໃນພາກໃຕ້ຂອງປະເທດລາວຕັ້ງຢູ່ໃນເຂດຫ່າງໄກສອກຫຼີກ ຫຼື ເຂົ້າເຖິງໄດ້ຍາກ. ພູມສັນຖານທີ່ບໍ່ຮາບພຽງໃນທາງເຂດພາກໃຕ້ຂອງລາວ ໄດ້ກາຍສິ່ງທ້າທາຍເພີ່ມເຕີມໃຫ້ກັບຜູ້ໃຫ້ການຊ່ວຍເຫຼືອ ໃນການເຂົ້າເຖິງພື້ນທີ່ທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມ. ພູຜາທີ່ສູງຊັນ ແລະ ຮ່ອມພູທີ່ເລິກ ໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ການເດີນທາງ ໂດຍສະ ເພາະໃນເຂດທີ່ໄດ້ຮັບຜົນກະທົບໜັກໜ່ວງຈາກໄພນໍ້າຖ້ວມ.
- **ການປົນເປື້ອນຈາກລະເບີດຝັງດິນ**: ພື້ນທີ່ສ່ວນໃຫຍ່ຂອງລາວ ແມ່ນໄດ້ຮັບການປົນເປື້ອນຢ່າງໜັກໜ່ວງຈາກ UXO. ເຖິງວ່າຈະມີເອກະສານທີ່ລະບຸເຖິງພື້ນທີ່ທີ່ມີລະເບີດຝັງດິນ, ແຕ່ພື້ນທີ່ທີ່ໄດ້ຮັບຜົນກະທົບຈາກສົງຄາມ ອາດມີການປົນເປື້ອນຈາກ UXO, ຍົກເວັ້ນແຕ່ວ່າມີຫຼັກຖານທີ່ຂັດຄ້ານ.
- **ຄວາມສາມາດໃນການດໍາເນີນໂຄງການເງິນສົດ**: ປະຈຸບັນ ຊຸມຊົນມະນຸດສະທໍາມີຄວາມສາມາດທີ່ຈໍາກັດ ໃນການດໍາເນີນໂຄງການເງິນສົດຂະ ໜາດໃຫຍ່. ການຄຸ້ມຄອງປົກປ້ອງທາງສັງຄົມໃນປະເທດທີ່ມີລະດັບຕໍ່າ, ເຊິ່ງລວມທັງພະນັກງານລັດສ່ວນໃຫຍ່, ເຊິ່ງໜ້ອຍກວ່າເຄິ່ງໜຶ່ງຂອງພະ ນັກງານທັງໝົດໃນວິສາຫະກິດໃນລະບົບ ແລະ 24,000 ຄົນ ແມ່ນປະກອບອາຊີບອິດສະຫຼະ. ແຮງງານລາວສ່ວນໃຫຍ່ ຢູ່ໃນຂະແ

ໜຸງການນອກລະບົບ ແລະ ຂາດການຄຸ້ມຄອງທາງສັງຄົມຂັ້ນພື້ນຖານ[1]. ສິ່ງນີ້ໝາຍຄວາມວ່າ ຄວາມສາມາດທີ່ມີຈຳກັດໃນການຈັດຕັ້ງປະຕິບັດໂຄງການເງິນສົດ ແລະ ສະພາບແວດລ້ອມການດຳເນີນງານທີ່ບໍ່ເອື້ອອຳນວຍ, ໂດຍຂາດກົນໄກ ແລະ ລະບົບທີ່ມີຢູ່ ເພື່ອຈັດສິ່ງເງິນສົດ, ຈະເຮັດໃຫ້ເກີດຄວາມຫຍຸ້ງຍາກຫຼາຍໃນການດຳເນີນການຕາມແຜນການເງິນສົດໂດຍທັນທີ. ສິ່ງນີ້ຈຶ່ງຈຳເປັນຈະຕ້ອງໄດ້ມີການຮ່ວມມືໃຫ້ຫຼາຍຂຶ້ນກັບລັດຖະ ບານໃນໄລຍະກ່ອນ ແລະ ຫຼັງວິກິດການ, ແລະ ຕ້ອງໃຫ້ຊຸມຊົນມີສ່ວນຮ່ວມໃນການພິຈາລະນາວ່າ ຄວນໃຫ້ຄວາມຊ່ວຍເຫຼືອແນວໃດ ບໍ່ວ່າຈະເປັນເງິນສົດ, ສິ່ງຂອງ ຫຼື ທັງສອງຢ່າງ.

## ປັດໃຈທີ່ກະຕຸກຊຸກຍູ້ (Triggers)

ຈຸດປະສົງຂອງແຜນການນີ້ ແມ່ນເພື່ອປະກອບສ່ວນເຂົ້າໃນພາລະບົດບາດຂອງລັດຖະບານ ໃນຖານະຜູ້ມີບົດບາດຫຼັກໂດຍລວມໃນການຮັບມືກັບເຫດການສຸກເສີນໃນ ສປປ ລາວ. ໃນກໍລະນີທີ່ເກີດໄພພິບັດ, ການຕັດສິນໃຈທີ່ຈະກະຕຸກຊຸກຍູ້ ແລະ ລິເລີ່ມການນຳໃຊ້ແຜນການສຸກເສີນລະຫວ່າງອົງການ (IACP) ນີ້ ຕ້ອງມີການປຶກສາຫາລືຢ່າງໃກ້ຊິດກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ການຕັດສິນໃຈໃດກໍຕາມ ເພື່ອກະຕຸກຊຸກຍູ້ໃຫ້ເກີດແຜນການນີ້ ຕ້ອງໄດ້ມີການພິຈາລະນາເຖິງຄວາມສຳຄັນຂອງ ສປປ ລາວ ໃນຖານະທີ່ເປັນໜ່ວຍງານຫຼັກໃນການຮັບມື; ແຜນການນີ້ ບໍ່ຄວນຈະຖືກເບິ່ງວ່າເປັນ ແຜນການທົດແທນການຊ່ວຍເຫຼືອຂອງລັດຖະບານ ແຕ່ເປັນການສະໜັບສະໜູນ ແລະ ປະກອບສ່ວນໃນການເສີມຂະຫຍາຍຄວາມພະຍາຍາມຂອງລັດ.

ແທນທີ່ຈະນຳໃຊ້ມາດຕະການກະຕຸກຊຸກຍູ້ ໂດຍອີງໃສ່ກໍລະນີທີ່ໄດ້ຮັບຜົນກະທົບ, ແຜນການນີ້ ຈະດຳເນີນຂຶ້ນພາຍຫຼັງມີການປຶກສາຫາລືຮ່ວມກັບ MoLSW. ວິທີການນີ້ຈະຊ່ວຍໃຫ້ UNCT ສາມາດປະຕິບັດແຜນການນີ້ໃນລັກສະນະທີ່ສາມາດດັດປັບໄດ້ ແລະ ດ້ວຍວິທີການດັ່ງກ່າວນີ້ກໍຈະສາມາດໃຫ້ການສະໜັບສະໜູນລັດຖະບານໄດ້ດີທີ່ສຸດ. ແຜນການນີ້ສາມາດຈັດຕັ້ງປະຕິບັດໄດ້ຢູ່ໃນແຕ່ລະເມືອງ ເພື່ອຮັບມືກັບໄພນ້ຳຖ້ວມໃນທ້ອງຖິ່ນ ເພື່ອເພີ່ມການຮັບມືຂອງລັດຖະບານ ຫຼື ໃນກໍລະນີທີ່ເກີດໄພນ້ຳຖ້ວມຂະໜາດໃຫຍ່ໃນຫຼາຍເມືອງ ເຊິ່ງເກີນຄວາມສາມາດໃນການຮັບມືຂອງລັດຖະບານ.

UNCT ແລະ Clusters ໂດຍຮ່ວມກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈະດຳເນີນການປະເມີນຂໍ້ມູນກ່ຽວກັບປະລິມານຝົນຕົກ ແລະ ຂໍ້ມູນການຕິດຕາມແມ່ນ້ຳຈາກ ກົມອຸຕຸນິຍົມ ແລະ ອຸທົກກະສາດ ໃນຕະຫຼອດໄລຍະລະດູຝົນ. ການນຳໃຊ້ຂໍ້ມູນການແຈ້ງເຕືອນໄພລ່ວງໜ້າ ຈະຊ່ວຍໃຫ້ສາມາດເລີ່ມແຜນການນີ້ໄດ້ກ່ອນທີ່ຈະເກີດເຫດການນ້ຳຖ້ວມເພື່ອວາງມາດຕະການໃນການກຽມພ້ອມ.

[1] ອົງການແຮງງານສາກົນ, ສະມາຄົມປະກັນສັງຄົມສາກົນ (ISSA) ຂໍ້ມູນປະເທດ

# ກຳນົດເວລາ ແລະ ມາດຕະຖານການດຳເນີນງານ (SOPs)

## ໄພພິບັດຂະໜາດໃຫຍ່ (ລະດັບ 3)

| | ໄລຍະການແຈ້ງເຕືອນໄພລ່ວງໜ້າ (- 72 ຊົ່ວໂມງ) | |
|---|---|---|
| | ຕິດຕາມລະບົບການແຈ້ງເຕືອນໄພທາງອຸຕຸນິຍົມ ແລະ ພາຍຸ ກ່ຽວກັບການກໍ່ຕົວ ແລະ ການເຄື່ອນທີ່ຂອງພະຍຸທີ່ກຳລັງຈະເຂົ້າມາ ແລະ ແບ່ງປັນຂໍ້ມູນກ່ຽວກັບຜົນກະທົບທີ່ອາດຈະເກີດຂຶ້ນ. | DMH)/MoNRE<br>DSW/MoLSW |
| | ແຈ້ງເຕືອນໄປຍັງ UNCT ແລະ ຜູ້ນຳກຸ່ມ | ຫ້ອງການຜູ້ປະສານງານສະຫະປະຊາຊາດ (UNRCO) |
| | ແຈ້ງເຕືອນໄປຍັງ ຫ້ອງການປະສານງານດ້ານມະນຸດສະທຳຂອງສະຫະປະຊາຊາດ (OCHA) - ຫ້ອງການພາກພື້ນອາຊີ ແລະປາຊີຟິກ (ROAP) ສຳລັບການຊ່ວຍເຫຼືອທີ່ຈຳເປັນທີ່ເປັນໄປໄດ້. ຕົວຢ່າງ: ການປະເມີນຮ່ວມກັນ ແລະ ການກວດຫາເຫດການຮ່ວມກັນ (JADE), ການຊ່ວຍ ເຫຼືອດ້ານການລະດົມກຳລັງຄືນ, ການປະເມີນ ການປະສານງານໄພພິບັດແຫ່ງສະຫະປະຊາຊາດ ແລະ (UNDAC) ນຳໃຊ້ | UNRCO/ OCHA-ROAP |

| | | |
|---|---|---|
| | ຈັດປະຊຸມ UNCT ເພື່ອ: 1. ປະເມີນຄວາມສ່ຽງ; 2. ທົບທວນຄືນການວາງແຜນສຸກເສີນ ແລະ ສະຖານະການກຽມພ້ອມໃນປະຈຸບັນ; 3. ປຶກສາຫາລືການປັບປຸງທີ່ຈຳເປັນ ແລະ ມອບໜ້າວຽກໃຫ້ຕາມແຜນການທີ່ຈຳເປັນ; 4. ຕິດຕໍ່ສື່ສານກັບປະຊາຊົນທີ່ອາດຈະໄດ້ຮັບຜົນກະທົບ, ພະນັກງານ ແລະ ກຸ່ມທີ່ກ່ຽວຂ້ອງອື່ນໆ | UNRCO |

| | ໄລຍະການຮັບມື (24-72 ຊົ່ວໂມງ) | |
|---|---|---|
| | ຕິດຕໍ່ໄປຍັງ ລັດຖະບານ, ໂດຍຜ່ານ MoLSW, ເພື່ອ:<br>• ທົບທວນຄວາມອາດສາມາດຂອງປະເທດ ເພື່ອຮັບມືກັບເຫດການສຸກເສີນ.<br>• ຊີ້ແຈງຈຸດປະສົງໃນການປະກາດສະຖານະການສຸກເສີນ.<br>• ຊີ້ແຈງເຈດຕະນາໃນການຮ້ອງຂໍ, ຍິນດີຮັບ ຫຼື ປະຕິເສດ ການຊ່ວຍເຫຼືອລະຫວ່າງປະເທດ. | UNRCO |
| | ຂໍແບບຈຳລອງຜົນກະທົບຂອງໄພພິບັດ ຈາກ OCHA-ROAP. | UNRCO |
| | **ປະກາດສະພາບການສຸກເສີນ, ແລະ ຮ້ອງຂໍການຊ່ວຍເຫຼືອ (ຫຼື ຍອມຮັບ) ໂດຍລັດຖະບານ.** | **ລັດຖະບານ** |
| | ອີງຕາມຄວາມສາມາດຂອງລັດຖະບານ ແລະ ຊັບພະຍາກອນພາຍໃນປະເທດຂອງຊຸມຊົນມະນຸດສະທຳ, ປຶກສາຫາລື ແລະ ຕົກລົງຮ່ວມກັບ OCHA-ROAP ກ່ຽວກັບການລະດົມການຊ່ວຍເຫຼືອ, ບໍ່ວ່າຈະເປັນການລະດົມກຳລັງທາງກາຍະພາບຢ່າງໃດໜຶ່ງ ຫຼື ທັງສອງຢ່າງ (ເຊັ່ນ: ROAP, UNDAC) ຫຼື ຜ່ານທີມງານ mirror ໃນບາງກອກ.<br><br>ໃນກໍລະນີຂອງການຂໍກຳລັງທາງກາຍະພາບ, ໃຫ້ດຳເນີນການຂໍວີຊາເຂົ້າຈາກລັດຖະບານ ໃຫ້ກັບພະນັກງານ/ຜູ້ຊ່ຽວຊານຂອງພາກພື້ນ ແລະ ສາກົນທີ່ກຳລັງຈະເຂົ້າມາ, ທີມງານ UNDAC, ຖ້າຫາກຈຳເປັນ ແລະ ຂໍໃຫ້ມີການເລັ່ງລັດພິທີການທາງດ້ານພາສີ ແລະ ການຍົກເວັ້ນພາສີ ສຳລັບອຸປະກອນນຳເຂົ້າ ທີ່ມາພ້ອມກັບທີມງານ UNDAC. | UNRC / OCHA-ROAP |
| | ອຳນວຍຄວາມສະດວກໃຫ້ແກ່ກອງປະຊຸມ UNCT:<br>1. ໃຫ້ແຈ້ງສະຖານະການລ່າສຸດ.<br>2. ປຶກສາຫາລືກ່ຽວກັບການຮ້ອງຂໍຕ່າງໆຂອງລັດຖະບານ.<br>3. ຕົກລົງກ່ຽວກັບຍຸດທະສາດການຮັບມື, ເຊິ່ງລວມທັງ ການມີສ່ວນຮ່ວມໃນການປະເມີນຄວາມຕ້ອງການ, ການລະດົມຊັບພະຍາກອນ (ແຜນການຕອບສະໜອງ, ກອງທຶນການຮັບມືເຫດສຸກເສີນຂັ້ນສູນກາງ (CERF), ເງິນຊ່ວຍເຫຼືອສຸກເສີນ (ECG) ແລະ ຂໍ້ຄວາມທີ່ສຳຄັນ.<br>4. ຕົກລົງກ່ຽວກັບຄວາມຖີ່ຂອງກອງປະຊຸມ UNCT/ກຸ່ມປະສານງານລະຫວ່າງເຂດ (ICCG) (ປະຈຳວັນ, ອາທິດ, ແລະ ອື່ນໆ). | UNRCO |
| | ພາຍໃຕ້ການນຳພາຂອງລັດຖະບານ, ຊຸມຊົນມະນຸດສະທຳ ໄດ້ມີການດຳເນີນງານ ຫຼື ເຂົ້າຮ່ວມໃນການປະເມີນຄວາມຕ້ອງການແບບຮີບດ່ວນ (RNA). | UNCT, Clusters |
| | ອອກແຈ້ງການ ກ່ຽວກັບສະຖານະການລ່າສຸດ ຢ່າງເປັນປົກກະຕິ (ຄວາມຖີ່ທີ່ຈະຕ້ອງໄດ້ຕົກລົງກັນໃນ UNCT) | UNRCO/UNCG |

| ໄລຍະການຮັບມືພາຍຫຼັງການໃຫ້ຄວາມຊ່ວຍເຫຼືອດ້ານມະນຸດສະທຳ (ຫຼັງຈາກ **3-6** ເດືອນ) - ໃນກໍລະນີທີ່ມີການເປີດການຮ້ອງຂໍຢ່າງເຕັມທີ່ | |
|---|---|
| ການທົບທວນຄືນພາຍຫຼັງການດຳເນີນການ (AAR) | UNRCO, Clusters |
| ຮັບປະກັນ (ຕາມຄວາມເໝາະສົມ) ໃຫ້ລັດຖະບານ ແລະ/ຫຼື UNCT ມີການສື່ສານຢ່າງຕໍ່ເນື່ອງ ກັບປະຊາກອນ, ພະນັກງານ ແລະ ກຸ່ມທີ່ກ່ຽວຂ້ອງອື່ນໆ, ດ້ວຍການແຈ້ງເຕືອນໄພ, ຂໍ້ມູນ ຫຼື ຄຳແນະນຳທີ່ກ່ຽວຂ້ອງຕ່າງໆ. | |

| ໄລຍະການຮັບມື (**1-2** ອາທິດ) | |
|---|---|
| ຮັບປະກັນໃຫ້ການປະເມີນຄວາມຕ້ອງການແບບຮີບດ່ວນທີ່ມີຫຼາຍກຸ່ມ/ຂັ້ນຕົ້ນ ຕາມການຕົກລົງກັບລັດຖະບານ. ໂດຍການປຶກສາຫາລືຮ່ວມກັບ UNCT, ໃຫ້ນຳໃຊ້ໝາກຜົນ ເພື່ອທົບທວນແຜນການຮັບມືດ້ານມະນຸດສະທຳ (ລວມທັງຂໍ້ລິເລີ່ມການຟື້ນຟູໃນໄລຍະເລີ່ມຕົ້ນ). | UNRCO,<br>UNCT, Clusters, OCHA-ROAP, ເຄືອຂ່າຍການຄຸ້ມຄອງຂໍ້ມູນຂ່າວສານ(IMN)[2] |
| ຮ່າງແຜນການຮັບມື ແລະ ຕົກລົງເຫັນດີກ່ຽວກັບຂອບວຽກການຕິດຕາມ ແລະການປະເມີນຜົນ. | UNRCO, UNCT, OCHA-ROAP (ຖ້າຈຳເປັນ) |
| ຮ່າງບົດສະເໜີໂຄງການສຳລັບ CERF, ECG ແລະ ອື່ນໆ. | UNCT, Clusters |
| ປະຊຸມກັບຜູ້ໃຫ້ທຶນ ແລະ ແບ່ງປັນແຜນການຮັບມື ແລະ ການປະເມີນຄວາມຕ້ອງການ, ຕາມຄວາມ ເ ໝາະສົມ, ເພື່ອເພີ່ມຄວາມເຂົ້າໃຈຂອງເຂົາເຈົ້າກ່ຽວກັບບູລິມະສິດ ແລະ ຄວາມຕ້ອງ ການດ້ານເງິນທຶນ. ສະໜັບສະໜູນຜູ້ໃຫ້ທຶນ ເພື່ອຈັດສັນເງິນທຶນໃຫ້ກັບຂົງເຂດບຸລິມະສິດ ບູລິມະສິດການຮັບມື ເພື່ອການຮ່ວມມືທີ່ມີປະສິດທິຜົນ. | UNRCO, UNCT |
| ສືບຕໍ່ການສະໜອງຂໍ້ມູນລ່າສຸດໃຫ້ກັບຜູ້ໃຫ້ທຶນ ແລະ ຈັດກອງປະຊຸມຮ່ວມກັບຜູ້ໃຫ້ທຶນ, ຕາມຄວາມຈຳເປັນ. | UNRCO, UNCT |
| ຮັບປະກັນ (ຕາມຄວາມເໝາະສົມ) ໃຫ້ມີການສື່ສານຢ່າງຕໍ່ເນື່ອງ ຈາກລັດຖະບານ ແລະ/ຫຼື UNCT ໄປຍັງ ປະຊາກອນ, ພະນັກງານ ແລະ ກຸ່ມທີ່ກ່ຽວຂ້ອງອື່ນໆ, ດ້ວຍການແຈ້ງເຕືອນໄພ, ຂໍ້ມູນ ຫຼື ຄຳແນະນຳທີ່ກ່ຽວຂ້ອງ. | UNRCO/UNCG |

[2] ເພື່ອເປີດການນຳໃຊ້, ເມື່ອ IACP ໄດ້ຮັບແຈ້ງ.


24 ຊມ ຫາ 48 ຊມ
1 ອາທິດ
2 ອາທິດ
4 ອາທິດ
5 ອາທິດ
ແຈ້ງການ ສະຖານະການ ໄພພິບັດ
ກອງທຶນຮັບມືເຫດສຸກເສີນຂັ້ນສູນກາງ (CERF)/ທຶນຊ່ວຍເຫຼືອເງິນສົດ (ຍຸດທະສາດການ
ການຮ່ວມປະເມີນຄວາມຕ້ອງການຮີບດ່ວນເບື້ອງຕົ້ນ
ການປະເມີນກຸ່ມແບບລົງເລິກລາຍລະອຽດ
ການປະເມີນຄວາມຕ້ອງການຫຼັງໄພພິບັດ (PDNA)
ແຈ້ງຂ່າວ
ຍຸດທະສາດການຮັບມືເບື້ອງຕົ້ນ/ແຜນການຮັບມື
ກະດານຂ່າວດ້ານມະນຸດສະທຳ
ສະຖານະການນ້ຳຖ້ວມກະທັນຫັນລ່າສຸດ
ຮຽກປະຊຸມ ແລະ ແຈ້ງໂດຍຫຍໍ້ໃຫ້ແກ່ຄູ່ຮ່ວມງານ

# ຈຸດປະສົງ

ເປົ້າໝາຍລວມຂອງ IACP ແມ່ນເພື່ອສະໜັບສະໜູນລັດຖະບານໃນການນໍາພາ ດ້ານການຮັບມືຢ່າງມີປະສິດທິຜົນ, ທັນສະພາບການ ແລະ ມີການປະສານງານກັນເປັນຢ່າງດີ ເຊິ່ງຈະຊ່ວຍຫຼຸດຜ່ອນຜົນກະທົບຈາກໄພນໍ້າຖ້ວມໃນລະດູມໍລະສຸມໃນຊຸມຊົນທີ່ໄດ້ຮັບຜົນກະທົບ. ຈຸດປະສົງນີ້ຈະບັນລຸໄດ້ໂດຍຜ່ານກົນໄກການປະສານງານການຮັບມືທີ່ຈະແຈ້ງ ແລະ ມີປະສິດທິຜົນ ແລະ ຜ່ານຍຸດທະສາດການເຊື່ອມໂຍງດ້ານພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ກໍານົດໄວ້ຢ່າງຈະແຈ້ງຂອງບັນດາຄູ່ຮ່ວມງານແຫ່ງຊາດ ແລະ ສາກົນທີ່ກ່ຽວຂ້ອງ. ໂດຍສະເພາະຢ່າງຍິ່ງ, ຊຸມຊົນມະນຸດສະທໍາມີເປົ້າໝາຍທີ່ຈະບັນລຸ ດັ່ງຕໍ່ນີ້:

1. **ສະໜອງການຊ່ວຍເຫຼືອດ້ານມະນຸດສະທໍາທີ່ສໍາຄັນ ແລະ ມີຄວາມປອດໄພຕໍ່ຊີວິດ ບົນພື້ນຖານຫຼັກການ "ບໍ່ປ່ອຍປະຜູ້ໃດໄວ້ເບື້ອງຫຼັງ (LNOB)" ແລະ ເນັ້ນໃສ່ຜູ້ມີຄວາມບອບບາງທີ່ສຸດ ເຊັ່ນ: ແມ່ຍິງ, ເດັກ ນ້ອຍ ແລະ ຜູ້ສູງອາຍຸ ລວມທັງຄົນພິການ ແລະ ຜູ້ຕ້ອງການຄວາມຊ່ວຍເຫຼືອພິເສດ.**

2. **ເສີມສ້າງກົນໄກການປະສານງານ ແລະ ຄວາມສາມາດໃນການຄຸ້ມຄອງຂໍ້ມູນຂ່າວສານສໍາລັບການປະເມີນແບບຮີບດ່ວນ ແລະ ການວິເຄາະສະ ຖານະການທົ່ວໄປ ເພື່ອແຈ້ງໄປຍັງຜູ້ຕອບສະໜອງເປົ້າໝາຍ, ໂດຍສຸມໃສ່ຜູ້ມີຄວາມບອບບາງທີ່ສຸດ.**

3. **ຮັບປະກັນວ່າການສະໜັບສະໜູນທີ່ມອບໃຫ້ກັບຊຸມຊົນທີ່ໄດ້ຮັບຜົນກະທົບນັ້ນ ໄດ້ຮັບການປົກປ້ອງ ແລະ ມີຄວາມສະເໝີພາບໃນການເຂົ້າເຖິງການຊ່ວຍເຫຼືອ ແລະ ການບໍລິການ ຕາມຫຼັກການມະນຸດສະທໍາ ແລະ ການປະຕິບັດທີ່**

**ດີ, ໂດຍເສີມສ້າງຄວາມສາມາດໃນການທົນທານຂອງຊຸມຊົນ ແລະ ຊ່ວຍໃຫ້ເຂົາເຈົ້າສາມາດຟື້ນຟູໄດ້ທັນເວລາ.**

# ການພິຈາລະນາຕາມຂົງເຂດທີ່ສຳຄັນ

ຈາກການກຳນົດຄວາມຕ້ອງການ ເພື່ອແຈ້ງໃຫ້ຊາບເຖິງການສ້າງແຜນງານດ້ານມະນຸດສະທຳກ່ຽວກັບຜົນກະທົບຈາກໄພນ້ຳຖ້ວມທີ່ເກີດຈາກລົມມໍລະສຸມ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາຫຼັງຈາກນັ້ນ, ຊຸມຊົນດ້ານມະນຸດສະທຳ ໃຫ້ຄຳໝັ້ນສັນຍາທີ່ຈະຮັກສາ ຈຸດສຸມ ແລະ ຫຼັກການສຳຄັນ. ສິ່ງເຫຼົ່ານີ້ແມ່ນ ຄວາມຮັບຜິດຊອບຕໍ່ຜູ້ໄດ້ຮັບຜົນກະທົບ (AAP), ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA), ບົດບາດຍິງຊາຍ, ຄົນພິການ (PWDs) ແລະ ການປົກປ້ອງ. ໂດຍອີງຕາມຄວາມສາມາດໃນການຈັດຕັ້ງປະຕິບັດ ແລະ ສະພາບແວດລ້ອມການດຳເນີນງານໃນປັດຈຸບັນ, ການຊ່ວຍເຫຼືອສ່ວນໃຫຍ່ຈະສະໜອງໃນລັກສະນະເປັນອຸປະກອນ. ແຕ່ເຖິງຢ່າງໃດກໍຕາມ, ກຸ່ມຕ່າງໆໄດ້ໃຫ້ຄຳໝັ້ນສັນຍາທີ່ຈະປະເມີນຄວາມຕ້ອງການຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ແລະ ຄວາມເປັນໄປໄດ້ຂອງການຊ່ວຍເຫຼືອທາງການເງິນ ເຊັ່ນ: ການທຳໜ້າທີ່ຂອງຕະຫຼາດ ແລະ ຄວາມພ້ອມຂອງສິນຄ້າທີ່ຈຳເປັນຢູ່ໃນທ້ອງຖິ່ນ. ຖ້າຫາກສະຖານະການເອື້ອອຳນວຍກ່ຽວກັບຄວາມເປັນໄປໄດ້ຂອງການຊ່ວຍ ເຫຼືອທາງການເງິນ, ຈະມີການການຈັດຕັ້ງຮູບແບບຈຳລອງຂອງການປະສານງານດ້ານການເງິນທີ່ສອດຄ້ອງກັນ ເພື່ອຮັບປະກັນການແບ່ງປັນຂໍ້ມູນ, ການປະກອບສ່ວນ, ແລະ ການຮ່ວມມືລະຫວ່າງກຸ່ມຕ່າງໆ.

ໂດຍເຫັນໄດ້ເຖິງຄວາມສຳຄັນຂອງ AAP, ກຸ່ມດັ່ງກ່າວ ຈະຮ່ວມມືກັບຊຸມຊົນທີ່ໄດ້ຮັບກະທົບ ເພື່ອກຳນົດຄວາມສາມາດທີ່ເຂົາເຈົ້າມີ, ຄວາມຕ້ອງການດ້ານມະນຸດສະທຳເນື່ອງຈາກໄພນ້ຳຖ້ວມ, ວິທີການທີ່ເຂົາເຈົ້າຕ້ອງການໃຫ້ຊ່ວຍ ແລະ ຄວາມຕ້ອງການດ້ານຂໍ້ມູນຂອງພວກເຂົາ ເພື່ອຄຸ້ມຄອງການຟື້ນຟູ ແລະ ຄວາມທົນທານຂອງເຂົາເຈົ້າເອງ. ຕົວຢ່າງເຊັ່ນ, ກຸ່ມ WASH ຈະມີສ່ວນຮ່ວມກັບສະມາຊິກຊຸມຊົນ ເພື່ອເກັບກຳຂໍ້ມູນຜົນກະທົບ, ຮັບໂຮມຄວາມຄິດເຫັນເພື່ອການອອກແບບການຮັບມື, ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ແລະ ການປະເມີນຜົນ (M&E). ແມ່ຍິງ ແລະ ຜູ້ຊາຍຈະມີສ່ວນຮ່ວມໃນການກຳນົດສະຖານທີ່ທີ່ປອດໄພ ແລະ ສາມາດເຂົ້າເຖິງ ແຫຼ່ງນ້ຳ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ.

ໂດຍການກຳນົດເອົາຜູ້ໄດ້ຮັບຜົນກະທົບເປັນຈຸດໃຈກາງຂອງການຮັບມື, UNCT ໃຫ້ຄຳໝັ້ນສັນຍາທີ່ຈະ "ບໍ່ຍອມຮັບ" ຕໍ່ກໍລະນີໃດໆຂອງການຂູດຮີດ ແລະ ການລ່ວງລະເມີດທາງເພດ (SEA) ທີ່ກະທຳໂດຍພະນັກງານຂອງ UN ແລະ ຄູ່ຮ່ວມງານ. ຕົວຢ່າງ, ຂະແໜງປົກປ້ອງ ມີຄວາມມຸ້ງໝາຍໃນການສະໜອງການຝຶກອົບຮົມ ແລະ ການສະໜັບສະໜູນດ້ານວິຊາການແກ່ ຄູ່ຮ່ວມຈັດຕັ້ງປະຕິບັດກ່ຽວກັບການຊ່ວຍເຫຼືອທີ່ກ່ຽວຂ້ອງກັບ PSEA (ເຊັ່ນ: ສະຫະພັນແມ່ຍິງລາວ). ຈະມີການເປີດກອງປະຊຸມປູກຈິດສຳນຶກໃນລະດັບຊຸມຊົນ ເພື່ອຮັບປະກັນໃຫ້ຜູ້ໄດ້ຮັບຜົນກະທົບ ຮັບຮູ້ສິດຂອງຕົນໃນການໄດ້ຮັບຄວາມຊ່ວຍເຫຼືອດ້ານມະນຸດສະທຳໂດຍທີ່ບໍ່ເສຍຄ່າໃຊ້ຈ່າຍໃດໆ ແລະ ການບໍລິການຕ່າງໆ ເຊັ່ນດຽວກັບ ການຮັບຮູ້ວ່າຈະຕ້ອງລາຍງານໃຫ້ຜູ້ໃດ ໃນກໍລະນີທີ່ພະນັກງານ ແລະ ຄູ່ຮ່ວມງານທີ່ການໃຫ້ຄວາມຊ່ວຍເຫຼືອດ້ານມະນຸດສະທຳນັ້ນ ປະຕິບັດກັບພວກເຂົາຢ່າງບໍ່ຖືກ ຕ້ອງ ແລະ ຖືກເອົາປຽບ ຫຼື ຖືກລະເມີດຕ່າງໆ ບໍ່ວ່າຈະເປັນທາງເພດ ຫຼື ທາງອື່ນ. ໂດຍຜ່ານກົນໄກຂອງ AAAP, ການລາຍງານກ່ຽວກັບ SEA ແລະ ຊ່ອງທາງກ່ຽວກັບການສິ່ງຕໍ່ ຈະຖືກສ້າງຕັ້ງຂຶ້ນພາຍໃນລະບົບຊຸມຊົນມະນຸດສະທຳ.

ໄພພິບັດສິ່ງຜົນກະທົບທີ່ແຕກຕ່າງກັນຕໍ່ກັບພາກສ່ວນຕ່າງໆຂອງສັງຄົມ. ສິ່ງເຫຼົ່ານີ້ເຮັດໃຫ້ກຸ່ມຜູ້ດ້ອຍໂອກາດ ເຊັ່ນ ແມ່ຍິງ, ເດັກນ້ອຍ, ຜູ້ພິການ, ຜູ້ສູງອາຍຸ ແລະ ກຸ່ມອື່ນໆທີ່ມີຄວາມຕ້ອງການພິເສດ ໄດ້ຮັບຜົນກະທົບທີ່ຮ້າຍແຮງຂຶ້ນ ແລະ ອາດບໍ່ສາມາດເຂົ້າເຖິງການຊ່ວຍເຫຼືອ ແລະ ການບໍລິການຕ່າງໆໄດ້. ດັ່ງນັ້ນ, ການພິຈາລະນາດ້ານບົດບາດຍິງຊາຍ, ການລວມເອົາທຸກກຸ່ມ ແລະ ການປົກປ້ອງ ຈະຖືກລວມເຂົ້າໃນການວິເຄາະກ່ອນ ແລະ ຫຼັງວິກິດການ ເພື່ອແຈ້ງກ່ຽວກັບການຊ່ວຍເຫຼືອທາງດ້ານມະນຸດສະທຳຕ່າງໆ. ຂໍ້ມູນແຍກຕາມ ເພດ, ອາຍຸ, ຄວາມພິການ (SADDD) ຈະຖືກລວມເຂົ້າໃນເຄື່ອງມືການປະເມີນ ແລະ ຈະຖືກນຳເອົາມາວິເຄາະ.

ຄວາມສ່ຽງດ້ານການປົກປ້ອງ ຈະໄດ້ຮັບການລະບຸໄວ້ໃນສະຖານະການຕ່າງໆທີ່ແຕກຕ່າງກັນ, ທັງຢູ່ໃນ ສູນພັກພື້ນ, ຊຸມຊົນທີ່ເປັນເຈົ້າພາບ ແລະ ຊຸມຊົນທີ່ຖືກຜົນກະທົບ ເຊິ່ງຄອບຄົວທີ່ໄດ້ຮັບຜົນກະທົບໄດ້ພັກອາໄສຢູ່. ຕົວຢ່າງ, ໃນຂະແໜງຄ້ຳປະກັນສະບຽງອາຫານ ແລະ ກະສິກຳ (FSAC), ຈະມີການນຳໃຊ້ແບບຈຳລອງຜົນກະທົບຈາກໄພພິບັດສະເພາະ ເພື່ອເກັບກຳຂໍ້ມູນທີ່ມີການຈັດແບ່ງຕາມເພດ ແລະ ອາຍຸ, ແລະ ອັດຕາສ່ວນຄວາມພິການເປັນແຕ່ລະແຂວງ. ການປຶກສາຫາລືຂອງຊຸມຊົນຈະຖືກດຳເນີນຂຶ້ນ ເພື່ອກຳນົດຜົນກະທົບສະເພາະ ແລະ ຄວາມຕ້ອງການຂອງກຸ່ມຕ່າງໆ ແລະ ແຈ້ງແຜນການຮັບມືຂອງ FSAC ເພື່ອແກ້ໄຂຊ່ອງຫວ່າງດ້ານຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ ທີ່ມີຄວາມຮຸນແຮງຂຶ້ນ ຈາກໄພນ້ຳຖ້ວມໃນຊ່ວງລະດູມໍລະສຸມ. ອີງຕາມການປະເມີນຄວາມສ່ຽງໃນການປົກປ້ອງ, ຈະມີການກຳນົດມາດຕະການຫຼຸດຜ່ອນ ເພື່ອຄວາມປອດໄພ ແລະ ຄວາມໝັ້ນຄົງຂອງປະຊາກອນທີ່ມີຄວາມບອບບາງທີ່ສຸດ. ໃນການກຳນົດວິທີການຊ່ວຍເຫຼືອໃນໄລຍະທີ່ແຕກຕ່າງກັນຂອງການຊ່ວຍເຫຼືອ, ຈະມີການ

ພິຈາລະນາເຖິງຄວາມສາມາດຂອງກຸ່ມສະເພາະ ເຊັ່ນ: ຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ, ຄົວເຮືອນດຽວ ແລະ ກຸ່ມຄົນພິການ ເພື່ອຮັບປະກັນການເຂົ້າເຖິງ ແລະ ຄວາມສາມາດໃນການໄດ້ຮັບການຊ່ວຍເຫຼືອ ເຊັ່ນ: ຈຸດແຈກຢາຍ, ເງິນສົດສໍາລັບການເຮັດວຽກ, ແລະ ອື່ນໆ.

# ການກະກຽມດ້ານການປະສານງານ

## ການປະສານງານທີ່ມີຍຸດທະສາດ

### ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນສູນກາງ (CDMC)

ລັດຖະບານແຫ່ງ ສປປ ລາວ ປະສານງານວຽກງານກຽມພ້ອມຮັບມືກັບໄພພິບັດ ໂດຍຜ່ານຄະນະກໍາມະການຄຸ້ມຄອງໄພພິບັດແຫ່ງຊາດ (NDMC) ໂດຍການເປັນປະທານຂອງ ທ່ານຮອງນາຍົກລັດຖະມົນຕີ, ແລະ ພະແນກຄຸ້ມຄອງໄພພິບັດ ພາຍໃນ ກົມສະຫວັດດີການສັງຄົມ (DSW), ພາຍໃຕ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MLSW). ພະແນກຄຸ້ມຄອງໄພພິບັດ ຍັງເຮັດໜ້າທີ່ເປັນກອງເລຂາໃຫ້ກັບ ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນສູນກາງ (CDMC). ຄະນະກໍາມະການຄຸ້ມຄອງໄພພິບັດ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ລະດັບຊາດ, ຂັ້ນແຂວງ (PDMCs) ແລະ ຂັ້ນເມືອງ (DDMCs). ໜ່ວຍງານປ້ອງກັນໄພພິບັດຂັ້ນບ້ານ (VDPUs) ອາດຈະໄດ້ຮັບການຈັດຕັ້ງຂຶ້ນໃນລະດັບບ້ານ, ເຊິ່ງຈະມີພາລະບົດບາດໃນການຊ່ວຍເຫຼືອລັດຖະບານໃນການແຈ້ງເຕືອນໄພລ່ວງໜ້າ ແລະ ໃຫ້ການຊ່ວຍເຫຼືອ, ຈັດຕັ້ງການປະຕິບັດການປະເມີນ ແລະ ການຮັບມືໃນທັນທີ.

### ຄະນະປະຈໍາລະຫວ່າງອົງການ (IASC)

ຄະນະປະຈໍາລະຫວ່າງອົງການ (IASC) ແມ່ນກົນໄກສໍາລັບການປະສານງານໂດຍລວມ ຂອງການດໍາເນີນງານດ້ານມະນຸດສະທໍາຮ່ວມກັນ ລະຫວ່າງລັດຖະບານ ແລະ ຜູ້ຈັດຕັ້ງປະຕິບັດສາກົນປະຈໍາປະເທດ. IASC ຂອງລາວ ເປັນປະທານຮ່ວມໂດຍ ຫົວໜ້າກົມສະຫວັດດີການສັງຄົມ (DSW)/ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW), ແລະ ຜູ້ປະສານງານແຫ່ງສະຫະປະຊາຊາດ (UNRC). ໃນ ສປປ ລາວ, ສະມາຊິກ IASC ແມ່ນຂະຫຍາຍໄປຍັງ ອົງການສະຫະປະຊາຊາດ, ບັນດາກະຊວງທີ່ກ່ຽວຂ້ອງຂອງລັດຖະບານ, ແລະ ອົງການບໍ່ຂຶ້ນກັບລັດຖະບານສາກົນ (INGOs).

## ການປະສານງານດ້ານການດໍາເນີນງານ

### ຄະນະສະເພາະກິດເຫດສຸກເສີນ (ETF)

ຄະນະສະເພາະກິດເຫດສຸກເສີນ (ETF) ແມ່ນອົງການປະສານງານດ້ານວິຊາການ ເພື່ອການກຽມພ້ອມດ້ານໄພພິບັດ ແລະ ການຮັບມືລະຫວ່າງອົງການສະຫະປະຊາຊາດ, INGOs ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW). ETF ແມ່ນມີປະທານຮ່ວມໂດຍ ຫົວໜ້າອົງການ UN RCO ແລະ ຜູ້ຕາງໜ້າຈາກ MoLSW. ຄະນະດັ່ງກ່າວປະກອບດ້ວຍຜູ້ຕາງໜ້າຈາກອົງການ UNICEF, WHO, WFP, FAO, IOM, ແລະ UN-Habitat ເຊິ່ງຖືວ່າເປັນກຸ່ມຜູ້ນໍາຂອງ WASH, ສຸຂະພາບ ແລະ ໂພຊະນາການ, ອາຫານ ແລະ ທີ່ພັກອາໄສ/ສິ່ງຂອງທີ່ບໍ່ແມ່ນອາຫານ (NFIs), ຕາມລໍາດັບ. ຜູ້ຕາງໜ້າອົງການຂອງລັດຖະບານຈາກ ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາ ລະນະສຸກ ແລະ ກະຊວງການຕ່າງປະເທດ, ເຊັ່ນດຽວກັນກັບບັນດາອົງການສາກົນທີ່ບໍ່ຂຶ້ນກັບລັດຖະບານ ແລະ ແຫ່ງຊາດ (INNGOs) ແລະ ອົງ ການກາແດງລາວ, ເຊິ່ງເປັນສະມາຊິກຂອງ ETF.

ETF ມີ 2 ໜ້າທີ່ຮັບຜິດຊອບຕົ້ນຕໍ ຄື: (1) ຕິດຕາມ ແລະ ສື່ສານຂໍ້ມູນການແຈ້ງເຕືອນໄພລ່ວງໜ້າກ່ອນເກີດໄພພິບັດ, ໂດຍປະຕິບັດຕາມການແຈ້ງເຕືອນແຫ່ງຊາດຂອງລັດຖະບານ, ແລະ (2) ຮັບປະກັນໃຫ້ມີການຮັບມືທີ່ມີການດໍາເນີນງານຢ່າງຈະແຈ້ງໂດຍອີງໃສ່ຄວາມຕ້ອງການ ແລະ ແຜນການຮັບມືຂອງແຕ່ລະກຸ່ມ. ETF ມີບົດບາດໃນການປະສານງານລະຫວ່າງ ຜູ້ຈັດຕັ້ງປະຕິບັດທີ່ມີບົດບາດສໍາຄັນໃນການດໍາເນີນງານ ແລະ ດ້ານວິຊາການໃນການກະກຽມ ແລະ ການຮັບມືດ້ານໄພພິບັດ. ນອກຈາກນີ້ ຍັງໄດ້ຮັບມອບໝາຍໃຫ້ພັດທະນາໝາກຜົນການຮັບມືທີ່ສໍາຄັນ, ລວມທັງແຜນການຮັບມືທີ່ມີຍຸດທະສາດ, ບົດລາຍງານສະຖານະການ ແລະ ເອກະສານການສະໜອງທຶນ ເຊັ່ນດຽວກັນກັບການໃຫ້ຄໍາແນະນໍາດ້ານການດໍາເນີນງານ ແລະ ຂໍ້ກັງວົນຕ່າງໆ ໃຫ້ແກ່ຄະນະປະຈໍາລະຫວ່າງອົງການ (IASC). ການປະຕິບັດງານທາງດ້ານມະນຸດສະທໍາຢູ່ ສປປ ລາວ ແມ່ນສຸມໃສ່ 9 ກຸ່ມ. ທັນທີຫຼັງຈາກການເລີ່ມຕົ້ນຂອງການຮັບມືທາງໄພພິບັດ, ຈຸດສຸມຕົ້ນຕໍຈະເນັ້ນໃສ່ ຄວາມໝັ້ນຄົງດ້ານອາຫານ, ສຸຂະພາບ ແລະ ໂພຊະນາການ, WASHແລະທີ່ພັກອາໄສ/ສິ່ງຂອງທີ່ບໍ່ແມ່ນອາຫານ (NFI).

### ໂຄງຮ່າງການປະສານງານ

ລັດຖະບານ ແຫ່ງ ສປປ ລາວ ມີຄວາມຮັບຜິດຊອບໂດຍລວມໃນການນໍາພາການຮັບມືຕໍ່ເຫດສຸກເສີນ. ບັນດາອົງການຂອງສະຫະປະຊາຊາດ, ອົງການ INGO, ສະມາຄົມກາແດງ ແລະ ຄູ່ຮ່ວມມືພັດທະນາຕ່າງໆ ຈະສະໜັບສະໜູນໃຫ້ແກ່ການຮັບມືຂອງລັດຖະບານ ໂດຍສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງທັງລະດັບຊາດ ແລະ ແຂວງ. ອົງການຕ່າງໆຂອງ ສະຫະປະຊາຊາດ, ສະພາກາແດງລາວ, ແລະ ຄູ່ຮ່ວມພັດທະນາຕ່າງໆ ໄດ້ມີຂໍ້ຕົກລົງຖາວອນກັບລັດຖະບານ ທີ່ສາມາດດໍາເນີນກິດຈະກໍາດ້ານມະນຸດສະທໍາໃນກໍລະນີເກີດໄພພິບັດຂຶ້ນ. ຄຽງຄູ່ກັນນັ້ນ, ອົງການ INGO ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ຮ່ວມກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MLSW) ສໍາລັບກິດຈະກໍາການພັດທະນາ, ແລະ ຕ້ອງມີຂໍ້ຕົກລົງທີ່ແຍກຕ່າງຫາກ ທັງໃນລະດັບຊາດ ແລະ ແຂວງ ເພື່ອດໍາເນີນກິດຈະກໍາຮັບມືກັບເຫດສຸກເສີນ.

ການກະກຽມດ້ານການປະສານງານ ແລະ ການຄຸ້ມຄອງພາຍໃນລະບົບມະນຸດສະທໍາສາກົນ ອາດຈະແຕກຕ່າງກັນໄປຕາມຂະໜາດ ແລະ ຜົນກະທົບຈາກເຫດໄພພິບັດ ແລະ ຈະພິຈາລະນາຈາກການປະເມີນຂອງ UNRC ແລະ ຄູ່ຮ່ວມງານຂອງລັດຖະບານທີ່ກ່ຽວຂ້ອງ. ແຜນວາດຂ້າງລຸ່ມນີ້ ສະທ້ອນໃຫ້ເຫັນເຖິງການວາງແຜນການປະສານງານທີ່ໄດ້ມີການສະເໜີ ສໍາລັບ "ໄພພິບັດຂະໜາດໃຫຍ່ ເຊັ່ນ: ສະຖານະການໃນ ແຜນການສຸກເສີນລະຫວ່າງອົງການ (IACP) ນີ້.

ໃນກໍລະນີທີ່ເກີດໄພພິບັດຂະໜາດໃຫຍ່, ກຸ່ມທັງໝົດ 9 ກຸ່ມ ຈະເລີ່ມການດໍາເນີນງານ, ເຊັ່ນດຽວກັນກັບ ເຄືອຂ່າຍການຄຸ້ມຄອງຂໍ້ມູນ (IMN) ແລະ ເງິນຊ່ວຍເຫຼືອສຸກເ ກະຊວງ ກອບມີຈຸດປະສານງານທັງໝົດ 9 ກຸ່ມ, ເຊິ່ງມີຜູ້ຕາງໜ້າຈາກ IMN ແລະ ECG ແລະ ຫ້ອງການປະສານງານດ້ານມະນຸດສະທໍາຂອງສະຫະປະຊາຊາດ (OCHA), ໂດຍອີງຕາມຄວາມຈໍາເປັນ.

## ໂຄງຮ່າງການປະສານງານດ້ານມະນຸດສະທໍາ - ສປປ ລາວ



## ການປະເມີນຄວາມຕ້ອງການ

ເປັນທີ່ຮັບຮູ້ວ່າ ການປະເມີນແມ່ນມີຄວາມສຳຄັນໃນການກຳນົດຄວາມຕ້ອງການຂອງຜູ້ໄດ້ຮັບຜົນກະທົບ ເພື່ອກະກຽມການຊ່ວຍເຫຼືອດ້ານມະນຸດສະທຳທີ່ເໝາະສົມ. ເພື່ອດຳເນີນການປະເມີນນີ້, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW) ແລະ UNCT ຈະດຳເນີນການທົບທວນ ແລະ ປັບປຸງເຄື່ອງມືການປະເມີນແບບຮີບດ່ວນເບື້ອງຕົ້ນ (IRA) ທີ່ມີຢູ່ ດ້ວຍຂໍ້ກຳນົດ ແລະ ຂັ້ນຕອນທີ່ສອດຄ້ອງກັນ, ລວມທັງພື້ນທີ່ຮັບຜິດຊອບທີ່ຊັດເຈນທາງພູມີສາດ. ນອກນີ້, ປະຊາຄົມນາໆຊາດ ຍັງຈະສ້າງຂໍ້ກຳນົດສຳລັບການກຳນົດ ແລະ ກວດສອບຜູ້ໄດ້ຮັບຜົນປະໂຫຍດເພີ່ມຕື່ມ ໃນທົ່ວອົງການ ແລະ ຂະແໜງການ. IRA ຈະໃຫ້ຂໍ້ມູນກ່ຽວກັບການເສຍຊີວິດ ແລະ ຄວາມເສຍຫາຍເບື້ອງຕົ້ນ, ແລະ ລັດຖະບານ ພ້ອມດ້ວຍຊຸມຊົນມະນຸດສະທຳ ຈະລິເລີ່ມການດຳເນີນການໃນມື້ທຳອິດຂອງເຫດການໄພພິບັດ.

ເນື່ອງຈາກເປັນພື້ນຖານສຳລັບການວິເຄາະສະຖານະການເບື້ອງຕົ້ນ ເພື່ອແຈ້ງແຜນການຮັບມື, ການປະເມີນຜົນກະທົບຈາກການວິເຄາະຄວາມສ່ຽງຈາກໄພພິບັດຮ່ວມກັນ (JADE) ຈຶ່ງຈະຖືກນຳໄປໃຊ້. ໃນຖານະເປັນພື້ນທີ່ສຳລັບການປະສານງານ ແລະ ການສະໜັບສະໜູນດ້ານວິຊາການສຳລັບການຕິດຕາມສະຖານະການເພີ່ມເຕີມ ແລະ ການວິເຄາະ ແລະ ການຕິດຕາມການຮັບມື, ເຄືອຂ່າຍການຄຸ້ມຄອງຂໍ້ມູນຂ່າວສານ (IMN) ຈະຖືກເປີດໃຊ້ເມື່ອແຜນການສຸກເສີນລະຫວ່າງອົງການ (IACP) ໄດ້ຮັບການແຈ້ງ.

ຈາກການປະເມີນຜົນແບບຮີບດ່ວນໃນເບື້ອງຕົ້ນ, ການປະເມີນຜົນເພີ່ມເຕີມ ແລະ ການປະເມີນຜົນສະເພາະກຸ່ມ ຈະໄດ້ມີການຈັດຕັ້ງປະຕິບັດ. ຂໍ້ມູນຂ່າວສານນີ້ ຈະຖືກນຳໃຊ້ໂດຍກຸ່ມຕ່າງໆ ເພື່ອກຳນົດການຮັບມືຂອງຂະແໜງການ. ການສ້າງການປະເມີນແບບຮີບດ່ວນເບື້ອງຕົ້ນ (IRA), ກຸ່ມຕ່າງໆ ຈະປະສານງານກ່ຽວກັບການປະເມີນສ່ວນບຸກຄົນ ໂດຍຜ່ານກຸ່ມປະສານງານລະຫວ່າງເຂດ (ICCG).

**ການສຶກສາ:** ການນຳໃຊ້ແຜນການສຸກເສີນດ້ານການສຶກສາໃນປີ 2021 (Utilizing the Emergency Education Contingency Plan in 2021) ທີ່ໄດ້ພັດທະນາ ຮ່ວມກັບ ກະຊວງສຶກສາທິການ ແລະ ກິລາ (MoES), ກຸ່ມດັ່ງກ່າວຈະດຳເນີນການເກັບກຳຂໍ້ມູນກ່ຽວກັບຜົນກະທົບຈາກໄພພິບັດຕໍ່ກັບ ນັກຮຽນ, ຄູ-ອາຈານ, ຜູ້ບໍລິຫານ, ໂຮງຮຽນ ແລະ ຄອບຄົວ ເມື່ອມີການປະກາດເຫດສຸກເສີນແຫ່ງຊາດ. MoES ແລະ ຄູ່ຮ່ວມງານຈະຮັບຜິດຊອບໃນການຮີບໂຮມ ແລະ ວິເຄາະຂໍ້ມູນຜົນກະທົບຕໍ່ໂຮງຮຽນ, ສະຖານທີ່, ຈຳນວນນັກຮຽນ, ຄູສອນ/ຜູ້ບໍລິຫານ, ໂຮງຮຽນທີ່ອາດຖືກນຳໃຊ້ເປັນສະຖານທີ່ພັກພື້ນສຳລັບຜູ້ປະສົບໄພ, ໂດຍເນັ້ນໃສ່ການເກັບກຳ ແລະ ວິເຄາະຂໍ້ມູນທີ່ແຍກຕາມເພດ ແລະ ກຸ່ມທີ່ຖືກກີດກັນທາງສັງຄົມ ແລະ ຜົນກະທົບຈາກໄພພິບັດທີ່ພວກເຂົາໄດ້ຮັບ.

**ທີ່ພັກອາໄສ ແລະ ສິ່ງຂອງທີ່ບໍ່ແມ່ນອາຫານ (NFI):** ຈະມີການດຳເນີນການປະເມີນຄວາມຕ້ອງການແບບຮີບດ່ວນ ແລະ ການວິເຄາະຊ່ອງຫວ່າງ ເພື່ອກຳນົດຄວາມຕ້ອງການດ້ານຊຸດການຊ່ວຍເຫຼືອດ້ານທີ່ພັກອາໄສ ແລະ ຊຸດສ້ອມແປງທີ່ພັກອາໄສ ເພື່ອຊ່ວຍເຫຼືອຊີວິດແບບຮີບດ່ວນ. ກຸ່ມດັ່ງກ່າວຈະດຳເນີນການປະເມີນຕາມໜ້າທີ່ ແລະ ຄວາມອາດສາມາດຂອງສູນໂດຍລວມ ເພື່ອຮັບປະກັນວ່າໃນຂະນະທີ່ບັນດາຄອບຄົວທີ່ອາໄສໃນພື້ນທີ່ພັກພື້ນຊົ່ວຄາວ, ເຂົາເຈົ້າສາມາດນຳໃຊ້ພື້ນທີ່ໄດ້ຢ່າງພຽງພໍ ແລະ ມີຄວາມເປັນສ່ວນຕົວໃນລະດັບໜຶ່ງ. ເຮືອນຊານຂອງແຕ່ລະຄອບຄົວທີ່ຖືກເສຍຫາຍຈະໄດ້ຮັບການປະເມີນແຍກຕ່າງຫາກ ເພື່ອກຳນົດຄວາມຕ້ອງການໃນການຟື້ນຟູ ແລະ/ຫຼື ການກໍ່ສ້າງ ສຳລັບການຊ່ວຍເຫຼືອທີ່ເໝາະສົມ. ກຸ່ມດັ່ງກ່າວຈະຮ່ວມມືກັບກຸ່ມອື່ນໆທີ່ກ່ຽວຂ້ອງເຊັ່ນ: ກຸ່ມ WASH ສຳລັບສິ່ງອຳນວຍຄວາມສະດວກດ້ານນ້ຳສະອາດ ແລະ ສຸຂາພິບານ; ກຸ່ມປົກປ້ອງ ເພື່ອປ້ອງກັນການລະເມີດສິດທິມະນຸດຕ່າງໆ, ຄວາມເປັນສ່ວນຕົວ ແລະ ກໍລະນີຄວາມຮຸນແຮງທາງເພດ (GBV) ແລະ ກຸ່ມການຟື້ນຟູໃນໄລຍະຕົ້ນ ສຳລັບການກໍ່ສ້າງຕ່າງໆ ເຊັ່ນ: ໄຟຟ້າ ແລະ ການຟື້ນຟູໃນໄລຍະກາງ ຫາ ໄລຍະຍາວ ເພື່ອຮອງຮັບຜົນຕອບແທນ. ໃນກໍລະນີ ສິ່ງຂອງທີ່ບໍ່ແມ່ນອາຫານ (NFI), ຈະມີການດຳເນີນການປະເມີນຊ່ອງຫວ່າງຂຶ້ນ ເພື່ອກຳນົດຄວາມຕ້ອງການທຽບກັບຊັບພະຍາກອນທີ່ມີຢູ່ ເພື່ອໃຫ້ສາມາດລະດົມຊັບພະຍາກອນທີ່ເໝາະສົມໄດ້.

**ການຟື້ນຟູໃນໄລຍະເລີ່ມຕົ້ນ (ER):** ເນື່ອງຈາກ ER ມີຄວາມກ່ຽວຂ້ອງໃນທົ່ວທຸກກຸ່ມ, ດັ່ງນັ້ນ ໃນຊ່ວງທຳອິດຂອງການຮັບມື, ຈຶ່ງຈະມີການຈັດຕັ້ງປະຕິບັດການທົບທວນຄືນການປະເມີນສະເພາະຂອງກຸ່ມ ເພື່ອກຳນົດຄວາມຕ້ອງການສຳລັບການສະໜັບສະໜູນດ້ານການຟື້ນຟູ. ໂດຍສະເພາະ, ການປະເມີນຈະມີການຈັດຕັ້ງປະຕິບັດ, ໂດຍອີງຕາມຄວາມຈຳເປັນ, ເພື່ອກຳນົດຄວາມຕ້ອງການສຳລັບການຟື້ນຟູທີ່ພັກອາໄສ, ການຟື້ນຟູທາງດ້ານກະສິກຳ ແລະ ການດຳລົງຊີວິດ, ການຟື້ນຟູທາງດ້ານຊັບສິນຂອງຊຸມຊົນ, ແລະ ການຟື້ນຟູດ້ານພື້ນຖານໂຄງລ່າງ ໂດຍການຮ່ວມມືກັບກຸ່ມອື່ນໆ.

**ການຄໍ້າປະກັນສະບຽງອາຫານ ແລະ ກະສິກຳ (FSAC):** ກຸ່ມດັ່ງກ່າວຈະດຳເນີນການປະເມີນຄວາມຕ້ອງການຄວາມໝັ້ນຄົງດ້ານສະບຽງອາຫານສຸກເສີນ ເພື່ອແຈ້ງຂໍ້ມູນຄວາມຊ່ວຍເຫຼືອດ້ານສະບຽງອາຫານໂດຍກົງໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບ. ການປະເມີນຄວາມຕ້ອງການທີ່ກ່ຽວຂ້ອງກັບກະສິກຳ ຈະປະກອບມີ ການສູນເສຍຜົນຜະລິດກະສິກຳ, ການປະເມີນຄວາມປອດໄພຂອງເມັດພັນ, ການຈັດການທີ່ແຕກຕ່າງກັນ (VRA), ການວິເຄາະລະບົບຕ່ອງໂສ້ມູນຄ່າ, ຈຳນວນສັດລ້ຽງ, ຄວາມຕ້ອງການອາຫານສັດ ແລະ ພືດອາຫານສັດ ເຊັ່ນດຽວກັນກັບ ຢາວັກຊີນ.

**ສຸຂະພາບ ແລະ ໂພຊະນາການ:** ກຸ່ມດັ່ງກ່າວຈະນຳໃຊ້ເຄື່ອງມືການປະເມີນສຸຂະພາບຂອງກະຊວງສາທາລະນະສຸກ ເພື່ອກຳນົດຄວາມຈຳເປັນ ໃນການແຈ້ງຂໍ້ມູນການຮັບມື ທີ່ກຳນົດເປົ້າໝາຍ ສູນສຳລັບການຍົກຍ້າຍ, ບ້ານ ແລະ ສຸກສາລາ. ການປະເມີນຜົນຈະປະກອບດ້ວຍ ການປະເມີນແບບຮີບດ່ວນພາຍໃນ 72 ຊົ່ວໂມງ ຫຼັງຈາກໄພພິບັດໄດ້ເກີດຂຶ້ນ ແລະ ການປະເມີນລາຍລະອຽດເພີ່ມເຕີມຈະດຳເນີນຂຶ້ນໃນລະຫວ່າງ 72 ຊົ່ວໂມງ ແລະ 14 ມື້. ຈະມີການດຳເນີນການປະເມີນຄວາມສ່ຽງຕໍ່ການເຝົ້າລະວັງພະຍາດ ແລະ ສຸກສາລາ ເພື່ອແຈ້ງໃຫ້ຊາບກ່ຽວກັບການຕັດສິນໃຈ ແລະ ການວາງແຜນເພີ່ມເຕີມ ພ້ອມທັງການຈັດຕັ້ງການເຝົ້າລະວັງພະຍາດໃນລະດັບສູງ ເພື່ອແຈ້ງເຕືອນໃຫ້ໜ່ວຍງານຮັບມືແບບຮີບດ່ວນ ທີ່ກຽມພ້ອມສຳລັບການເຄື່ອນກຳລັງຢ່າງວ່ອງໄວ ເພື່ອດຳເນີນການກວດສອບ ແລະ ຕອບສະໜອງຕໍ່ການແຈ້ງເຕືອນ/ການແຜ່ລະບາດ. ເມື່ອເກີດເຫດສຸກເສີນ, ກຸ່ມດັ່ງກ່າວຈະນຳໃຊ້ ແລະ ວິເຄາະຂໍ້ມູນຂັ້ນສອງຈາກການສຳຫຼວດ ເຊັ່ນ: ການເຝົ້າລະວັງດ້ານໂພຊະນາການ, ຊອບແວຂໍ້ມູນຂ່າວສານກ່ຽວກັບສຸຂະພາບຂັ້ນເມືອງ (DHIS2) ຫຼື ການປະເມີນ ເພື່ອປະເມີນຈຳນວນເດັກນ້ອຍທີ່ໄດ້ຮັບຜົນກະທົບທີ່ມີອາການຂາດສານອາຫານຮຸນແຮງ ແລະ ຄາດຄະເນຄວາມຕ້ອງການດ້ານອຸປະກອນປິ່ນປົວ. ຈະມີການຈັດຕັ້ງການປະເມີນໂພຊະນາການແບບຮີບດ່ວນ ເພື່ອຈັດບຸລິມະສິດໂດຍສະເພາະແຜນງານຄວາມຕ້ອງການເພື່ອກຳນົດກິດຈະກຳການໃຫ້ອາຫານເດັກ ແລະ ເດັກອ່ອນ (IYCF) ແລະ/ຫຼື ການຄຸ້ມຄອງການຂາດສານອາຫານກະທັນຫັນແບບເຊື່ອມສານ (IMAM). ການກວດຄັດກອງ ການວັດແທກຮອບກາງແຂນສ່ວນເທິງ (MUAC) ສຳລັບການກຳນົດເບື້ອງຕົ້ນ ແລະ ການສົ່ງຕໍ່ເດັກນ້ອຍ ເພື່ອຮັບການປິ່ນປົວນັ້ນ

ແມ່ນຈະດຳເນີນການຜ່ານຄູ່ຮ່ວມງານດ້ານໂພຊະນາການ. ສຳລັບສຸຂະພາບທາງເພດ ແລະ ການຈະເລີນພັນ (SRH), ຈະມີການຈັດ ຕັ້ງກຸ່ມ ເພື່ອດຳເນີນການປະເມີນຊຸດບໍລິການເບື້ອງຕົ້ນຂັ້ນຕ່ຳ (MISP) ໃນເຂດເປົ້າໝາຍ.

**ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT):** ທັນທີຫຼັງເກີດໄພພິບັດ, ກຸ່ມ ICT ຈະສົມທົບກັບ ກະຊວງເຕັກໂນໂລຊີ ແລະ ການສື່ສານ (MoTC) ແລະ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (MICT) ເພື່ອປະເມີນຂອບເຂດຄວາມເສຍຫາຍຂອງໂຄງລ່າງພື້ນຖານ ພ້ອມທັງໃຫ້ການແກ້ໄຂບັນຫາແບບຮີບດ່ວນ ແລະ ການສະໜັບສະໜູນດ້ານການສຳຮອງດ້ານໄຟຟ້າ ແລະ ໂທລະຄົມ ເພື່ອໃຫ້ສາມາດສະໜອງອຸປະກອນທີ່ຈຳເປັນ ແລະ ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອຟື້ນຟູລະບົບສາທາລະນະສຸກໃຫ້ໄວເທົ່າທີ່ຈະໄວໄດ້.

**ການຂົນສົ່ງ:** ກຸ່ມດັ່ງກ່າວຈະດຳເນີນການປະເມີນສະຖານະການລະບົບຕ່ອງໂສ້ການສະໜອງສຸກເສີນ ເພື່ອກຳນົດການຊ່ວຍເຫຼືອດ້ານການຂົນສົ່ງທີ່ຕ້ອງການ ໂດຍກຸ່ມບູລິມະສິດ ແລະ ອົງການຕ່າງໆ.

**ການປົກປ້ອງ:** ກຸ່ມປົກປ້ອງຈະສະໜັບສະໜູນລັດຖະບານ ເພື່ອຮັບປະກັນວ່າການປະເມີນແບບຮີບດ່ວນຈະເກັບກຳຂໍ້ມູນດ້ານການຮັບມືທີ່ຕິດພັນກັບບົດບາດຍິງຊາຍ ເພື່ອເກັບກຳຄວາມຕ້ອງການຂອງແມ່ຍິງ, ເດັກນ້ອຍ, ຜູ້ສູງອາຍຸ, ຄົນພິການ, ແລະ ກຸ່ມທີ່ມີຄວາມບອບບາງອື່ນໆທີ່ມີຄວາມຕ້ອງການພິເສດ. ການປະເມີນຍັງຈະປະກອບມີການກຳໜົດບຸກຄົນທີ່ມີຄວາມສ່ຽງ ເພື່ອສະໜອງການສະໜັບສະໜູນທີ່ເໝາະສົມ ລວມທັງການຈັດຫາການເບິ່ງແຍງແບບທາງເລືອກ, ການເຕົ້າໂຮມກັນຄືນໃໝ່, ແລະ ການລວມຕົວກັນຄືນໃໝ່ ຂອງເດັກນ້ອຍທີ່ບໍ່ໄດ້ມາພ້ອມກັບພໍ່ແມ່ ແລະ ຫຼືທາງແຍກກັນກັບພໍ່ແມ່.

**ນ້ຳ, ສຸຂາພິບານ, ແລະ ສຸຂະອະນາໄມ (WASH):** ກຸ່ມ WASH ຈະດຳເນີນການປະເມີນຜົນຕ່າງໆ ເພື່ອກວດກາເບິ່ງສະພາບຂອງຈຸດແຈກຢາຍນ້ຳ ແລະ ສຸຂາພິບານ ຢູ່ໃນບ້ານ, ໂຮງຮຽນ, ແລະ ສູນລວມຊຸມຊົນ, ເພື່ອກຳນົດຄວາມຕ້ອງການ WASH ຂອງຄອບຄົວທີ່ໄດ້ຮັບຜົນກະທົບ ແລະ ມີຄວາມສ່ຽງຈາກ ນ້ຳ ແລະ ພະຍາດຕິດຕໍ່ທີ່ເກີດຈາກແມງໄມ້ (vector-borne diseases). ການເກັບກຳຂໍ້ມູນເບື້ອງຕົ້ນ, ການອອກແບບການຮັບມື, ການຈັດຕັ້ງປະຕິບັດ, ການຕິດຕາມ, ແລະການປະເມີນຜົນ, ສະມາຊິກຊຸມຊົນຈະມີສ່ວນຮ່ວມ ເພື່ອໃຫ້ມີການຮັບມມືທີ່ເໝາະສົມ

# ຕາຕະລາງສະຫຼຸບ: ກຸ່ມທັງໝົດ

**150 ພັນ**
[illegible]

**100 ພັນ**
ຄົນທີ່ເປັນເປົ້າໝາຍ

**$18.9 ລ້ານ**
ຄວາມຕ້ອງການເງິນທຶນ (US$)

| ກຸ່ມ | ຈຳນວນເປົ້າໝາຍ | ຄວາມຕ້ອງການເງິນທຶນ (US$) |
| --- | --- | --- |
| ການສຶກສາ | 30,000 | 2,048,907 |
| ການຄ້ຳປະກັນສະບຽງອາຫານ ແລະ ກະສິກຳ | 50,000 | 5,193,165 |
| ສຸຂະພາບ ແລະ ໂພຊະນາການ | 71,000 | 1,757,000 |
| ການປົກປ້ອງ | 22,550 | 273,500 |
| ທີ່ພັກອາໄສ ແລະ ສິ່ງທີ່ບໍ່ແມ່ນອາຫານ | 60,000 | 5,000,000 |
| WASH | 100,000 | 3,129,000 |
| ການຟື້ນຟູໃນໄລຍະເລີ່ມຕົ້ນ | 15,000 | 950,000 |
| ການຂົນສົ່ງ | - | 207,000 |

| | | |
|---|---|---|
| ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) | - | 395,000 |

# ແຜນການກຸ່ມ

## ການສຶກສາ

| ຄົນທີ່ຕ້ອງການ | ປະຊາຊົນທີ່ເປັນເປົ້າໝາຍ | ຄວາມຕ້ອງການ (US$) |
|---|---|---|
| 67,617 | 30,000 | 2 ລ້ານ |

### ຜົນກະທົບຕໍ່ຂະແໜງການ ແລະ ຄວາມຕ້ອງການຮີບດ່ວນທີ່ສຳຄັນ

**ຜົນກະທົບ**

- ຝົນຕົກໜັກ ແລະ ນ້ຳຖ້ວມ ສິ່ງຜົນເຮັດໃຫ້ການບໍລິການດ້ານການສຶກສາໄດ້ຮັບຄວາມເສຍຫາຍຢ່າງໜັກໜ່ວງ ເນື່ອງຈາກໂຄງສ້າງພື້ນຖານຂອງໂຮງຮຽນ ເຊັ່ນ: ຫ້ອງຮຽນ, ຫ້ອງນ້ຳ ແລະ ຫ້ອງສະໝຸດ ໄດ້ຮັບຄວາມເສຍຫາຍຈາກທີ່ຈົມຢູ່ໃຕ້ນ້ຳ.
- ອຸປະກອນການຮຽນ-ການສອນ ເຊັ່ນ: ປຶ້ມແບບຮຽນ, ຄູ່ມືການສິດສອນ, ໂຕະ, ຕັ່ງ, ກະດານດຳ, ສໍຂາວ ແລະ ອຸປະກອນດິຈິຕອນ ໄດ້ຮັບຄວາມເສຍຫາຍ.
- ການຂາດຄູຜູ້ສິດສອນຢູ່ໃນໂຮງຮຽນ, ເດັກນ້ອຍຢຸດເຊົາການຮຽນ, ຊົ່ວໂມງການຂຶ້ນສິດສອນທີ່ສັ້ນລົງ, ແລະ ກິດຈະກຳການຮຽນຮູ້ອື່ນໆ ກໍໄດ້ຮັບຜົນກະທົບ.
- ເສັ້ນທາງເຂົ້າເຖິງໂຮງຮຽນແມ່ນໄດ້ຮັບຄວາມເສຍຫາຍ ຫຼື ເສັ້ນທາງຂາດ.
- ຄວາມທຸກທາງດ້ານຈິດໃຈ ແລະ ສັງຄົມ ຂອງເດັກນ້ອຍທີ່ມີຄວາມບອບບາງ ແລະ ຄອບຄົວຂອງເຂົາເຈົ້າ.
- ປະຊາກອນທີ່ຕ້ອງການຄວາມຊ່ວຍເຫຼືອທັງໝົດ ແມ່ນປະມານ 67,617 ຄົນ; ເຊິ່ງປະກອບດ້ວຍ ເດັກນ້ອຍ 58,394 ຄົນ, ອາຍຸ 0-17 ປີ, ແລະ ຄູສອນຊັ້ນປະຖົມ ແລະ ມັດທະຍົມ 9,223 ຄົນ. ຄູທີ່ໄດ້ຮັບຜົນກະທົບແມ່ນປະມານ 2 ສ່ວນຮ້ອຍຂອງຈຳນວນຄູອາຈານທັງໝົດໃນເຂດທີ່ໄດ້ຮັບຜົນກະທົບ. ຂະແໜງການສຶກສາມີແຜນຈະບັນລຸຈຳນວນນັກຮຽນໃຫ້ໄດ້ 30,000 ຄົນ ໃນ 5 ແຂວງ (ອັດຕະປື, ເຊກອງ, ອຸດົມໄຊ, ສະຫວັນນະເຂດ ແລະ ຫົວພັນ) ເຊິ່ງມີອັດຕາຄວາມທຸກຍາກສູງຂຶ້ນ.

**ຄວາມຕ້ອງການ**

- ສະຖານທີ່ສຳລັບການຮຽນຊົ່ວຄາວ, ລວມທັງໂຕະ, ຕັ່ງ, ກະດານດຳ ສຳລັບນັກຮຽນ 40 ຄົນ ຕໍ່ ໜຶ່ງ ເຕັ້ນຜັກຟື້ນ.
- ປຶ້ມແບບຮຽນ, ຄູ່ມືການສິດສອນ, ປຶ້ມບັນທຶກນັກຮຽນ, ອຸປະກອນການຮຽນ ແລະ ເຄື່ອງຂຽນສຳລັບນັກຮຽນ.
- ອຸປະກອນດິຈິຕອນ ແລະ ການເຊື່ອມຕໍ່ອິນເຕີເນັດສຳລັບອຸປະກອນການສອນ ແລະ ການຮຽນຮູ້ແບບດິຈິຕອນ ລວມມີ ດົນຕີ, ວີດີໂອ, ແລະເກມ ສຳລັບນັກຮຽນກ່ອນຊັ້ນປະຖົມ.
- ຊຸດອະນາໄມສຳລັບເດັກນ້ອຍ ແລະ ຄອບຄົວ.

- ຄວາມຕ້ອງການດ້ານການຊ່ວຍເຫຼືອເບື້ອງຕົ້ນທາງຈິດໃຈ (PFA) ແລະ ສຸຂະພາບຈິດ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ (MHPSS) ສໍາລັບນັກຮຽນ, ຄູສອນ ແລະ ຜູ້ເບິ່ງແຍງ.
- ອຸປະກອນ ແລະ ວັດສະດຸສໍາລັບການຟື້ນຟູໂຮງຮຽນ.
- ຊັ້ນຮຽນທີ່ເສີມທັກສະການຮູ້ໜັງສື ແລະ ຄະນິດສາດ ຢູ່ສະຖານທີ່ພັກພື້ນ ແລະ ການຝຶກອົບຮົມຄູ ແລະ ຜູ້ອໍານວຍການໂຮງຮຽນ.
- ການເຕີມອຸປະກອນການຮຽນ-ການສອນ.
- ຊຸດອຸປະກອນສໍາລັບການກັບຄືນໄປເຂົ້າໂຮງຮຽນສໍາລັບນັກຮຽນແຕ່ລະຄົນ.
- ອາຫານໃນໂຮງຮຽນ.

### ກິດຈະກໍາການຮັບມືທີ່ສໍາຄັນ

#### ໄລຍະ 1: 0-2 ອາທິດ

- ການຈັດຫາສະຖານທີ່ເປັນມິດຕໍ່ກັບແມ່ຍິງ ແລະ ເດັກນ້ອຍ, ສ້າງແຮງຈູງໃຈໃຫ້ເດັກເຂົ້າໂຮງຮຽນ ແລະ ເປັນການປູກຈິດສໍານຶກໃຫ້ແກ່ພໍ່ແມ່ ກ່ຽວກັບຜົນປະໂຫຍດຂອງການໃຫ້ເດັກນ້ອຍໄດ້ສືບຕໍ່ເຂົ້າໂຮງຮຽນ.
- ການສະໜອງອຸປະກອນການຮຽນ-ການສອນທີ່ຈໍາເປັນ ແລະ ຕິດຕາມ ແລະ ຄຸ້ມຄອງການນໍາໃຊ້ອຸປະກອນການຮຽນ
- ສະໜອງຊຸດສຸຂະອະນາໄມໃຫ້ເດັກນ້ອຍໃນໂຮງຮຽນ ແລະ ຄອບຄົວຂອງເຂົາເຈົ້າ.
- ການຈັດຫາອຸປະກອນດີຈີຕອລ ແລະ ສູນອິນເຕີເນັດສໍາລັບໂຮງຮຽນ ແລະ ສະຖານທີ່ສໍາລັບການຮຽນ-ການສອນຊົ່ວຄາວ

#### ໄລຍະ 2: 2-4 ອາທິດ

- ສະໜອງອຸປະກອນການສິ່ງເສີມ ແລະ ການຝຶກອົບຮົມຂັ້ນພື້ນຖານໃຫ້ແກ່ຄູ ແລະ ພໍ່ແມ່ ເພື່ອຈັດການກັບຄວາມເຄັ່ງຕຶງ ແລະ ຄວາມກັງວົນທີ່ເກີດຈາກໄພພິບັດທໍາມະຊາດ ໂດຍຜ່ານການຊ່ວຍເຫຼືອຂອງຜູ້ຊ່ຽວຊານຂອງ MHPSS.

#### ໄລຍະ 3: 1-2 ເດືອນ

- ເພີ່ມອຸປະກອນສໍາລັບການຫັດອ່ານ (ປຶ້ມແບບຮຽນ).
- ສະໜອງການຝຶກອົບຮົມສໍາລັບການຮູ້ໜັງສື ແລະ ຫ້ອງຮຽນເສີມທັກສະດ້ານຄະນິດສາດ
- ການສ້ອມແປງສິ່ງອໍານວຍຄວາມສະດວກ WASH ໃນໂຮງຮຽນ ແລະ ສຸກສາລາ ໃນຊ່ວງໄລຍະປ່ຽນຜ່ານສູ່ຊ່ວງການຟື້ນຟູ, ໂດຍການຮ່ວມມືກັບກຸ່ມ ແລະ ສຸກສາລາ
- ສະໜອງອຸປະກອນ ແລະ ວັດສະດຸ ສໍາລັບການຟື້ນຟູ ຫຼື ສ້ອມແປງໂຮງຮຽນ (ລວມທັງສິ່ງອໍານວຍຄວາມສະດວກ WASH)
- ລະດົມຄູ ແລະ ອາສາສະໝັກ ເພື່ອສະໜັບສະໜູນກິດຈະກໍາການຮຽນ-ການສອນ.

## ບັນຫາຄອບຄຸມຫຼາຍມິຕິ

### ຮູບແບບການຊ່ວຍເຫຼືອ

ກຸ່ມການສຶກສາຈະເຮັດວຽກຢ່າງໃກ້ຊິດກັບ ກະຊວງສຶກສາທິການ ແລະ ກິລາ (MoES) ເພື່ອເພີ່ມທະວີການແບ່ງປັນຂໍ້ມູນຂ່າວສານ. ຄູ່ຮ່ວມງານກຸ່ມມີຄວາມຕັ້ງໃຈໃນການປັບປຸງການເກັບກໍາຂໍ້ມູນ ແລະ ການລາຍງານ ເພື່ອຮັບປະກັນວ່າມີຮູບແບບການຊ່ວຍເຫຼືອທີ່ເໝາະສົມສໍາລັບການຮັບມືຢ່າງມີ

ປະສິດທິພາບ. ເນື້ອໃນການສື່ສານສະເພາະກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບ ແມ່ນໄດ້ລະບຸໄວ້ໃນລະບົບການຄຸ້ມຄອງຄວາມສ່ຽງໄພພິບັດຂອງລັດຖະບານ ແລະ ລະບົບການແຈ້ງເຕືອນໄພລ່ວງໜ້າ ເຊິ່ງກຸ່ມດັ່ງກ່າວນີ້ຈະນຳໄປໃຊ້.

**ການພິຈາລະນາບົດບາດຍິງຊາຍ/ເພດພາວະ, ຄົນພິການ ແລະ ການປົກປ້ອງ**

ການລວມເອົາເດັກຍິງ, ແມ່ຍິງ ແລະ ຄົນພິການ ເຂົ້າຮ່ວມໃນການສົນທະນາໃນລະຫວ່າງການຮັບມື ແມ່ນມີຄວາມສຳຄັນຫຼາຍ. ກຸ່ມການສຶກສາຈະພິຈາລະນາການຮັບມື ແລະ ການຟື້ນຟູທີ່ຄອບຄຸມເຖິງບົດບາດຍິງຊາຍ/ເພດພາວະ ເຊິ່ງລວມມີທັງການຮັກສາຄວາມເປັນສ່ວນຕົວຂອງເດັກຍິງ ແລະ ແມ່ຍິງ, ການຕິດຕາມການອອກໂຮງຮຽນ ແລະ ການແຕ່ງງານກ່ອນໄວ ເນື່ອງມາຈາກການຢຸດເຊົາການສຶກສາເປັນໄລຍະເວລາທີ່ຍາວນານ ແລະ ການສູນເສຍໂອກາດໃນການເຂົ້າເຖິງໂຮງຮຽນ. ເພື່ອຊ່ວຍເຫຼືອຄົນພິການ, ການທຳຄວາມເຂົ້າໃຈຄວາມຕ້ອງການຂອງແຕ່ລະບຸກຄົນ ໂດຍຮັບປະກັນດ້ານການເຄື່ອນຫຍ້າຍ ແລະ ຮັບປະກັນວ່າພວກເຂົາມີຄົນທີ່ເຊື່ອຖືໄດ້ສຳລັບການສະໜັບສະໜູນນັ້ນ ແມ່ນສິ່ງສຳຄັນ. ກຸ່ມດັ່ງກ່າວຈະລວມມີການມີສ່ວນຮ່ວມຂອງເດັກຍິງ, ແມ່ຍິງ ແລະ ຄົນພິການ ຕະຫຼອດຊ່ວງການປະເມີນ, ການວິເຄາະສະຖານະການ ແລະ ການຮັບມື. ຈະມີລາຍການກວດສອບທີ່ສຳຄັນສຳລັບ ບົດບາດຍິງຊາຍ/ເພດພາວະ, ຄົນພິການ ແລະ ການປົກປ້ອງ ເພື່ອຮັບປະກັນວ່າສິ່ງເຫຼົ່ານີ້ບໍ່ໄດ້ຖືກລະເລີຍຕະຫຼອດຂະບວນການທັງໝົດ.

**ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ຄວາມຮັບຜິດຊອບຕໍ່ປະຊາກອນທີ່ໄດ້ຮັບຜົນກະທົບ**

ຄວາມສ່ຽງຕໍ່ຄວາມຮຸນແຮງທາງເພດ (GBV) ແລະ ການຂູດຮີດ ແລະ ການລ່ວງລະເມີດທາງເພດ (SEA) ເພີ່ມຂຶ້ນ ໃນສະຖານະການສຸກເສີນ. ການຮີບໂຮມ ແລະ ການວິເຄາະຂໍ້ມູນກ່ອນເກີດວິກິດການ ແລະ ຂໍ້ມູນຂັ້ນສອງ, ຂໍ້ມູນແຍກຕາມເພດ ແລະ ກຸ່ມທີ່ຖືກກີດກັນຢູ່ໃນສັງຄົມ ໃນໂຮງຮຽນ, ສະຖານທີ່ຕ່າງໆ, ຈຳນວນນັກຮຽນ, ຄູສອນ/ຜູ້ບໍລິຫານ, ໂຮງຮຽນເຈົ້າພາບທີ່ເປັນໄປໄດ້ສຳລັບການຍົກຍ້າຍ, ແລະ ອື່ນໆ ແມ່ນເປັນສິ່ງສຳຄັນ. ໃນສະຖານທີ່ສິດສອນຊົ່ວຄາວ, ຄູຜູ້ສອນ ຈະໄດ້ຮັບການຝຶກອົບຮົມໃນການສ້າງສະພາບແວດລ້ອມທີ່ບໍ່ມີຄວາມຮຸນແຮງ, ຄວາມອ່ອນໄຫວທາງບົດບາດຍິງຊາຍ/ເພດພາວະ, ແລະ ການປົກປ້ອງເດັກ. ນອກຈາກນີ້ ຍັງຈະມີການຕິດຕັ້ງຫ້ອງນໍ້າທີ່ຄຳນຶງເຖິງບົດບາດຍິງຊາຍ/ເພດພາວະ ເພື່ອຫຼີກເວັ້ນບັນຫາ GBV ຫຼື ການປົກປ້ອງ.

## ສະມາຊິກກຸ່ມ

| | |
|---|---|
| **ຜູ້ນຳພາ ຝ່າຍລັດຖະບານ:** | ກະຊວງສຶກສາທິການ ແລະ ກິລາ (MoES) |
| ຜູ້ນຳພາ ຮ່ວມ: | UNICEF ແລະ ອົງການຊ່ວຍເຫຼືອເດັກ (Save the Children) |
| ສະມາຊິກ: | ທະນາຄານພັດທະນາອາຊີ, ອົດສະຕຣາລີ-DFAT, ສະຖານທູດອັງກິດ, ສະຫະພາບເອີຣົບ, Catholic Relief Services (CRS), ອົງການຊາຍຟັນ ລາວ, ສະຖານທູດເຢຍລະມັນ, GIZ, Humanity & Inclusion, ເຄືອຄ່າຍ INGO, ອົງການແຮງງານສາກົນ (ILO), ອົງການຮ່ວມມືສາກົນຍີ່ປຸ່ນ, ອົງການຮ່ວມມືສາກົນເກົາຫຼີ, ອົງການລຸກຊໍາບວກເພື່ອການຮ່ວມມືພັດທະນາ, ອົງການ ແພລນສາກົນ, ອົງການ ຣູມທູຣີດ, UNESCO ກຸງເທບ, UNFPA, ທະນາຄານໂລກ, ອົງການການສຶກສາໂລກ, ອົງການອາຫານໂລກ, ອົງການສຸພານິມິດ |

# ການຄໍ້າປະກັນສະບຽງອາຫານ ແລະ ກະສິກຳ

| ຄົນທີ່ຕ້ອງການ | ປະຊາຊົນທີ່ເປັນເປົ້າໝາຍ | ຄວາມຕ້ອງການ (US$) |
|---|---|---|
| 150,000 | 50,000 | 5.2ລ້ານ |

## ຜົນກະທົບຂອງຂະແໜງການ ແລະ ຄວາມຕ້ອງການຮີບດ່ວນທີ່ສຳຄັນ

**ຜົນກະທົບ**

- ຝົນຕົກໜັກ ສົ່ງຜົນເຮັດໃຫ້ນໍ້າຖ້ວມກະທັນຫັນເປັນວົງກ້ວາງໃນພາກເໜືອ, ພາກກາງ ແລະ ພາກໃຕ້ຂອງລາວ, ເຊິ່ງອາດຈະສົ່ງຜົນກະທົບໃຫ້ກັບປະຊາກອນ ເຖິງ 1 ລ້ານຄົນ, ຫຼາຍກວ່າ 15 ເປີເຊັນ ຂອງປະຊາກອນທີ່ໄດ້ຮັບຜົນກະທົບ ແມ່ນມີຄວາມຕ້ອງການດ້ານຄວາມຊ່ວຍເຫຼືອ, ຄາດວ່າຈະມີການສູນເສຍຊີວິດ ແລະ ການໄດ້ຮັບບາດເຈັບ ລວມທັງສັດລ້ຽງ ກໍໄດ້ຮັບຄວາມເສຍຫາຍເຊັ່ນດຽວກັນ.
- ການເຂົ້າເຖິງຈະມີບັນຫາ ເນື່ອງມາຈາກເສັ້ນທາງທີ່ບໍ່ສາມາດຜ່ານໄດ້; ຈຸດແຈກຢາຍນໍ້າປະປາ ແລະ ເຄື່ອງໃຊ້ໄຟຟ້າ ໄດ້ຮັບຄວາມເສຍຫາຍ ຫຼື ຖືກທຳລາຍ. ລະບົບໂທລະຄົມອາດຈະໄດ້ຮັບຜົນກະທົບ, ເຊິ່ງເປັນຂໍ້ຈຳກັດໃນການເຂົ້າເຖິງ.
- ນໍ້າຖ້ວມມັກຈະຖ້ວມບັນດາບ້ານທີ່ຕັ້ງຢູ່ຕາມແຄມແມ່ນໍ້າ ແລະ ບ້ານເຮືອນ ກໍຖືກນໍ້າຖ້ວມຂັງເສຍຫາຍ, ບາງສ່ວນຂອງສະຖານທີ່ພັກເຊົາ ແລະ ໂຄງສ້າງຊຸມຊົນ ກໍໄດ້ຮັບຄວາມເສຍຫາຍ.
- ນໍ້າຖ້ວມ ແລະ ພື້ນຖານໂຄງລ່າງທີ່ໄດ້ຮັບຄວາມເສຍຫາຍ ຈະສົ່ງຜົນກະທົບທັນທີ ຕໍ່ກັບການເຂົ້າເຖິງສະບຽງອາຫານ.
- ປະຊາກອນທີ່ໄດ້ຮັບຜົນກະທົບ ຈະຖືກຍ້າຍໄປສູນພັກພື້ນຊົ່ວຄາວ - ບາງຄອບຄົວອາດຈະຕ້ອງການການຊ່ວຍເຫຼືອດ້ານທີ່ພັກເຊົາຊົ່ວຄາວຢ່າງຕໍ່ເນື່ອງ ແລະ ການຊ່ວຍເຫຼືອດ້ານອາຫານໃນທັນທີ.
- ປະຊາກອນທີ່ຖືກຍົກຍ້າຍອາດຈະຕ້ອງການອາຫານຮ້ອນ ແລະ ອາຫານໄລຍະສັ້ນ/ອຸປະກອນປຸງແຕ່ງອາຫານໃນ ໄລຍະ 14-21 ມື້ທຳອິດ.
- ຊີວິດການເປັນຢູ່ອາດຈະໄດ້ຮັບຜົນກະທົບ, ເຊິ່ງຂຶ້ນກັບຄວາມເສຍຫາຍຂອງພື້ນທີ່ກະສິກຳ, ຕະຫຼາດ ແລະ ຖະໜົນຫົນທາງ.
- ພື້ນຖານໂຄງລ່າງລະດັບຊຸມຊົນ ແລະ ພື້ນທີ່ການຜະລິດກະສິກຳ ແມ່ນຕ້ອງການ ການສ້ອມແປງ. ຄາດວ່າຈະມີຄວາມຕ້ອງການດ້ານຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຄວາມຕ້ອງການໂພຊະນາການຢ່າງຕໍ່ເນື່ອງ ເຊິ່ງຂຶ້ນຢູ່ກັບຂະໜາດຂອງຄວາມເສຍຫາຍທາງດ້ານຊີວິດການເປັນຢູ່/ຄວາມສູນເສຍທາງດ້ານກະສິກຳ ແລະ ປະຊາກອນທີ່ຕ້ອງຍົກຍ້າຍ.

**ຄວາມຕ້ອງການ**

- ຄວາມຕ້ອງການດ້ານສະບຽງອາຫານໃນທັນທີຂອງປະຊາກອນທີ່ຕ້ອງຍົກຍ້າຍ ຍ້ອນເຂົ້າກິນທີ່ເກັບໄວ້ໃນຄົວເຮືອນ, ສວນຄົວ ແລະ ເນື້ອທີ່ປູກຝັງ ໄດ້ຮັບຄວາມເສຍຫາຍ.
- ຕ້ອງການອຸປະກອນການປຸງອາຫານ ແລະ ຊຸດເຮືອນຄົວ ສຳລັບປະຊາກອນທີ່ຕ້ອງຍົກຍ້າຍ ແລະ/ຫຼື ຄົວເຮືອນທີ່ປະສົບໄພນໍ້າຖ້ວມໃນທັນທີຫຼັງຈາກເຫດການນໍ້າຖ້ວມ ເພື່ອກະກຽມ ແລະ ບໍລິໂພກອາຫານຢ່າງປອດໄພ.
- ການຊ່ວຍເຫຼືອດ້ານການດຳລົງຊີວິດການເປັນຢູ່ໃນໄລຍະສັ້ນ ເຖິງ ໄລຍະກາງ ເຊັ່ນ: ແນວພັນ, ການບໍລິການດ້ານວິຊາການ, ການສ້ອມແປງພື້ນຖານໂຄງລ່າງໃຫ້ແກ່ຊາວກະສິກອນຂະໜາດນ້ອຍ ເພື່ອຟື້ນຟູພື້ນທີ່ການຜະລິດກະສິກຳ ແລະ ການປູກຄືນ ບັນດາພືດທີ່ຖືກທຳລາຍ ຫຼື ສູນເສຍ ແລະ/ຫຼື ສ້າງສວນຄົວຄືນໃໝ່.
- ການຊ່ວຍເຫຼືອດ້ານອາຫານໄລຍະສັ້ນ ຫຼື ເງິນສົດ ເພື່ອສະໜັບສະໜູນຄົວເຮືອນທີ່ເປັນຊາວກະສິກອນຜູ້ລ້ຽງສັດຂະໜາດນ້ອຍ ເພື່ອຕອບສະໜອງຄວາມຕ້ອງການສະບຽງອາຫານພື້ນຖານຂອງເຂົາເຈົ້າ ໃນຕະຫຼອດໄລຍະລະດູການຂາດອາຫານ.
- ອາຫານສັດ ແລະ ການສັກຢາກັນພະຍາດໃຫ້ສັດ ແມ່ນມີຄວາມຈຳເປັນ ເພື່ອຮັບປະກັນຊີວິດການເປັນຢູ່ຂອງຄົວເຮືອນ ແລະ ແຫຼ່ງອາຫານ ແລະ ເພື່ອຫຼຸດຜ່ອນຄວາມສ່ຽງຈາກສະພາບການສຸກເສີນທີ່ຈະເກີດຂຶ້ນຊໍ້າ.

## ກິດຈະກຳການຮັບມືທີ່ສຳຄັນ

### ໄລຍະ 1: 0-2 ອາທິດ

- ການຈັດຫາອາຫານເພື່ອບັນເທົາທຸກໃນທັນທີ ໂດຍຜ່ານການສະໜອງອາຫານຮ້ອນ, ອາຫານທີ່ກຽມພ້ອມ, ຫຼື ອາຫານເພື່ອຄົງຊີບສຸກເສີນ.
- ການສະໜອງອຸປະກອນປຸງແຕ່ງອາຫານ ແລະ ສິ່ງອຳນວຍຄວາມສະດວກ
- ການແຈກຢາຍອາຫານສັດ ແລະ ອາຫານພືດສັດ ສຳລັບການລ້ຽງສັດ
- ການໃຫ້ວັກຊີນແກ່ສັດລ້ຽງ

### ໄລຍະ 2: 2-4 ອາທິດ

- ການຈັດຫາອາຫານບັນເທົາທຸກແບບທັນທີ ໄປຈົນເຖິງ ອາຫານບັນເທົາທຸກສຳລັບໄລຍະສັ້ນ ໂດຍຜ່ານການນຳສົ່ງອາຫານ ຫຼື ການໂອນເງິນສົດ.
- ການແຈກຢາຍອາຫານສັດ ແລະ ພືດອາຫານສັດ ສຳລັບການລ້ຽງສັດ
- ການໃຫ້ຢາວັກຊີນແກ່ສັດລ້ຽງ
- ການສະໜອງປັດໃຈນຳເຂົ້າສຳລັບກະສິກຳ ເຊັ່ນ: ແນວພັນ, ຝຸ່ນ, ແລະ ອຸປະກອນ
- ການສະໜອງປັດໃຈນຳເຂົ້າ ແລະ ການບໍລິການທາງດ້ານກະສິກຳ, ລວມທັງການຊ່ວຍເຫຼືອດ້ານວິຊາການ ແລະ ວິສະວະກຳ

### ໄລຍະ 3: 1-2 ເດືອນ

- ການຟື້ນຟູຊີວິດການເປັນຢູ່.
- ການຟື້ນຟູ ແລະ ການກໍ່ສ້າງຄືນ ຊັບສິນຊຸມຊົນ .

## ບັນຫາຄອບຄຸມຫຼາຍມິຕິ

### ຮູບແບບການຊ່ວຍເຫຼືອ

ຮູບແບບການຊ່ວຍເຫຼືອຈະມີການຄັດເລືອກ ໂດຍອີງຕາມ ຄວາມກົງຕໍ່ເວລາ ແລະ ຄວາມເໝາະສົມຂອງກິດຈະກຳ. ໂດຍທົ່ວໄປແລ້ວ ຄວາມສາມາດໃນທ້ອງຖິ່ນຈະຕ້ອງການຄວາມຊ່ວຍເຫຼືອໃນລັກສະນະສິ່ງຂອງ, ໂດຍສະເພາະໃນສະຖານະການທີ່ມີສິ່ງຂອງກຽມໄວ້ແລ້ວ. ແຕ່ເຖິງຢ່າງໃດກໍຕາມ, ກໍເປັນທີ່ຮັບຮູ້ກັນດີວ່າ ສິ່ງຂອງທີ່ກຽມໄວ້ແລ້ວນັ້ນອາດຈະມີຄວາມຫຍຸ້ງຍາກໃນການຂົນສົ່ງໄປຫາເຂດຫ່າງໄກສອກຫຼີກ ຫຼື ເຂດທີ່ຕັ້ງທີ່ຢູ່ຕາມແມ່ນ້ຳຕ່າງໆ. ຈຸດແຈກຢາຍຈະຖືກກຳນົດຢູ່ຈຸດທີ່ໃກ້ທີ່ສຸດໃນບ້ານ ເພື່ອຮັບປະກັນໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບ ສາມາດເຂົ້າເຖິງໄດ້ງ່າຍ ແລະ ເພື່ອບໍ່ໃຫ້ເຂົາເຈົ້າຕ້ອງໄດ້ເສຍຄ່າເດີນທາງ ໃນການມາຮັບການຊ່ວຍເຫຼືອ. ຮູບແບບການຊ່ວຍເຫຼືອແບບເງິນສົດ ກຳລັງໄດ້ຮັບການພິຈາລະນາ ແລະ ໄດ້ຮັບການທົດສອບໃນປະເທດຫຼາຍຂຶ້ນ ແລະ ສາມາດໃຫ້ຄວາມສະດວກທີ່ກວມເອົາຄວາມຕ້ອງການທີ່ຈຳເປັນທີ່ຫຼາກຫຼາຍ - ແຕ່ເຖິງຢ່າງໃດກໍຕາມ, ການເຂົ້າເຖິງຕະຫຼາດ ແລະ ການເຮັດໜ້າທີ່ຂອງຕະຫຼາດ ຈຳເປັນຕ້ອງມີການທຳຄວາມເຂົ້າໃຈຢ່າງຖືກຕ້ອງໃນການກຳນົດການຊ່ວຍເຫຼືອໃນລັກສະນະຂອງການໂອນເງິນສົດ, ໂດຍສະເພາະໃນສະຖານການທີ່ຫຍຸ້ງຍາກໃນການເຂົ້າເຖິງ. ການບໍລິການເງິນສົດແບບດິຈິຕອນ ແລະ ການຍອມຮັບຕໍ່ກັບການບໍລິການດັ່ງກ່າວ ຍັງຢູ່ໃນລະດັບຕ່ຳ ແລະ ມີຄວາມຕ້ອງການບໍລິການເງິນສົດພ້ອມຈ່າຍ ຫຼື ການເບີກຈ່າຍເງິນສົດ ຫຼາຍກວ່າ.

### ການພິຈາລະນາບົດບາດຍິງຊາຍ/ເພດພາວະ, ການລວມເອົາທຸກກຸ່ມຄົນ ແລະ ການປົກປ້ອງ

ການພິຈາລະນາບົດບາດຍິງຊາຍ, ການລວມເອົາທຸກກຸ່ມຄົນ, ແລະ ການປົກປ້ອງ ຈະຖືກລະບຸໄວ້ໃນຂະບວນການວິເຄາະຄວາມຕ້ອງການ. ໃນກຸ່ມ, ການສ້າງແບບຈຳລອງຜົນກະທົບຈາກໄພພິບັດ ຈະລະບຸການແບ່ງຕາມເພດ ແລະ ອາຍຸ, ແລະ ອັດຕາສ່ວນຄວາມພິການຕໍ່ແຂວງ. ການປຶກສາຫາລືຂອງຊຸມຊົນຈະແຈ້ງຜົນກະທົບສະເພາະ ແລະ ຄວາມຕ້ອງການຂອງກຸ່ມຕ່າງໆ ແລະ ແຈ້ງແຜນການຮັບມືຂອງກຸ່ມ ເພື່ອແກ້ໄຂຊ່ອງຫວ່າງດ້ານການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການທີ່ເພີ່ມຂຶ້ນຈາກໄພນ້ຳຖ້ວມໃນລະດູມໍລະສຸມ. ຄວາມສ່ຽງດ້ານການປົກປ້ອງຈະໄດ້ຮັບການລະບຸ ໂດຍສະເພາະຢູ່ອ້ອມແອ້ມສະຖານທີ່ຍົກຍ້າຍ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຕໍ່ກັບຄວາມປອດໄພ ແລະ ຄວາມໝັ້ນຄົງຂອງປະຊາກອນທີ່ມີຄວາມບອບບາງທີ່ສຸດ. ໃນການກຳນົດວິທີການຊ່ວຍເຫຼືອໃນແຕ່ລະໄລຍະທີ່ແຕກຕ່າງກັນຂອງການຮັບມື, ຈະຕ້ອງມີການພິຈາລະນາເຖິງຄວາມສາ ມາດຂອງກຸ່ມສະເພາະ ເຊັ່ນ: ຄົວເຮືອນທີ່ມີຫົວໜ້າຄອບຄົວແມ່ຍິງ, ຄົວເຮືອນດຽວ, ແລະ ຄົນພິການ ເພື່ອຮັບປະກັນການເຂົ້າເຖິງ ແລະ ຄວາມສາ ມາດໃນການໄດ້ຮັບການຊ່ວຍເຫຼືອ ເຊັ່ນ: ເງິນສົດສຳລັບການເຮັດວຽກ ແລະ ອື່ນໆ.

**ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ຄວາມຮັບຜິດຊອບຕໍ່ປະຊາກອນທີ່ໄດ້ຮັບຜົນກະທົບ**

ປະຊາກອນທີ່ໄດ້ຮັບຜົນກະທົບຈະໄດ້ຮັບການສະໜອງຂໍ້ມູນທີ່ຈະແຈ້ງກ່ຽວກັບວິທີການລາຍງານ ກ່ຽວກັບກໍລະນີການຖືກລ່ວງລະເມີດທາງເພດ (SEA) ຫຼື ໄພຂົ່ມຂູ່ຕ່າງໆ. ຈະມີການສ້າງກົນໄກຂຶ້ນ ເພື່ອພິຈາລະນາຄວາມຕ້ອງການຂອງປະຊາຊົນ ເພື່ອສ້າງຄວາມເຊື່ອໝັ້ນໃນລະບົບການລາຍງານຂອງອົງການຈັດຕັ້ງ. ອົງການຈັດຕັ້ງຈະລວມເອົາຫຼັກການ ຄວາມຮັບຜິດຊອບຕໍ່ຜູ້ໄດ້ຮັບຜົນກະທົບ (AAP) ເຂົ້າໃນກິດຈະກຳສຸກເສີນດ້ານຄວາມໝັ້ນຄົງດ້ານສະບຽງອາຫານທັງໝົດ. ກິດຈະກຳຂອງອົງການຈັດຕັ້ງ ຈະຮັບປະກັນໃຫ້ມີການປຶກສາຫາລືກັບຊຸມຊົນ, ການສະໜອງຂໍ້ມູນຂ່າວສານ ແລະ ການສ້າງກົນໄກການຮ້ອງທຸກ ແລະ ຄຳຄິດຄຳເຫັນ. ການປະເມີນຈະປະກອບດ້ວຍການໃຫ້ຄຳປຶກສາແກ່ປະຊາກອນສະເພາະກຸ່ມ ເຊັ່ນ: ແມ່ຍິງ, ຄົນພິການ, ປະຊາກອນທີ່ດ້ອຍໂອກາດ, ແລະ ຊົນເຜົ່າພື້ນເມືອງ ໃນສະຖານທີ່ທີ່ປອດໄພ ແລະ ມີຄວາມເໝາະສົມທາງດ້ານວັດທະນະທຳ ເພື່ອຮັບປະກັນວ່າຄວາມຕ້ອງການຂອງເຂົາເຈົ້າໄດ້ຮັບການຕອບສະໜອງ. ອົງການຈັດຕັ້ງທີ່ມີສ່ວນຮ່ວມໃນການພັດທະນາແຜນການຮັບມືກຸ່ມ ຈະພິຈາລະນາກ່ຽວກັບ ການຮູ້ໜັງສື, ພາສາ, ແລະ ສຳນຽງທ້ອງຖິ່ນ, ສື່ກາງຂອງການສື່ສານ ແລະ ຄວາມຫຼາກຫຼາຍຂອງແຫຼ່ງຂໍ້ມູນ/ສື່ຕ່າງໆ ແລະ ຄວາມຕ້ອງການ ແລະ ຄວາມສາມາດຂອງປະຊາຊົນ ໃນສະໜອງ ແລະ ເກັບກຳຂໍ້ມູນ. ຄູ່ຮ່ວມງານຈະສ້າງຕັ້ງກົນໄກສຳລັບການຮ້ອງຮຽນ ແລະ ການສື່ງຄຳຄິດຄຳເຫັນ ທີ່ຕອບສະໜອງຕໍ່ຄວາມຕ້ອງການຂອງປະຊາຊົນ ເຊັ່ນ: ການມີສ່ວນສ່ວນຮ່ວມແບບເຊິ່ງໜ້າ, ໂຕະຮັບຄຳຮ້ອງທຸກ, ສາຍດ່ວນ, ກ່ອງຂໍ້ຄວາມ, ວິທີການອື່ນທີ່ເໝາະສົມ, ເພື່ອສ້າງຄວາມໄວ້ວາງໃຈ ແລະ ຄວາມສະດວກສະບາຍຂອງພວກເຂົາ ໃນການແລກປ່ຽນຄຳຄິດຄຳເຫັນຕໍ່ກັບການຕອບສະໜອງດັ່ງກ່າວ.

# ສະມາຊິກກຸ່ມ

| | |
|---|---|
| **ຜູ້ນຳພາ ຝ່າຍລັດຖະບານ:** | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW) ແລະ ກະຊວງກະສິກຳ ແລະ ປ່າໄມ້ (MAF) |
| ຜູ້ນຳພາຮ່ວມ: | ອົງການອາຫານໂລກ (WFP), ອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ (FAO) |
| ສະມາຊິກ: | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການແຜລນສາກົນ, UNICEF, UNDP, ທະນາຄານໂລກ, ອົງການກາແດງລາວ, IFRC, ອົງການກາແດງສະວິດ, ອົງການຊ່ວຍເຫຼືອເດັກ, ອົງການສຸພານິມິດສາກົນ, Catholic Relief Services (CRS), Oxfam, ອົງການແຄຣ໌, UNRCO |

# ສຸຂະພາບ ແລະ ໂພຊະນາການ

| ຄົນທີ່ຕ້ອງການ | ປະຊາຊົນທີ່ເປັນເປົ້າໝາຍ | ຄວາມຕ້ອງການ (US$) |
|---|---|---|
| 150,000 | 71,200 | 1.8 ລ້ານ |

## ຜົນກະທົບຂອງຂະແໜງການ ແລະ ຄວາມຕ້ອງການຮີບດ່ວນທີ່ສຳຄັນ

### ຜົນກະທົບ

- ສຸກສາລາ 118 ແຫ່ງ ຖືກທຳລາຍ, ໂຮງໝໍແຂວງ 3 ແຫ່ງ ໄດ້ຮັບຄວາມເສຍຫາຍບາງສ່ວນ, ໂຮງໝໍເມືອງ 19 ແຫ່ງ ຖືກທຳລາຍ ຫຼື ເສຍຫາຍບາງສ່ວນ.
- ສາງເກັບເຄື່ອງຂອງແຂວງ 3 ແຫ່ງ ຖືກທຳລາຍເປັນບາງສ່ວນ ແລະ ສາງເກັບເຄື່ອງຂັ້ນເມືອງ 19 ແຫ່ງຖືກທຳລາຍ ຫຼື ເສຍຫາຍບາງສ່ວນ.
- ພະນັກງານແພດໝໍທັງໝົດ 2,376[3] ຄົນ ໄດ້ຮັບຜົນກະທົບ.
- ການເພີ່ມຂຶ້ນຂອງວິກິດການໂພຊະນາການໃນວົງກວ້າງຂວາງ ສຳລັບປະຊາກອນທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມ, ໂດຍສັງເກດເຫັນວ່າພວກເຂົາມີສະພາບໂພຊະນາການທີ່ບໍ່ດີ ກ່ອນໜ້າຈະເກີດມີໄພພິບັດ.
- ແອນ້ອຍ, ເດັກນ້ອຍ, ແລະ ແມ່ຍິງຖືພາ ແລະ ແມ່ຍິງທີ່ໃຫ້ນົມລູກ (PLW) ມີຄວາມສ່ຽງຫຼາຍຂຶ້ນ ເນື່ອງຈາກຄວາມຕ້ອງການທາດອາຫານທີ່ເພີ່ມຂຶ້ນ. ການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ໂພຊະນາການ ໄດ້ຖືກຂັດຂວາງ ແລະ ມີຄວາມທ້າທາຍ.
- ການເຂົ້າເຖິງນໍ້າດື່ມທີ່ ປອດໄພ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ບໍ່ພຽງພໍ ໄດ້ສົ່ງຜົນສະທ້ອນຕໍ່ສຸຂະພາບ ແລະ ໂພຊະນາການ.

### ຄວາມຕ້ອງການ

- ຄວາມຕໍ່ເນື່ອງຂອງການບໍລິການເບິ່ງແຍງສຸຂະພາບທີ່ຈຳເປັນ ລວມທັງການເບິ່ງແຍງສຸຂະພາບຂັ້ນຕົ້ນໃນທຸກລະດັບ.
- ຄວາມພ້ອມ ແລະ ການເຂົ້າເຖິງການບໍລິການ IYCF, ການປິ່ນປົວ ແລະ ການຄຸ້ມຄອງການຂາດສານອາຫານກະທັນຫັນ ແລະ ການບໍລິການດ້ານຈຸລະສານອາຫານເສີມ.
- ການສົ່ງໜ່ວຍງານແພດສຸກເສີນ (EMTs) ໃຫ້ທັນເວລາ ແລະ ທີມຕອບສະໜອງໄວ ເພື່ອຕອບສະໜອງຄວາມຕ້ອງການດ້ານສຸຂະພາບສຸກເສີນຂອງຊຸມຊົນທີ່ໄດ້ຮັບຜົນກະທົບ.
- ການເຕີມ ຢາປິ່ນປົວ ແລະ ເຄື່ອງໃຊ້ທີ່ສຳຄັນທີ່ຖືກສູນເສຍ ຫຼື ໄດ້ຮັບຄວາມເສຍຫາຍ.
- ການຟື້ນຟູການບໍລິການສາທາລະນະຂັ້ນພື້ນຖານ ແລະ ການຟື້ນຟູສຸກສາລາ.

[3] ອີງຕາມການຄິດໄລ່ຈຳນວນ ພະນັກງານແພດໝໍ 2.85 ຄົນຕໍ່ປະຊາກອນ 1,000 ຄົນ.

## ກິດຈະກຳຮັບມືທີ່ສຳຄັນ

### ໄລຍະ 1: 0-2 ອາທິດ

**ສຸຂະພາບ**

- ເປີດນຳໃຊ້ສູນປະຕິບັດງານສຸກເສີນດ້ານສາທາລະນະສຸກ (PHEOC) ແລະ ກຸ່ມສຸຂະພາບ ສຳລັບການປະສານງານ, ການສື່ສານ, ແລະ ຜະລິດ ຂໍ້ມູນຂ່າວສານ.
- ນຳສົ່ງ ໜ່ວຍງານແພດສຸກເສີນ ໄປຍັງເຂດທີ່ໄດ້ຮັບຜົນກະທົບ ແລະ ກຳນົດຄວາມສາມາດທີ່ເພີ່ມຂຶ້ນ.
- ໃຫ້ບໍລິການຄລີນິກສຸກເສີນ ລວມທັງຄວາມເຈັບປວດທາງຈິດໃຈ ແລະ ການໄດ້ຮັບບາດເຈັບ.
- ສະໜອງການບໍລິການສຸຂະພາບທີ່ຈຳເປັນ ລວມທັງການບໍລິການສຸຂະພາບຂອງແມ່ ແລະ ເດັກ (MCH).
- ເປີດໃຊ້ລະບົບການສົ່ງຕໍ່ໂດຍອີງໃສ່ໜ້າທີ່ ແລະ ການເຂົ້າເຖິງສຸກສາລາ.
- ປະສານງານ ໜ່ວຍງານແພດສຸກເສີນ ສາກົນ, ໂດຍອີງຕາມຄວາມຈຳເປັນ.
- ຈັດຊື້/ສະໜອງຢາປິ່ນປົວທີ່ຈຳເປັນ ແລະ ວັກຊີນສຸກເສີນສຳລັບພະຍາດໝາກແດງ, ພະຍາດວໍ່, ພະຍາດບາດທະຍັກ ລວມທັງຢາປິ່ນປົວ ເພື່ອທົດແທນຈຳນວນຢາທີ່ຖືກນຳໃຊ້ໄປແລ້ວ ແລະ ໃນເຂດທີ່ໄດ້ຮັບຜົນກະທົບ ທີ່ມີຈຳນວນຢາປິ່ນປົວທີ່ຈຳກັດ ຫຼື ບໍ່ມີເລີຍ.
- ສະໜອງຢາຂ້າແມງໄມ້ ແລະ ມຸ້ງທີ່ເຄືອບຢາປ້ອງກັນແມງໄມ້.
- ໃຫ້ການສະໜັບສະໜູນດ້ານສຸຂະພາບຈິດຂອງຄອບຄົວທີ່ໄດ້ຮັບຜົນກະທົບ.
- ສະໜັບສະໜູນກິດຈະກຳການສຶກສາກ່ຽວກັບສຸຂະພາບ/ IEC ແລະ ແຈກຢາຍອຸປະກອນການສື່ສານຄວາມສ່ຽງ ເຊິ່ງລວມມີການສົ່ງເສີມດ້ານສຸຂະອະນາໄມ, ການລ້ຽງລູກດ້ວຍນົມແມ່, ແລະ ການປ້ອງກັນພະຍາດ.
- ການຈັດຕັ້ງການເຝົ້າລະວັງພະຍາດທີ່ເຂັ້ມງວດຕາມຄວາມຈຳເປັນ/ຄວາມຕ້ອງການ ແລະ ຮັບປະກັນໃຫ້ມີໜ່ວຍງານຮັບມືແບບຮີບດ່ວນ ຢູ່ໃນສະພາບກຽມພ້ອມສະເໝີ ເພື່ອໃຫ້ການຊ່ວຍເຫຼືອຢ່າງວ່ອງໄວໃນການກວດສອບ ແລະ ຕອບສະໜອງຕໍ່ກັບການແຈ້ງເຕືອນ/ການແຜ່ລະບາດ.
- ຈັດຊື້ ແລະ ເຕີມຈຳນວນຢາວັກຊີນສຳລັບເດັກທີ່ໄດ້ຮັບຄວາມເສຍຫາຍ ແລະ ຈັດຊື້ ແລະ ສະໜອງວັກຊີນອື່ນໆ ທີ່ບໍ່ລວມຢູ່ໃນການສັກຢາປ້ອງກັນປົກກະຕິ ເຊັ່ນ: ໄຂ້ທໍລະພິດ, ອະຫິວາ, ໄຂ້ຫວັດຕາມລະດູການ, ໂຄວິດ-19, ແລະ ອື່ນໆ.
- ສະໜອງອຸປະກອນ RH ສຸກເສີນ.

**ໂພຊະນາການ**

- ສະໜັບສະໜູນ ແລະ ເສີມສ້າງກົນໄກການປະສານງານທີ່ມີຢູ່ແລ້ວໃນລະດັບຊາດ ແລະ ຂັ້ນແຂວງ ໂດຍການຮ່ວມມືກັບລັດຖະບານ ແລະ ຄູ່ຮ່ວມງານ ເພື່ອຮັບປະກັນໃຫ້ການຕອບສະໜອງດ້ານມະນຸດສະທຳ ໄດ້ຮັບການປະສານງານ ແລະ ຈັດຕັ້ງປະຕິບັດ ຢ່າງທັນການ.
- ປົກປ້ອງ, ສະໜັບສະໜູນ ແລະ ສົ່ງເສີມການລິເລີ່ມຕັ້ງແຕ່ຕົ້ນ ແລະ ການລ້ຽງລູກດ້ວຍນົມແມ່ໂດຍສະເພາະແອນ້ອຍ, ລວມທັງການສ້າງ "ພື້ນທີ່ແຫຼ່ງຂໍ້ມູນທີ່ປອດໄພ" ດ້ວຍການໃຫ້ຄຳປຶກສາສຳລັບ ແມ່ຍິງຖືພາ ແລະ ແມ່ຍິງທີ່ກຳລັງໃຫ້ນົມລູກ.
- ສະໜັບສະໜູນການໃຫ້ອາຫານທີ່ປອດໄພ ແລະ ພຽງພໍສຳລັບເດັກທີ່ບໍ່ໄດ້ກິນນົມແມ່ ເຊິ່ງມີອາຍຸຕ່ຳກວ່າ 6 ເດືອນ, ພ້ອມທັງຫຼຸດຜ່ອນຄວາມສ່ຽງຕໍ່ການໃຫ້ອາຫານທຽມໃຫ້ໜ້ອຍທີ່ສຸດ ໂດຍຜ່ານການຕິດຕາມ ແລະ ການບັງຄັບໃຊ້ ດຳລັດວ່າດ້ວຍການທົດແທນນົມແມ່ (BMS) ຂອງລັດຖະບານລາວ.
- ການເຮັດວຽກຮ່ວມກັບເພື່ອນຮ່ວມງານດ້ານການສະໜອງ ແລະ ການຂົນສົ່ງເພື່ອພັດທະນາແຜນການສະໜອງ ແລະ ການແຈກຢາຍສຸກເສີນໂດຍອີງໃສ່ການວິເຄາະຄວາມສ່ຽງ ແລະ ປະລິມານວຽກທີ່ຄາດຄະເນໄວ້.
- ຕິດຕາມຜົນກະທົບຂອງເຫດສຸກເສີນຕໍ່ການບໍລິການດ້ານສຸຂະພາບ ແລະ ໂພຊະນາການ, ລວມທັງການປະເມີນປະຊາກອນທີ່ໄດ້ຮັບຜົນກະທົບແລະ ເຜີຍແຜ່ຂ່າວປະຈຳອາທິດ.

- ນຳໃຊ້ການວິເຄາະການສະໜອງ ແລະ ການຂົນສົ່ງ ໂດຍອີງໃສ່ການປະເມີນຄວາມສ່ຽງ ແລະ ກໍລະນີທີ່ຄາດຄະເນໄວ້ ເພື່ອແຈ້ງແຜນການແຈກຢາຍ ແລະ ແຜນການສຸກເສີນ.

### ໄລຍະ 2: 2-4 ອາທິດ

**ສຸຂະພາບ**

- ລະດົມໜ່ວຍງານແພດສາທາລະນະສຸກເຄື່ອນທີ່ ເພື່ອໃຫ້ການບໍລິການດ້ານການແພດ/ສຸຂະພາບ, ລວມທັງການບໍລິການ ສຸຂະພາບຂອງແມ່ ແລະ ເດັກ (MCH) ໃນເຂດທີ່ເຂົ້າເຖິງໄດ້ຍາກ.
- ດຳເນີນການໂຄສະນາການສັກຢາວັກຊີນ[4] ໃຫ້ແກ່ມະຫາຊົນໃຫ້ແກ່ກຸ່ມທີ່ມີຄວາມສ່ຽງ, ລວມທັງກຸ່ມທີ່ຖືກຍົກຍ້າຍ.
- ສະໜອງຊຸດ ຊຸດບໍລິການເບື້ອງຕົ້ນຂັ້ນຕ່ຳ (MISP) ໃນເຂດການວາງແຜນຄອບຄົວທີ່ກຳນົດໄວ້.
- ສະໜັບສະໜູນການເບິ່ງແຍງແມ່ ແລະ ເດັກເກີດໃໝ່ ແລະ ການປ້ອງກັນ ແລະ ການປິ່ນປົວ HIV ເຊິ່ງລວມມີການຖ່າຍເລືອດ ທີ່ເປັນສ່ວນໜຶ່ງຂອງການບໍລິການໃນສູນ.
- ສະໜອງຢາຂ້າລູກນ້ຳຍຸງລາຍ ເພື່ອປ້ອງກັນພະຍາດຕິດຕໍ່ ແລະ ແຈກຢາຍມຸ້ງເຄືອບຢາກັນແມງໄມ້ໃຫ້ກັບຄອບຄົວທີ່ໄດ້ຮັບຜົນກະທົບ ແລະ ຖືກຍົກຍ້າຍ ເພື່ອປ້ອງກັນພະຍາດໄຂ້ຍຸງ ແລະ ໄຂ້ເລືອດອອກ.
- ສະໜອງການຊ່ວຍເຫຼືອດ້ານ ສຸຂະພາບຈິດ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ (MHPSS) ລວມທັງການປະຖົມພະຍາບານດ້ານຈິດໃຈເບື້ອງຕົ້ນ, ການດູແລສຸຂະພາບຈິດທາງຄລີນິກ ແລະ ລະບົບການສົ່ງຕໍ່, ໂດຍອີງຕາມຄວາມຈຳເປັນ.
- ສືບຕໍ່ການໃຫ້ຂໍ້ມູນດ້ານສຸຂະພາບ ແລະ ກິດຈະກຳ IEC ອື່ນໆ ແລະ ແຈກຢາຍອຸປະກອນການສື່ສານຄວາມສ່ຽງກ່ຽວກັບການສົ່ງເສີມສຸຂະອະນາໄມ, SRH ແລະ ການປ້ອງກັນພະຍາດ. ຂໍ້ຄວາມຕ່າງໆຈະຖືກປັບປຸງເປັນປະຈຳ, ອີງຕາມການປະເມີນຄວາມສ່ຽງຢ່າງຕໍ່ເນື່ອງ.
- ສືບຕໍ່ປັບປຸງການເຝົ້າລະວັງພະຍາດ ແລະ ການປະເມີນຄວາມສ່ຽງເພື່ອແຈ້ງຂໍ້ມູນໃນການຕັດສິນໃຈ.
- ສືບຕໍ່ພົບປະ ແລະ ກະກຽມການລາຍງານສະຖານະການລ່າສຸດ ເຊິ່ງເປັນສ່ວນໜຶ່ງຂອງການປະຕິບັດງານຂອງ ສູນປະຕິບັດການສຸກເສີນດ້ານການແພດ ແລະ ສາທາລະນະສຸກ (PHEOC) ແລະ ກຸ່ມສຸຂະພາບ.
- ປະສານງານໄປຍັງ ໜ່ວຍງານແພດສຸກເສີນ (EMT) ແຫ່ງຊາດ ແລະ ສາກົນ, ໂດຍອີງຕາມຄວາມຕ້ອງການ.

**ໂພຊະນາການ**

- ສະໜັບສະໜູນການສ້າງຕັ້ງ ຫຼື ສືບຕໍ່ການດຳເນີນງານຂອງສະຖານທີ່ປອດໄພສຳລັບການປະຕິບັດກ່ຽວກັບການໃຫ້ອາຫານເດັກນ້ອຍ ແລະ ເດັກອ່ອນ (IYCF) ທີ່ເໝາະສົມ ຮ່ວມກັບ ທີ່ປຶກສາ/ແພດໝໍທີ່ຊ່ຽວຊານດ້ານການລ້ຽງລູກດ້ວຍນົມແມ່, ອຸປະກອນ IEC ແລະ ເຄື່ອງມືການສື່ສານ ເພື່ອອະທິບາຍ ແລະ ໃຫ້ຄຳປຶກສາແກ່ຜູ້ເປັນແມ່/ຜູ້ເບິ່ງແຍງ.
- ປ້ອງກັນການແຈກຢາຍ BMS, ຂວດ ແລະ ເຕົ້ານົມ ທີ່ບໍ່ເໝາະສົມ ເພື່ອປົກປ້ອງເດັກທີ່ກິນນົມແມ່ ແລະ ເພື່ອຮັບປະກັນວ່າ ເດັກທີ່ບໍ່ໄດ້ກິນນົມແມ່ ແມ່ນໄດ້ຮັບການເບິ່ງແຍງທີ່ເໝາະສົມ.
- ຈັດຕັ້ງການກວດສອບ ການວັດແທກຮອບກາງແຂນສ່ວນເທິງ (MUAC) ຂອງເດັກນ້ອຍທີ່ມີອາຍຸຕ່ຳກວ່າຫ້າ ເພື່ອລະບຸ ແລະ ການສົ່ງຕໍ່ເດັກນ້ອຍໄປ ສຸກສາລາ/ສະຖານທີ່ປິ່ນປົວທີ່ໃກ້ທີ່ສຸດທີ່ໃຫ້ການຮັກສາ.
- ສ້າງສະຖານທີ່ໃໝ່ ແລະ/ຫຼື ພື້ນທີ່ການຈັດສົ່ງ (ການເບິ່ງແຍງຄົນເຈັບພາຍໃນ, ສະຖານທີ່, ການເຜີຍແຜ່, ຊຸມຊົນ) ໂດຍນຳໃຊ້ສະຖານທີ່ທີ່ມີຢູ່ ເທົ່າທີ່ເປັນໄປໄດ້ເພື່ອເພີ່ມປະສິດທິພາບການເຊື່ອມສານ.

---

[4] ວິທີການ ແລະ ກຸ່ມອາຍຸສຳລັບການໂຄສະນາການສັກຢວັກຊີນຈຳນວນຫຼາຍ ຈະປະຕິບັດຕາມຄຳແນະນຳດ້ານວິຊາການສຳລັບການສັກຢາວັກຊີນທີ່ນຳໃຊ້ ແລະ ອີງໃສ່ການປະເມີນຄວາມສ່ຽງຂອງສະຖານະການ.

- ສະໜັບສະໜູນການປະຖະຂະຖາ ແລະ ການຝຶກອົບຮົມອາສາສະໝັກແພດ ແລະ ແພດໝໍປະຈໍາບ້ານ ກ່ຽວກັບການກວດກາແບບຮີບດ່ວນ ໃຫ້ກັບເດັກທີ່ມີອາຍຸຕໍ່າກວ່າ 5 ປີ ໂດຍໃຊ້ການວັດແທກຮອບກາງແຂນສ່ວນເທິງ (MUAC) ແລະ ການກະກຽມອຸປະກອນຊ່ວຍຊີວິດໃນພື້ນທີ່ຕ່າງໆໄວ້ສໍາຮອງ.
- ຈັດກຽມອຸປະກອນການຊ່ວຍຊີວິດໃນພື້ນທີ່ຕ່າງໆໄວ້ສໍາຮອງ.
- ຈັດຫາການສະໜັບສະໜູນ ຫຼື ການພັດທະນາຄວາມອາດສາມາດ ໂດຍອີງໃສ່ແຜນທີ່ ແລະ ການວິເຄາະ ທີ່ປັບປຸງລ່າສຸດກ່ຽວກັບ ຄວາມອາດສາມາດ ແລະ ການບໍລິການທີ່ປ່ຽນແປງ ເພື່ອການຄຸ້ມຄອງການຂາດສານອາຫານກະທັນຫັນ.
- ສືບຕໍ່ສະໜັບສະໜູນກົນໄກການປະສານງານໃນລະດັບຊາດ ແລະ ແຂວງ.
- ສືບຕໍ່ການພິມເຜີຍແຜ່ຂ່າວປະຈໍາອາທິດ ເພື່ອແບ່ງປັນຂໍ້ມູນ ແລະ ການປູກຈິດສໍານຶກ.

## ໄລຍະ 3: 1-2 ເດືອນ

### ສຸຂະພາບ

- ເປີດຄືນການບໍລິການເບິ່ງແຍງສຸຂະພາບຕາມປົກກະຕິ, ຖ້າເປັນໄປໄດ້
- ສືບຕໍ່ການໃຫ້ຂໍ້ມູນກ່ຽວກັບສຸຂະພາບ ແລະ / ກິດຈະກໍາອື່ນໆຂອງ IEC ແລະ ແຈກຢາຍອຸປະກອນການສື່ສານຄວາມສ່ຽງ ເຊິ່ງລວມມີການສົ່ງເສີມດ້ານສຸຂະອະນາໄມ, SRH ແລະ ການປ້ອງກັນພະຍາດ. ຂໍ້ຄວາມຈະຖືກປັບປຸງເປັນປະຈໍາ, ໂດຍອີງຕາມການປະເມີນຄວາມສ່ຽງຢ່າງຕໍ່ເນື່ອງ.
- ສືບຕໍ່ປັບປຸງການເຝົ້າລະວັງພະຍາດ ນອກຈາກການເຝົ້າລະວັງປົກກະຕິ.
- ສືບຕໍ່ພິມປະ ແລະ ກະກຽມການລາຍງານສະຖານະການລ່າສຸດ ເຊິ່ງເປັນສ່ວນໜຶ່ງຂອງການປະຕິບັດງານຂອງ ສູນປະຕິບັດການສຸກເສີນດ້ານການແພດ ແລະ ສາທາລະນະສຸກ (PHEOC) ແລະ ກຸ່ມສຸຂະພາບ.
- ແຜນການອອກຈາກພື້ນທີ່ ແລະ ສິ່ງມອບການວາງແຜນ ແລະ ການຈັດຕັ້ງປະຕິບັດ EMTs ລະດັບຊາດ ແລະ ສາກົນ, ໂດຍອີງຕາມຄວາມຈໍາເປັນ ແລະ ອີງໃສ່ໝາກຜົນຂອງການປະເມີນຄວາມສ່ຽງ.

### ໂພຊະນາການ

- ສ້າງຕັ້ງສະຖານທີ່/ການບໍລິການໃໝ່ ຫຼື ກົນໄກຕ່າງໆ ສໍາລັບການຊ່ວຍເຫຼືອໃນສະຖານທີ່ມີຄວາມສ່ຽງສູງ ໂດຍໄດ້ຮັບການສະໜັບສະໜູນຈາກການບໍລິການຊຸມຊົນ ແລະ ສຸຂະພາບທີ່ມີຢູ່ແລ້ວ.
- ສະໜອງອາຫານເສີມວິຕາມິນເອ ໃນປະລິມານສູງ ດ້ວຍການສັກຢາວັກຊີນໃຫ້ກັບ ເດັກທີ່ມີອາຍຸລະຫວ່າງ 6 ຫາ 59 ເດືອນ ແລະ ຢາຂ້າແມ່ທ້ອງ ສໍາລັບເດັກນ້ອຍທັງໝົດ ທີ່ມີອາຍຸຕັ້ງແຕ່ 12 ຫາ 59 ເດືອນ ໂດຍຮ່ວມມືກັບພະນັກງານສາທາລະນະສຸກຊຸມຊົນ.
- ສະໜັບສະໜູນຄະນະກໍາມະການປະຕິບັດງານດ້ານວິຊາການ ການໃຫ້ອາຫານເດັກນ້ອຍ ແລະເດັກອ່ອນ (IYCF) ເພື່ອສ້າງຄວາມເຂັ້ມແຂງໃນການຕິດຕາມການບໍລິຈາກອາຫານທົດແທນນົມແມ່ (BMS), ການປະຕິບັດຄໍາແນະນໍາດ້ານວິຊາການ ເພື່ອຮັບມື ແລະ ການພັດທະນານະໂຍບາຍການຮັບມືໂດຍລວມ.
- ສະໜັບສະໜູນການຝຶກອົບຮົມດ້ານວິຊາການຂອງແພດຊຸມຊົນກ່ຽວກັບ ການໃຫ້ອາຫານເດັກນ້ອຍ ແລະເດັກອ່ອນ (IYCF), ການບໍລິການສຸຂະພາບຈະເລີນພັນ ແລະ ແມ່, ການຕິດຕາມ ແລະ ການສົ່ງເສີມການຈະເລີນເຕີບໂຕ ແລະ ການບໍລິການຟື້ນຟູ, ແລະ ອື່ນໆ.
- ເສີມສ້າງລະບົບການຕິດຕາມ ແລະ ລາຍງານທີ່ມີຢູ່ແລ້ວ ເພື່ອຮັບປະກັນວ່າມີການວາງແຜນຢ່າງຄົບຖ້ວນ ແລະ ທັນເວລາ, ການແຈ້ງເຕືອນໄພລ່ວງໜ້າທີ່ຖືກຕ້ອງ, ການພະຍາກອນການສະໜອງ ແລະ ການກວດກາຄືນຜົນຂອງການຈັດຕັ້ງປະຕິບັດແຜນງານ.
- ສືບຕໍ່ເສີມຂະຫຍາຍກົນໄກປະສານງານໃນລະດັບຊາດ ແລະ ແຂວງ ເພື່ອຕອບສະໜອງດ້ານໂພຊະນາການ.
- ສືບຕໍ່ສະໜັບສະໜູນ ແລະ ເຜີຍແຜ່ຂ່າວປະຈໍາອາທິດ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ການປູກຈິດສໍານຶກ.

## ບັນຫາຄອບຄຸມຫຼາຍມິຕິ

**ຮູບແບບການຊ່ວຍເຫຼືອ**

ກິດຈະກຳການຕອບສະໜອງຈະສົ່ງມອບໃນລັກສະນະສິ່ງຂອງ ແລະ ການຊ່ວຍເຫຼືອດ້ານວິຊາການ.

**ການພິຈາລະນາບົດບາດຍິງຊາຍ/ເພດພາວະ, ຄົນພິການ ແລະ ການປົກປ້ອງ**

UNFPA ເປັນຜູ້ນຳພາຮ່ວມ ສຳລັບກຸ່ມປົກປ້ອງ, ສຳລັບພາກສ່ວນສຸຂະພາບ ພວກເຮົາຈະສະໜັບສະໜູນຄວາມພ້ອມຂອງສິນຄ້າສຸຂະພາບຈະເລີນພັນ ໂດຍອີງຈາກການປະເມີນ MISP ແລະ ການບໍລິການຕ່າງໆ ທີ່ໄດ້ມີການເຊື່ອມໂຍງກັບການປົກປ້ອງດ້ານບົດບາດຍິງຊາຍ/ເພດພາວະ ແລ້ວ.

**ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ຄວາມຮັບຜິດຊອບຕໍ່ປະຊາກອນທີ່ໄດ້ຮັບຜົນກະທົບ**

ໂຄງການໂພຊະນາການ ແລະ ສຸຂະພາບຈະຖືກຈັດຕັ້ງປະຕິບັດທັງຢູ່ໃນຊຸມຊົນ ແລະ ສະຖານທີ່ຕ່າງໆ ເຊິ່ງຕ້ອງອາໄສການມີສ່ວນຮ່ວມຂອງຊຸມຊົນ, ການຮັບຮູ້, ການປູກຈິດສຳນຶກ ແລະ ການສົ່ງຕໍ່ ເດັກນ້ອຍທີ່ຂາດສານອາຫານ ເພື່ອໄປປິ່ນປົວ. ມີການຈັດຕັ້ງມາດຕະການທີ່ເໝາະສົມ ເພື່ອຮັບປະກັນໃຫ້ພະນັກງານໄດ້ຮັບຂໍ້ມູນກ່ຽວກັບເງື່ອນ PSEA ແລະ ເພື່ອເຮັດໃຫ້ສະພາບແວດລ້ອມໃນການເຮັດວຽກສຳລັບແມ່ຍິງ ແລະ ເດັກຍິງມີຄວາມປອດໄພຂຶ້ນ ໃນການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ໂພຊະນາການ.

## ສະມາຊິກກຸ່ມ

| | |
|---|---|
| **ຜູ້ນຳພາ ຝ່າຍລັດຖະບານ:** | ກະຊວງສາທາລະນະສຸກ |
| ຜູ້ນຳຮ່ວມ: | ອົງການອະນາໄມໂລກ (WHO) |
| ສະມາຊິກ: | UNICEF, UNFPA, WFP, ອົງການຊ່ວຍເຫຼືອເດັກ, IOM, KOICA, Catholic Relief Services, OXFAM, KOFIH, HPA, Humanity and Inclusion, IFRC, ອົງການສຸພານິມິດສາກົນ |

# ການປົກປ້ອງ, ການປົກປ້ອງເດັກ ແລະ ຄວາມຮຸນແຮງທາງເພດ (GBV)

| ຄົນທີ່ຕ້ອງການ | ປະຊາຊົນທີ່ເປັນເປົ້າໝາຍ | ຄວາມຕ້ອງການ (US$) |
|---|---|---|
| 150,000 | 22,550 | 273.5 ພັນ |

## ຜົນກະທົບຂອງຂະແໜງການ ແລະ ຄວາມຕ້ອງການຮີບດ່ວນທີ່ສຳຄັນ

### ຜົນກະທົບ

- ຄາດຄະເນວ່າຈະກໍ່ໃຫ້ເກີດຄວາມຫຍຸ້ງຍາກ ແລະ ສິ່ງກີດຂວາງ ໃນການເຂົ້າເຖິງການບໍລິການທາງສັງຄົມ ແລະ ຄວາມຮຸນແຮງທາງເພດ (GBV), ເນື່ອງຈາກຄວາມເສຍຫາຍທາງດ້ານກາຍະພາບຕໍ່ສິ່ງອຳນວຍຄວາມສະດວກແລະ ຖະໜົນຫົນທາງ ເຊັ່ນດຽວກັນກັບການຂາດແຄນຜູ້ໃຫ້ບໍລິການໃນເຂດທີ່ໄດ້ຮັບຜົນກະທົບ, ສິ່ງຜົນໃຫ້ບຸກຄົນທີ່ຕ້ອງການຄວາມຊ່ວຍເຫຼືອມີຄວາມສ່ຽງເພີ່ມຫຼາຍຂຶ້ນ.
- ຄວາມສ່ຽງດ້ານຄວາມປອດໄພເພີ່ມຂຶ້ນສຳລັບແມ່ຍິງ, ເດັກຍິງ ແລະ ເດັກຊາຍ, ແລະ ຄົນພິການ ໃນສະຖານທີ່ຍົກຍ້າຍ, ໂດຍສະເພາະຄວາມຮຸນແຮງ, ການລ່ວງລະເມີດ ແລະ ການຂູດຮີດທາງເພດ.
- ການແຍກຈາກຄອບຄົວ, ໂດຍສະເພາະເດັກນ້ອຍທີ່ແຍກອອກຈາກພໍ່ແມ່ ຫຼື ຜູ້ເບິ່ງແຍງ, ສິ່ງຜົນເຮັດໃຫ້ເກີດຄວາມບອບບາງ ແລະ ຄວາມຫຍຸ້ງຍາກທາງດ້ານຈິດໃຈຫຼາຍຂຶ້ນ.
- ການເຂົ້າເຖິງການບໍລິການສຸຂະພາບທາງເພດ ແລະ ການຈະເລີນພັນ (SRH) ຫຼຸດລົງ ເນື່ອງຈາກສິ່ງອຳນວຍຄວາມສະດວກ ແລະ ອຸປະກອນໄດ້ຮັບຄວາມເສຍຫາຍ, ລວມທັງ ການຂົນສິ່ງທີ່ມີອຸປະສັກ ເນື່ອງຈາກເສັ້ນທາງເກີດຄວາມເສຍຫາຍ.
- ພະນັກງານບໍລິການສັງຄົມ ແລະ ອາສາສະໝັກບ້ານ ມີບໍ່ພຽງພໍໃນການບໍລິການທີ່ສຳຄັນໃນເຂດທີ່ຖືກຜົນກະທົບ, ຍ້ອນວ່າເຂົາເຈົ້າເອງໄດ້ກໍໄດ້ຮັບຜົນກະທົບເຊັ່ນກັນ.
- ຄວາມຫຍຸ້ງຍາກທາງຈິດໃຈເພີ່ມຂຶ້ນ ເນື່ອງຈາກຄວາມຄຽດສະສົມຈາກໄພພິບັດ, ການຖືກຍົກຍ້າຍ ແລະ ຄວາມສ່ຽງທີ່ເພີ່ມຂຶ້ນ.
- ສ້າງສະພາບແວດລ້ອມທີ່ເອື້ອອຳນວຍສຳລັບ ການຂູດຮີດ ແລະ ການລ່ວງລະເມີດທາງເພດ (SEA), ການສໍ້ໂກງ ແລະ ການສໍ້ລາດບັງຫຼວງທີ່ເຮັດໃຫ້ເກີດຊ່ອງວ່າງ ແລະ ຜົນກະທົບທີ່ຮ້າຍແຮງຂຶ້ນ.

### ຄວາມຕ້ອງການ

- ຄວາມຕໍ່ເນື່ອງຂອງການເຂົ້າເຖິງການບໍລິການດ້ານຄວາມຮຸນແຮງທາງເພດ (GBV)/ການບໍລິການ CP ແລະ ການບໍລິການປົກປ້ອງທາງສັງຄົມ.
- ສະຖານທີ່ປອດໄພ ແລະ ສະຖານທີ່ພັກທາງເລືອກສຳລັບປະຊາກອນທີ່ຖືກຍົກຍ້າຍ, ລວມທັງສູນອົບພະຍົບທີ່ປອດໄພ/ສິ່ງອຳນວຍຄວາມສະດວກສຳລັບ ແມ່ຍິງ ແລະ ເດັກຍິງ ແລະ ຜູ້ພິການ, ລວມທັງການສົ່ງຕໍ່ເພື່ອຮັບການຊ່ວຍເຫຼືອເບື້ອງຕົ້ນ, ລົດສຸກເສີນ ແລະ ທີ່ພັກອາໄສເພື່ອຄວາມປອດໄພອື່ນໆ.
- ການສົ່ງເສີມ ແລະ ການຈັດບູລິມະສິດດ້ານຄວາມປອດໄພ, ກຽດສັກສີ, ສິດຂອງປະຊາກອນ ແລະ ຄວາມຕ້ອງການດ້ານສຸຂະພາບທາງເພດ ແລະ ການຈະເລີນພັນ ຂອງແມ່ຍິງ ແລະ ເດັກຍິງທີ່ຖືກຍົກຍ້າຍ ໂດຍຜ່ານການສະໜອງການຮັກສາປິ່ນປົວ, ຜະລິດຕະພັນດ້ານສຸຂະອະນາໄມ/ສຸຂາພິບານ ແລະ ເຄື່ອງໃຊ້ສຳລັບການດູແລຂອງແມ່ຍິງ ແລະ ເດັກຍິງ ແລະ ຄົນພິການ.
- ການຈັດຫາການເບິ່ງແຍງທີ່ປອດໄພ ແລະ ຊົ່ວຄາວ ສຳລັບເດັກນ້ອຍທີ່ບໍ່ໄດ້ມານຳຜູ້ປົກຄອງ

- ກຳລັງຄົນທີ່ບໍລິການທາງສັງຄົມທີ່ພຽງພໍ ແລະ ໄດ້ຮັບການຝຶກອົບຮົມເປັນຢ່າງດີ ແລະ ອາສາສະໝັກທ້ອງຖິ່ນ ເພື່ອສະໜອງການບໍລິການຊ່ວຍຊີວິດທີ່ຈຳເປັນ ໃນເຂດທີ່ໄດ້ຮັບຜົນກະທົບ ລວມທັງຜູ້ໃຫ້ຄຳປຶກສາທີ່ໄດ້ຮັບການຝຶກໃນການເປັນມິດກັບເດັກ.

## ກິດຈະກຳຮັບມືທີ່ສຳຄັນ

### ໄລຍະ 1: 0-2 ອາທິດ

- ການຈັດກຽມຊຸດອຸປະກອນຊ່ວຍເຫຼືອສຳລັບແມ່ຍິງ (dignity kits) ໄວ້ລ່ວງໜ້າໃຫ້ແກ່ແມ່ຍິງ ແລະ ເດັກຍິງທີ່ຖືກຍົກຍ້າຍ, ລວມທັງຜູ້ພິການ.
- ການຈັດກຽມການໃຫ້ຄຳປຶກສາດ້ານ ສຸຂະພາບຈິດ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ (MHPSS) ແບບເຄື່ອນທີ ໄປຍັງ ເຂດທີ່ໄດ້ຮັບຜົນກະທົບຈາກນ້ຳຖ້ວມ
- ການແຈກຢາຍອຸປະກອນ IEC ເພື່ອແນະນຳປະຊາກອນທີ່ໄດ້ຮັບຜົນກະທົບກ່ຽວກັບການບໍລິການທີ່ມີປັນຫາ ແລະ ຊ່ອງທາງໂທລະຄົມທາງເລືອກທີ່ພວກເຂົາສາມາດນຳໃຊ້ໄດ້.
- ປັບປຸງເສັ້ນທາງການສົ່ງຕໍ່ ກໍລະນີຄວາມຮຸນແຮງທາງເພດ (GBV) ແລະ ແຜນທີ່ການໃຫ້ບໍລິການໃນແຂວງທີ່ໄດ້ຮັບຜົນກະທົບ.
- ການລິເລີ່ມຂະບວນການສືບຫາຄອບຄົວ ແລະ ການເຕົ້າໂຮມຄອບຄົວຄືນໃໝ່ ເພື່ອຄຸ້ມຄອງກໍລະນີ.
- ການສົ່ງເສີມກ່ຽວກັບສິ່ງອຳນວຍຄວາມສະດວກ WASH ແລະ ສະຖານທີ່ພັກພື້ນ ທີ່ຄຳນຶງເຖິງບົດບາດຍິງຊາຍ/ເພດພາວະ ແລະ ຄອບຄຸມເຖິງຜູ້ພິການ
- ການປະເມີນເພດທີ່ລະອຽດອ່ອນ/ຕອບສະໜອງໄດ້ໄວ ໃນ 72 ຊົ່ວໂມງ ແລະ 2 ອາທິດ - ເຄື່ອງມືຂອງລັດຖະບານ ທີ່ຄອບຄຸມ ພ້ອມ ກັບການປະເມີນດ້ານບົດບາດຍິງຊາຍ/ເພດພາວະເພີ່ມເຕີມອີກ ຖ້າຫາກຈຳເປັນ.

### ໄລຍະ 2: 2-4 ອາທິດ

- ການຈັດຫາສິ່ງອຳນວຍຄວາມສະດວກ WASH ທີ່ແຍກຕາມເພດ ແລະ ສະຖານທີ່ສຳລັບການຍົກຍ້າຍ, ຮັບປະກັນການເຂົ້າເຖິງ ແລະ ການລວມເອົາຜູ້ພິການ, ແລະ ເພີ່ມຄວາມປອດໄພ ເຊິ່ງລວມມີປະຕູລັອກ, ແສງສະຫວ່າງທີ່ພຽງພໍ ແລະ ອື່ນໆ.
- ການເຜີຍແຜ່ເສັ້ນທາງການສົ່ງຕໍ່ ກໍລະນີຄວາມຮຸນແຮງທາງເພດ (GBV) ທີ່ໄດ້ຮັບການປັບປຸງ/ການສ້າງແຜນທີ່ອຸປະກອນ IEC.
- ສ້າງ ພື້ນທີ່ປອດໄພສຳລັບແມ່ຍິງ (WFS), ໂດຍຈັດໃຫ້ມີພະນັກງານທີ່ຮັບຜິດຊອບ GBV ໃນແນວໜ້າ ເປັນເພດຍິງ ທີ່ໄດ້ຮັບການຝຶກອົບຮົມກ່ຽວກັບວິທີການທີ່ເນັ້ນໃສ່ຜູ້ລອດຊີວິດເປັນໃຈກາງ, ສຸຂະພາບຈິດ ແລະ ການຊ່ວຍເລືອທາງຈິດໃຈ (MHPSS) ແລະ ບໍ່ເປັນອັນຕະລາຍ.
- ພັດທະນາ ແລະ ເຜີຍແຜ່ຂໍ້ຄວາມສຳຄັນກ່ຽວກັບຄວາມສ່ຽງດ້ານການປົກປ້ອງ ເຊິ່ງລວມມີ VAC, ກໍລະນີຄວາມຮຸນແຮງທາງເພດ (GBV) ແລະ ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ສະຖານທີ່ ທີ່ຜູ້ລອດຊີວິດ, ເດັກນ້ອຍ ແລະ ຊຸມຊົນ ສາມາດຂໍຫາຄວາມຊ່ວຍເຫຼືອໄດ້.
- ໃຫ້ພະນັກງານແນວໜ້າທີ່ໄດ້ຮັບການຝຶກອົບຮົມທີ່ມີຢູ່ແລ້ວ ເຮັດວຽກກ່ຽວກັບ ຄວາມຕ້ອງການດ້ານການຊ່ວຍເຫຼືອເບື້ອງຕົ້ນທາງຈິດໃຈ (PFA) ແລະ ສຸຂະພາບຈິດ ແລະ ການຊ່ວຍເຫຼືອທາງດ້ານຈິດໃຈ (MHPSS) ໃນສະພາບການສຸກເສີນ ເພື່ອໃຫ້ການຊ່ວຍເຫຼືອໃນລະດັບຊຸມຊົນ.
- ສ້າງຕັ້ງພື້ນທີ່ທີ່ຄຳນຶງເຖິງບົດບາດຍິງຊາຍ/ເພດພາວະ ແລະ ພື້ນທີ່ປອດໄພສຳລັບເດັກນ້ອຍ (CFS) ໂດຍດຳເນີນກິດຈະກຳທີ່ເໝາະສົມກັບອາຍຸ ໃນລັກສະນະທີ່ປອດໄພ ແລະ ບໍ່ຈຳແນກ ໂດຍມີພະນັກງານແນວໜ້າທີ່ໄດ້ຮັບການຝຶກອົບຮົມກ່ຽວກັບການປົກປ້ອງ, PFA ແລະ

MHPSS ເຮັດໜ້າທີ່ໃຫ້ຄໍາປຶກສາ.

### ໄລຍະ 3: 1-2 ເດືອນ

- ການສະໜອງ/ການດໍາເນີນງານຂອງ ພື້ນທີ່ປອດໄພສໍາລັບແມ່ຍິງ (WFS) ແລະ ພື້ນທີ່ປອດໄພສໍາລັບເດັກນ້ອຍ (CFS)
- ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານບໍລິການສັງຄົມ ເພື່ອຮັບປະກັນການບໍລິການທີ່ມີຄຸນນະພາບສໍາລັບປະຊາກອນທີ່ມີຄວາມສ່ຽງທີ່ສຸດ

## ບັນຫາຄອບຄຸມຫຼາຍມິຕິ

### ຮູບແບບການຊ່ວຍເຫຼືອ

ການສະໜອງການຊ່ວຍເຫຼືອ ໂດຍຜ່ານການແຈກຢາຍສິ່ງຂອງ ແລະ ການສະໜອງການບໍລິການຂອງແຜນງານການປ້ອງກັນ.

### ການພິຈາລະນາບົດບາດຍິງຊາຍ/ເພດພາວະ, ຄົນພິການ ແລະ ການປົກປ້ອງ

ບົດບາດຍິງຊາຍ/ເພດພາວະ ແມ່ນຈຸດສຸມສໍາຄັນໃນການພິຈາລະນາຂອງການແຊກແຊງດ້ານ ກໍລະນີຄວາມຮຸນແຮງທາງເພດ (GBV) ທັງໝົດ, ແລະ ຕ້ອງພິຈາລະນາເຖິງປະສົບການທີ່ກ່ຽວຂ້ອງຂອງແມ່ຍິງ ແລະ ເດັກຍິງທີ່ມີຄວາມພິການ, ໂດຍສະເພາະການສະໜອງທີ່ພັກທີ່ເໝາະສົມສໍາລັບການຊ່ວຍຊີວິດ. ການໃຫ້ການຊ່ວຍເຫຼືອທີ່ກ່ຽວຂ້ອງກັບ GBV ແມ່ນນໍາໃຊ້ວິທີການທີ່ເນັ້ນໃສ່ຜູ້ລອດຊີວິດເປັນໃຈກາງ (survivor-centered approach). ການຊ່ວຍເຫຼືອສະເພາະດ້ານ ແລະ ການປະເມີນ ຈະຖືກດໍາເນີນໂດຍຜ່ານທັດສະນະທາງດ້ານເພດພາວະ. ສິ່ງນີ້ຈະລວມເຖິງ, ແຕ່ບໍ່ຈໍາກັດ, ໃນເລີ່ມການປະເມີນໂດຍເນັ້ນໃສ່ການເກັບກໍາຂໍ້ມູນທີ່ແຍກຕາມ ບົດບາດຍິງ-ຊາຍ/ເພດພາວະ, ຄວາມພິການ, ຄອບຄົວທີ່ມີຫົວໜ້າຄອບຄົວເປັນແມ່ຍິງ ຫຼື ຄົວເຮືອນດຽວ. ການຊ່ວຍເຫຼືອຈະນໍາໃຊ້ການອອກແບບສາກົນ ໂດຍພິຈາລະນາເຖິງເພດພາວະ ເຊັ່ນ: ສິ່ງອໍານວຍຄວາມສະດວກ WASH ທີ່ແຍກຕາມເພດ, ແສງສະຫວ່າງທີ່ພຽງພໍ, ປະຕູທີ່ມີລັອກ ແລະ ອື່ນໆ, ເຊັ່ນດຽວກັນກັບ ການລວມເອົາກຸ່ມຄົນພິການ.

ໃນການປົກປ້ອງເດັກ, ກຸ່ມດັ່ງກ່າວຈະເຮັດວຽກຮ່ວມກັບໜ່ວຍງານວິຊາການແບບເຄື່ອນທີ່ ຈາກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MOLSW), ກະຊວງສາທາລະນະສຸກ (MOH) ແລະ ກະຊວງສຶກສາທິການ ແລະ ກິລາ (MoES) ເພື່ອດໍາເນີນການຢ້ຽມຢາມເດັກພິການ (CWD) ຢ່າງເປັນປົກະຕິ. ການບໍລິການປົກກະຕິຈະປະກອບມີ ການກວດສຸຂະພາບ, ການກວດສອບປະເພດຂອງຄວາມພິການ, ການສ້າງແຜນການຟື້ນຟູຊຸມຊົນສໍາລັບເດັກພິການ (CWD), ການໃຫ້ຄໍາປຶກສາທາງດ້ານຈິດໃຈສໍາລັບເດັກນ້ອຍ ແລະ ຄອບຄົວ, ການສົ່ງຕໍ່ການບໍລິການອື່ນໆ, ລວມທັງການສຶກສາ ແລະ ວິທີການລ້ຽງລູກ, ແລະ ການໃຫ້ຂໍ້ມູນຊຸມຊົນກ່ຽວກັບ ສິດທິຂອງເດັກພິການ ແລະ ນໍາໃຊ້ວິທີການທີ່ບໍ່ຈໍາແນກ.

### ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ຄວາມຮັບຜິດຊອບຕໍ່ປະຊາກອນທີ່ໄດ້ຮັບຜົນກະທົບ

ກຸ່ມດັ່ງກ່າວຈະໃຫ້ການຊ່ວຍເຫຼືອດ້ານວິຊາການກ່ຽວກັບການຊ່ວຍເຫຼືອທີ່ກ່ຽວຂ້ອງກັບ ການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA), ແລະ ການຝຶກອົບຮົມຢ່າງຕໍ່ເນື່ອງກ່ຽວກັບ PSEA ໃຫ້ແກ່ສະຫະພັນແມ່ຍິງລາວ (LWU) ພ້ອມທັງ ການຈັດຕັ້ງສາຍດ່ວນແຫ່ງຊາດ ເພື່ອຮັບການລາຍງານທີ່ກ່ຽວຂ້ອງກັບກໍລະນີ ການຂູດຮີດ ແລະ ການລ່ວງລະເມີດທາງເພດ (SEA). ນອກຈາກນັ້ນ, ກຸ່ມດັ່ງກ່າວຈະຝຶກອົບຮົມໃຫ້ແກ່ ຈຸດປະສານງານດ້ານມະນຸດສະທໍາຂອງຄູ່ຮ່ວມຈັດຕັ້ງປະຕິບັດທີ່ຖືກສົ່ງມາເຮັດວຽກໃນໜ່ວຍງານການປະເມີນຄວາມຕ້ອງການ. ຈະມີການດໍາເນີນກິດຈະກໍາການປູກຈິດສໍານຶກຢູ່ໃນລະດັບຊຸມຊົນກ່ຽວກັບ PSEA ແລະ ສິດທິຂອງເຂົາເຈົ້າ ທີ່ຈະໄດ້ຮັບການຊ່ວຍເຫຼືອ ແລະ ການບໍລິການທີ່ບໍ່ມີຄ່າໃຊ້ຈ່າຍ. ເຄື

ຂ່າຍຂັ້ນບ້ານຂອງ LWU ຈະໄດ້ຮັບການເສີມຂະຫຍາຍຫຼາຍຫຼາຍຂຶ້ນ ເພື່ອດໍາເນີນການຕິດຕາມ ແລະ ລາຍງານເຫດການຕ່າງໆ ໂດຍປະສານງານກັບ ກັບຊ່ອງທາງທີ່ອົງການມະນຸດສະທໍາ ແລະ ອົງການສະຫະປະຊາຊາດ ນໍາໃຊ້.

## ສະມາຊິກກຸ່ມ

| | |
|---|---|
| **ຜູ້ນໍາພາ ຝ່າຍລັດຖະບານ**: | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW) |
| ຜູ້ນໍາຮ່ວມ: | UNFPA, UNICEF |
| ສະມາຊິກ: | UNFPA, UNICEF, Humanity & Inclusion, ອົງການແຜລນສາກົນ, Friends International, MoLSW, LWU, Catholic Relief Services, ອົງການສຸພານິມິດ, ອົງການຊ່ວຍເຫຼືອເດັກສາກົນ ແລະ ອົງການແຄຣ໌ສາກົນ |



# ທີ່ພັກອາໄສ ແລະ ສິ່ງຂອງທີ່ບໍ່ແມ່ນອາຫານ (NFI)

| **ຄົນທີ່ຕ້ອງການ** | **ປະຊາຊົນທີ່ເປັນເປົ້າໝາຍ** | **ຄວາມຕ້ອງການ (US$)** |
|---|---|---|
| 150,000 | 60,000 | 5.0M |

## ຜົນກະທົບຂອງຂະແໜງການ ແລະ ຄວາມຕ້ອງການຮີບດ່ວນທີ່ສໍາຄັນ

**ຜົນກະທົບ**

- ປະມານ 40 ເປີເຊັນຂອງ PIN ຫຼື 10,000 ຄົວເຮືອນ ໄດ້ຮັບຄວາມເສຍຫາຍ ຕໍ່ກັບເຮືອນຊານຂອງຕົນ.
- ໃນນັ້ນ, 9,000 ຄົວເຮືອນ ຫຼື 90 ເປີເຊັນ, ເກີດຄວາມເສຍຫາຍເລັກນ້ອຍຕໍ່ເຮືອນຊາຍຂອງຕົນ. ພວກເຂົາເຈົ້າຈະກັບຄືນໄປຫາເຮືອນຂອງຕົນ ໃນ 10 ມື້.
- ໃນທາງກົງກັນຂ້າມ, ປະມານ 1,000 ຄົວເຮືອນ, ຫຼື 10 ເປີເຊັນ, ໄດ້ມີເຮືອນຊານທີ່ໄດ້ຮັບຄວາມເສຍຫາຍທັງໝົດ. ເຂົາເຈົ້າຈະຢູ່ໃນທີ່ພັກອາໄສລວມຂອງຊຸມຊົນ ເປັນເວລາເຖິງ ສາມ ເດືອນ.
- ໄດ້ມີການຈັດຕັ້ງສູນພັກຟື້ນລວມໃຫ້ແກ່ຄອບຄົວທີ່ໄດ້ຮັບຜົນກະທົບທີ່ໄດ້ສູນເສຍບ້ານເຮືອນ ຫລື ເຮືອນຊານທີ່ໄດ້ຮັບຄວາມເສຍຫາຍ. ບັນດາສູນເຫຼົ່ານີ້ລວມມີ ວັດວາອາຮາມ, ໂຮງຮຽນ, ໂຮງໝໍ, ສະໜາມກິລາ ແລະ ໂຄງສ້າງອື່ນໆ ທີ່ມີຢູ່ແລ້ວ ເຊິ່ງຈະຖືກນໍາໃຊ້ເປັນທີ່ພັກອາໄສຊົ່ວຄາວ

ໃຫ້ແກ່ຄອບຄົວທີ່ຖືກຍົກຍ້າຍ. ຄາດຄະເນຄວາມສາມາດສະເລ່ຍຂອງສູນໜຶ່ງ ແມ່ນສາມາດຮອງຮັບຈຳນວນປະຊາຊົນໄດ້ສູງເຖິງ 1,000 ຄົນ ຫຼື 166 ຄອບຄົວ.

**ຄວາມຕ້ອງການ**

- ທີ່ພັກອາໄສລວມຂອງຊຸມຊົນທີ່ຍັງສາມາດນຳໃຊ້ໄດ້ດີ.
- ຊຸດທີ່ພັກສຳລັບຊ່ວຍຊີບໃນທັນທີ, ເຊັ່ນ: ຜ້າກັນຢາງເປື້ອນ, ຜ້າຫົ່ມ ແລະ ຜ້າປູບ່ອນນອນ.
- ສິ່ງຂອງທີ່ບໍ່ແມ່ນອາຫານ (NFIs), ເຊັ່ນ: ເຄື່ອງປຸງອາຫານ, ເຄື່ອງໃຊ້ໃນຄົວເຮືອນ.
- ວັດສະດຸ ແລະ ເຄື່ອງມືໃນການສ້ອມແປງເຮືອນທີ່ເສຍຫາຍ ເພື່ອສະໜັບສະໜູນຄອບຄົວໃຫ້ສາມາດກັບຄືນບ້ານເຮືອນຂອງຕົນເອງໄດ້.
- ຊຸດທີ່ພັກສຳລັບການຟື້ນຟູເຮືອນທີ່ເສຍຫາຍເລັກນ້ອຍ ເຊັ່ນ: ແຜ່ນສັງກະສີສຳລັບມຸງ, ຕະປູ, ເລື່ອຍ ແລະ ໄມ້ຄ້ອນ ແລະ ອຸປະກອນທີ່ຈຳເປັນອື່ນໆ ທີ່ຈຳເປັນສຳລັບການສ້ອມແປງ.
- ສະໜອງການຊ່ວຍເຫຼືອດ້ານວິຊາການ ເພື່ອການປັບຕົວໂດຍອີງຕາມຫຼັກການ "ສ້າງຄືນໃຫ້ໄດ້ດີກວ່າ (Build Back Better)", ລວມທັງແຜນການຕອບສະໜອງດ້ານທີ່ພັກອາໄສ ແລະ ການຕັ້ງຖິ່ນຖານ ແລະ ຍຸດທະສາດການຟື້ນຟູໄລຍະເລີ່ມຕົ້ນ.

## ກິດຈະກຳຮັບມືທີ່ສຳຄັນ

### ໄລຍະ 1: 0-2 ອາທິດ

- ສະໜອງອຸປະກອນສຸກເສີນ ເຊັ່ນ: ສິ່ງຂອງທີ່ບໍ່ແມ່ນອາຫານ (NFIs), ຊຸດທີ່ພັກອາໄສຊົ່ວຄາວ, ແລະ ຊຸດສ້ອມແປງທີ່ພັກອາໄສສຳລັບເຮືອນຊານທີ່ໄດ້ຮັບຄວາມເສຍຫາຍເລັກນ້ອຍ ພ້ອມດ້ວຍຄຳແນະນຳດ້ານວິຊາການທີ່ກ່ຽວຂ້ອງສຳລັບການນຳໃຊ້ຊຸດທີ່ພັກອາໄສທີ່ເໝາະສົມ ແລະ ມີປະສິດທິພາບ.
- ປະສານງານກັບກຸ່ມອື່ນໆໃນການຈັດບູລິມະສິດ ແລະ ກິດຈະກຳ ແລະ ຊັບພະຍາກອນທີ່ອາດຈະທັບຊ້ອນກັນ ເຊັ່ນ: NFIs, ລວມທັງການຕິດຕໍ່ກັບກຸ່ມການສື່ສານຂອງສະຫະປະຊາຊາດ (UNCG).
- ເຜີຍແຜ່ຮູບແບບຈຳລອງທີ່ພັກອາໄສມາດຕະຖານ.
- ກຳນົດສະຖານທີ່ ແລະ ເລີ່ມຕົ້ນການວາງແຜນ ແລະ ການລົງທະບຽນສະຖານທີ່, ໂດຍອີງຕາມຄວາມຈຳເປັນ.
- ຈັດສັນຜູ້ປະສານງານດ້ານທີ່ພັກອາໄສ ແລະ ໜ່ວຍງານວິຊາການ ເພື່ອສະໜັບສະໜູນດ້ານການປະສານງານ ແລະ ການສ້ອມແປງທີ່ພັກອາໄສຕາມລຳດັບ.

### ໄລຍະ 2: 2-4 ອາທິດ

- ແຈກຢາຍອຸປະກອນ ແລະ ເຄື່ອງມືກ່ຽວກັບທີ່ພັກອາໄສ ເພີ່ມເຕີມ, ຕາມຄວາມຕ້ອງການ, ໂດຍອີງໃສ່ການຕິດຕາມຄວາມຄືບໜ້າຂອງການແຈກຢາຍໃນເບື້ອງຕົ້ນ, ຕາມຄວາມຈຳເປັນ.
- ກະກຽມການຫັນປ່ຽນຈາກໄລຍະການຊ່ວຍເຫຼືອສຸກເສີນ ໄປສູ່ໄລຍະການຊ່ວຍເຫຼືອໄລຍະກາງ. ວາງແຜນຍຸດທະສາດທີ່ພັກອາໄສ ER ກັບລັດຖະບານ ແລະ ປະສານສົມທົບກັບກຸ່ມອື່ນໆ ເພື່ອເພີ່ມຄວາມທົນທານຂອງເຮືອນຂອງ PIN ຕໍ່ກັບຄວາມສ່ຽງໄພນ້ຳຖ້ວມ.

### ໄລຍະ 3: 1-2 ເດືອນ

- ແຈກຢາຍຊຸດທີ່ພັກອາໄສ, ວັດສະດຸ ແລະ ເຄື່ອງມື ໂດຍອີງໃສ່ຄວາມຕ້ອງການເພີ່ມເຕີມ ທີ່ໄດ້ລະບຸໄວ້.
- ກຳນົດສະຖານທີ່ ແລະ ການອອກແບບທີ່ພັກອາໄສໄລຍະຂ້າມຜ່ານ ສຳລັບຄອບຄົວທີ່ບໍ່ສາມາດກັບຄືນໄປບ້ານເຮືອນຂອງຕົນເອງໄດ້ໃນທັນທີ ໂດຍການປະສານສົມທົບກັບລັດຖະບານ.
- ສະໜັບສະໜູນລັດຖະບານ ເພື່ອສ້າງຍຸດທະສາດທາງອອກ ຮ່ວມກັບກຸ່ມອື່ນໆ ແລະ ກຳນົດວິທີແກ້ໄຂດ້ານທີ່ພັກອາໄສທີ່ໝັ້ນຄົງໃຫ້ແກ່ຄອບຄົວທີ່ຖືກຍົກຍ້າຍ.

## ການພິຈາລະນາທີ່ສຳຄັນ

### ຮູບແບບການຊ່ວຍເຫຼືອ

ຮູບແບບການຊ່ວຍເຫຼືອຈະອີງໃສ່ການແຈກຢາຍການຊ່ວຍເຫຼືອດ້ານມະນຸດສະທຳໃນລັກສະນະສິ່ງຂອງ ແລະ ຮັບປະກັນການຊ່ວຍເຫຼືອດ້ານເຕັກນິກທີ່ເປັນປົກກະຕິໃຫ້ແກ່ປະຊາຊົນຜູ້ໄດ້ຮັບຜົນກະທົບ.

### ການພິຈາລະນາເພດພາວະ, ຜູ້ພິການ ແລະ ການປົກປ້ອງ

ການຊ່ວຍເຫຼືອດ້ານທີ່ພັກອາໄສຈະຈັດບຸລິມະສິດເປັນຄອບຄົວ ໂດຍອີງຕາມເງື່ອນໄຂຄວາມບອບບາງ ເຊິ່ງລວມມີ ຄວາມພິການ (PWD), ຄົວເຮືອນທີ່ມີຫົວໜ້າຄອບຄົວເປັນແມ່ຍິງ ແລະ ເດັກນ້ອຍທີ່ມີຄວາມສ່ຽງ. ການຈັດບຸລິມະສິດແມ່ນຈະອີງໃສ່ເຄື່ອງມືການປະເມີນ "ຕາມເພດພາວະ" ເພື່ອຮັບປະກັນຄວາມເໝາະສົມຂອງການຊ່ວຍເຫຼືອ. ການອອກແບບເຮືອນ ແລະ ໂຄງສ້າງພື້ນຖານການບໍລິການອ້ອມຂ້າງ ຈະຖືກສ້າງໂດຍສະຖາ ປະນິກ ແລະ ວິສະວະກອນທີ່ມີປະສົບການ ພ້ອມກັບກຸ່ມອື່ນໆ ເພື່ອຮັບປະກັນວ່າຄົນພິການສາມາດເຂົ້າເຖິງສິ່ງເຫຼົ່ານີ້ໄດ້.

### ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ຄວາມຮັບຜິດຊອບຕໍ່ປະຊາກອນທີ່ໄດ້ຮັບຜົນກະທົບ

ສະມາຊິກກຸ່ມ ລວມທັງຄູ່ຮ່ວມຈັດຕັ້ງປະຕິບັດ ແລະ ຜູ້ຊ່ຽວຊານທີ່ໄດ້ຮັບມອບໝາຍ ຈະໄດ້ຮັບການແນະນຳກ່ຽວກັບຫຼັກການຂອງ PSEA ໂດຍນຳໃຊ້ວິທີການ PSEA ຂອງອົງການຂອງຕົນ ຫຼື ຜ່ານນະໂຍບາຍຂອງ UNHCR ກ່ຽວກັບການກະກຽມຄວາມພ້ອມ ແລະ ການຮັບມືສຸກເສີນ.[5] ໂດຍອີງຕາມຄວາມຈຳເປັນ. ຊຸມຊົນທ້ອງຖິ່ນ ເຊັ່ນ: ແມ່ຍິງ ແລະ ເດັກຍິງ ຕະຫຼອດຮອດ ນາຍບ້ານ, ກໍ່ຈະມີສ່ວນຮ່ວມໃນການສົນທະນາ, ການປະເມີນ ຫຼື ກິດຈະກຳຕ່າງໆ ເພື່ອດຳເນີນໂຄງການດ້ານທີ່ພັກອາໄສຂອງຊຸມຊົນ. ວິທີນີ້ ການໃຫ້ການຊ່ວຍເຫຼືອໂດຍກຸ່ມ ແມ່ນຈະພິຈາລະນາເຖິງທັດສະນະຂອງ "ຜູ້ຮັບ" ຂອງເຂົາເຈົ້າ ແທນທີ່ການກຳນົດວ່າ ສະມາຊິກຂອງກຸ່ມຄິດວ່າຄວນມອບສິ່ງໃດໃຫ້ແກ່ຄອບຄົວທີ່ໄດ້ຮັບຜົນກະທົບ.

## ສະມາຊິກກຸ່ມ

| | |
|---|---|
| ຜູ້ນຳພາຝ່າຍລັດຖະບານ: | ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ແລະ ກົມເຄຫາ ແລະ ຜັງເມືອງ (DHUP) |
| ຜູ້ນຳຮ່ວມ: | ອົງການສະຫະປະຊາຊາດ ດ້ານເຄຫາສະຖານ (UN-Habitat) |

[5] https://emergency.unhcr.org/emergency-preparedness/emergency-policy/unhcr-policy-emergency-preparedness-and-response.

| | |
|---|---|
| ສະມາຊິກ: | ອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ (IOM), UNOPS, ແຄຣ໌, ອົງການກາແດງແຫ່ງຊາດລາວ (Lao Red Cross Society), ອົງການແຜນສາກົນ |

# ນໍ້າ, ສຸຂາພິບານ ແລະ ສຸຂະອະນາໄມ (WASH)

| ຄົນທີ່ຕ້ອງການ | ປະຊາຊົນທີ່ເປັນເປົ້າໝາຍ | ຄວາມຕ້ອງການ (US$) |
|---|---|---|
| 150,000 | 100,000 | 3.1ລ້ານ |

## ຜົນກະທົບຂອງຂະແໜງການ ແລະ ຄວາມຕ້ອງການຮີບດ່ວນທີ່ສຳຄັນ

### ຜົນກະທົບ

- ການປົນເປື້ອນຂອງນໍ້າໃຕ້ດິນ ແລະ ນໍ້າເທິງໜ້າດິນ.
- ນໍ້າສ້າງບ້ານທີ່ຖືກນໍ້າຖ້ວມ, ທໍ່ນໍ້າປະປາໄດ້ຮັບຄວາມເສຍຫາຍ.
- ບັນຫາຂອງຄຸນນະພາບຂອງນໍ້າ ເຊິ່ງສ້າງຄວາມຫຍຸ້ງຍາກໃນການຕົ້ມນໍ້າສຳລັບການດື່ມກິນ.
- ຫ້ອງນໍ້າໃນຄົວເຮືອນບໍ່ສາມາດນຳໃຊ້ໄດ້ ເນື່ອງຈາກຖືກນໍ້າຖ້ວມ ແລະ ອ່າງເກັບນໍ້າເປື້ອນທີ່ເຕັມລົ້ນ.
- ຂາດການເຂົ້າເຖິງພື້ນຖານໂຄງລ່າງ WASH ໃນໂຮງຮຽນ ແລະ ສຸກສາລາ.
- ສຸຂະອະນາໄມ ແລະ ສຸຂະພາບສ່ວນບຸກຄົນ ທີ່ເສື່ອມໂຊມລົງ
- ບໍ່ສາມາດເຂົ້າເຖິງຊຸດອະນາໄມສ່ວນຕົວສຳລັບແມ່ຍິງ ແລະ ເດັກຍິງ.
- ບໍ່ມີການເກັບຂີ້ເຫຍື້ອ ແລະ ສະຖານທີ່ສຳລັບຖິ້ມຂີ້ເຫຍື້ອ.
- ເພີ່ມຄວາມສ່ຽງຂອງພະຍາດຕິດເຊື້ອພະຍາດຈາກແມງໄມ້ຕ່າງໆ ເຊັ່ນ: ໄຂ້ຍຸງ, ໄຂ້ເລືອດອອກ, ແລະ ອື່ນໆ.
- ເພີ່ມຄວາມສ່ຽງຂອງພະຍາດທີ່ເກີດຈາກນໍ້າ ເຊັ່ນ: ພະຍາດຖອກທ້ອງ, ໂລກອະຫິວາ, ໄຂ້ທໍລະພິດ (typhoid), ແລະ ອື່ນໆ.
- ພື້ນທີ່ຫ່າງໄກສອກຫຼີກ ທີ່ຍັງບໍ່ສາມາດເຂົ້າໄດ້ ເນື່ອງຈາກນໍ້າຖ້ວມຂັງ ເຮັດໃຫ້ເປັນຈຳກັດໃນການຕິດຕາມສະຖານະການ ແລະ ການແຈກຢາຍເຄື່ອງຊ່ວຍເຫຼືອ.

### ຄວາມຕ້ອງການ

ຢູ່ໃນຄົວເຮືອນ, ໂຮງຮຽນ ແລະ ສຸກສາລາ:

- ເຂົ້າເຖິງນໍ້າດື່ມທີ່ສະອາດປອດໄພ.

- ການເຂົ້າເຖິງສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ເໝາະສົມ ລວມທັງສິ່ງອຳນວຍຄວາມສະດວກທີ່ແຍກຕາມເພດ, ເຂົ້າເຖິງຄົນພິການ.
- ການເຂົ້າເຖິງການລ້າງມືດ້ວຍສະບູ່ໃນສະຖານທີ່ສຳຄັນ ເຊັ່ນ: ຫ້ອງນ້ຳ, ພື້ນທີ່ກະກຽມອາຫານ, ແລະ ອື່ນໆ.
- ການປະຕິບັດສຸຂະອະນາໄມທີ່ດີ ແລະ ການເຂົ້າເຖິງສິ່ງຂອງສຸອະນາໄມ ລວມທັງຜະລິດຕະພັນອະນາໄມສຳລັບຊ່ວງມີປະຈຳເດືອນ.
- ປະເມີນຄຸນນະພາບນ້ຳ, ຄວາມປອດໄພ, ແລະ ໝັ້ນຄົງ.
- ການເກັບຂີ້ເຫຍື້ອ ແລະ ຖັງຂີ້ເຫຍື້ອ.

## ກິດຈະກຳຮັບມືທີ່ສຳຄັນ

### ໄລຍະ 1: 0-2 ອາທິດ

- ການສະໜອງນ້ຳດື່ມທີ່ສະອາດປອດໄພ
  - ການຈັດຫາການລົດບັນທຸກແຈກຢາຍນ້ຳ
  - ການບຳບັດນ້ຳໃນຄົວເຮືອນ ແລະ ການເກັບຮັກສາດ້ວຍເມັດ ຄລໍລີນ (chlorine) ຫຼື ອາຄົວ (Aqua tabs).
  - ການສ້ອມແປງເລັກນ້ອຍ ບັນດາທໍ່ນ້ຳທີ່ສາມາດແກ້ໄຂໄດ້ງ່າຍ.
  - ການຕິດຕາມຄຸນນະພາບນ້ຳຂອງແຫຼ່ງນ້ຳ ແລະ ຈຸດນຳໃຊ້ນ້ຳ.
- ການສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ເໝາະສົມ
  - ການກໍ່ສ້າງຫ້ອງນ້ຳຊົ່ວຄາວ ລວມທັງ ສິ່ງອຳນວຍຄວາມສະດວກທີ່ແຍກຕາມເພດ, ຜູ້ພິການສາມາດເຂົ້າເຖິງ ແລະ ໃຫ້ມີຄວາມປອດໄພ ແລະ ແສງສະຫວ່າງພຽງພໍ.
  - ການຈັດຫາສິ່ງອຳນວຍຄວາມສະດວກສຳລັບການລ້າງມືຊົ່ວຄາວດ້ວຍສະບູ່.
- ສົ່ງເສີມການປະຕິບັດສຸຂະອະນາໄມທີ່ດີ
  - ການໂຄສະນາເຜີຍແຜ່ ແລະ ສົ່ງເສີມສຸຂະພາບ ແລະ ສຸຂະອະນາໄມ ຕ້ານການຂັບຖ່າຍໃນສະຖານທີ່ເປີດ.
  - ການແຈກຢາຍເຄື່ອງອະນາໄມ ລວມທັງຜະລິດຕະພັນອະນາໄມສຳລັບຊ່ວງມີປະຈຳເດືອນ.
- ຫຼຸດຜ່ອນຄວາມສ່ຽງດ້ານສຸຂະພາບສິ່ງແວດລ້ອມ
  - ການຈັດຫາຖັງຂີ້ເຫຍື້ອ, ຖົງຂີ້ເຫຍື້ອຊົ່ວຄາວ ແລະ ການຫຼຸດຜ່ອນຂີ້ເຫຍື້ອ.
  - ການຄຸ້ມຄອງການຄວບຄຸມພະຍາດຕິດຕໍ່ຈາກແມງໄມ້, ການກຳຈັດ ແລະ ຮົມຄວັນໄລ່ແມງໄມ້ຕ່າງໆ.

### ໄລຍະ 2: 2-4 ອາທິດ

- ສືບຕໍ່ສະໜອງນ້ຳດື່ມທີ່ສະອາດປອດໄພ.
  - ການສະໜອງນ້ຳດື່ມທີ່ສະອາດປອດໄພ ແລະ ອຸປະກອນບຳບັດນ້ຳໃຫ້ກັບຊຸມຊົນທີ່ມີແຫຼ່ງນ້ຳດື່ມທີ່ບໍ່ປອດໄພ.
  - ການເຊື່ອມຕໍ່ທໍ່ການສະໜອງນ້ຳຄືນໃໝ່ໃຫ້ແກ່ຊຸມຊົນ
  - ການທຳຄວາມສະອາດນ້ຳສ້າງ, ການຟື້ນຟູນ້ຳບາດານ, ການຂ້າເຊື້ອໃນບໍ່ນ້ຳບາດານ, ການຟື້ນຟູລະບົບນ້ຳປະປາ, ຫຼື ການກໍ່ສ້າງນ້ຳສ້າງແຫ່ງໃໝ່.

- ສືບຕໍ່ສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ເໝາະສົມ.
    - ການຈັດຫາຫ້ອງນ້ຳ ເຊິ່ງລວມມີ ສິ່ງອຳນວຍຄວາມສະດວກທີ່ແຍກຕາມເພດ, ຄົນພິການສາມາດເຂົ້າເຖິງໄດ້ ແລະ ມີຄວາມປອດໄພ ແລະ ແສງສະຫວ່າງທີ່ພຽງພໍ.
    - ການຈັດຫາສິ່ງອຳນວຍຄວາມສະດວກສຳລັບການລ້າງມືດ້ວຍສະບູ
- ສືບຕໍ່ສົ່ງເສີມການປະຕິບັດສຸຂະອະນາໄມທີ່ດີ
    - ການໂຄສະນາເຜີຍແຜ່ ແລະ ສົ່ງເສີມສຸຂະພາບ ແລະ ສຸຂະອະນາໄມ ດ້ານການຂັບຖ່າຍໃນສະຖານທີ່ເປີດ.

### ໄລຍະ 3: 1-2 ເດືອນ

- ສືບຕໍ່ສະໜອງນ້ຳດື່ມທີ່ສະອາດປອດໄພ
    - ການຟື້ນຟູພື້ນຖານໂຄງລ່າງການສະໜອງນ້ຳປະປາ ລວມທັງນ້ຳສ້າງ ແລະ ຈຸດເຊື່ອມຕໍ່ລະບົບການແຈກຢາຍນ້ຳ.
    - ການສ້ອມແປງລະບົບການສະໜອງນ້ຳ ເຊັ່ນ: ລະບົບສະໜອງນ້ຳທີ່ໃຊ້ແຮງໂນ້ມຖ່ວງ, ບໍ່ຂຸມ, ຂຸດເຈາະນ້ຳສ້າງ ແລະ ເຄືອຂ່າຍລະບົບນ້ຳປະປາ.
    - ການວາງແຜນຄວາມປອດໄພ ແລະ ຄວາມໝັ້ນຄົງຂອງລະບົບນ້ຳ.
- ສືບຕໍ່ສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ເໝາະສົມ.
    - ສ້ອມແປງຫ້ອງນ້ຳແບບຖາວອນພາຍໃນຊຸມຊົນ, ພ້ອມດ້ວຍຄວາມອາດສາມາດໃນການຍົກລະດັບຈາກສຸຂາພິບານຂັ້ນພື້ນຖານ ໄປສູ່ສຸຂາພິບານທີ່ປອດໄພ.
- ສືບຕໍ່ສົ່ງເສີມການປະຕິບັດສຸຂະອະນາໄມທີ່ດີ.
    - ການໂຄສະນາເຜີຍແຜ່ ແລະ ສົ່ງເສີມສຸຂະພາບ ແລະ ສຸຂະອະນາໄມດ້ານການຂັບຖ່າຍໃນສະຖານທີ່ເປີດ.
- ການສ້ອມແປງສິ່ງອຳນວຍຄວາມສະດວກ WASH ໃນໂຮງຮຽນ ແລະ ສຸກສາລາ ໃນໄລຍະຂ້າມຜ່ານໄປສູ່ໄລຍະການຟື້ນຟູ, ໂດຍການຮ່ວມມືກັບກຸ່ມການສຶກສາ ແລະ ກຸ່ມສຸຂະພາບ.

## ບັນຫາຄອບຄຸມຫຼາຍມິຕິ

### ຮູບແບບການຊ່ວຍເຫຼືອ

WASH ສຸກເສີນ ແມ່ນໝາຍເຖິງການສະໜອງຄວາມຕ້ອງການ WASH ພື້ນຖານແລະ ທັນທີທີ່ຈຳເປັນ ເພື່ອຮັບປະກັນການມີຊີວິດລອດຂອງຜູ້ຖືກເຄາະຮ້າຍຈາກໄພພິບັດ, ເຊິ່ງລວມມີການແກ້ໄຂການຮັບມືແບບຮີບດ່ວນ ເຊັ່ນ: ການກະກຽມລາຍການສິ່ງຂອງທີ່ຈຳເປັນໄວ້ລ່ວງໜ້າ. ໃນກໍລະນີສຸກເສີນ, ອຸປະກອນຕ່າງໆທີ່ກ່ຽວຂ້ອງກັບ WASH ຈະສາມາດນຳໄປໃຊ້ໄດ້ທັນທີເພື່ອປ້ອງກັນການແຜ່ລະບາດຂອງພະຍາດ, ເຊັ່ນ: ນ້ຳສະອາດ, ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ, ສິ່ງອຳນວຍຄວາມສະດວກດ້ານລ້າງມືຊື່ວຄາວດ້ວຍສະບູ, ແລະ ຊຸດອະນາໄມ. ອີງຕາມເຫດຜົນຂ້າງເທິງ ແລະ ການຮຽນຮູ້ຈາກເຫດການໄພພິບັດທີ່ຜ່ານມາ, ຮູບແບບການຊ່ວຍເຫຼືອທີ່ເໝາະສົມທີ່ສຸດສຳລັບການຊ່ວຍເຫຼືອດ້ານ WASH ແມ່ນວິທີການໃນລັກສະນະທີ່ເປັນສິ່ງຂອງ. ການຊ່ວຍເຫຼືອທີ່ເປັນເງິນສົດ ແລະ ໃບແທນເງິນສົດຕ່າງໆນັ້ນ (CVAs) ຈະຖືກນຳມາໃຊ້ເປັນທາງເລືອກອື່ນ ຖ້າຫາກສິນຄ້າທີ່ຕ້ອງການມີຢູ່ໃນຕະຫຼາດ.

### ການພິຈາລະນາເພດພາວະ, ຜູ້ພິການ ແລະ ການປົກປ້ອງ

ໃນການໃຫ້ຄວາມຊ່ວຍເຫຼືອດ້ານ WASH ສຸກເສີນ, ທຸກກຸ່ມຊຸມຊົນທີ່ໄດ້ຮັບຜົນກະທົບ, ລວມທັງແມ່ຍິງ, ເດັກຍິງ, ເດັກຊາຍ, ຜູ້ຊາຍ, ຄົນພິການ, ຜູ້ສູງອາຍຸ, ແລະ ກຸ່ມຄົນດ້ອຍໂອກາດອື່ນໆ, ຕ້ອງມີໂອກາດເທົ່າທຽມກັນໃນການເຂົ້າເຖິງ ແລະ ໄດ້ຮັບຜົນປະໂຫຍດຈາກການບໍລິການດ້ານ ນໍ້າ, ສຸຂາພິບານ, ແລະ ການສົ່ງເສີມສຸຂະອະນາໄມ. ຕົວຢ່າງ, ກ່ອນທີ່ຈະສ້າງຫ້ອງນໍ້າ, ກຸ່ມຈະຕ້ອງຂໍຂໍ້ມູນຈາກ ແມ່ຍິງ, ເດັກຍິງ, ແລະ ຜູ້ພິການ (PWDs). ອົງການຈັດຕັ້ງຢູ່ໃນຊຸມຊົນ ແລະ ກຸ່ມ PWDs ທີ່ບໍ່ເປັນທາງການ ຈະຕ້ອງມີສ່ວນຮ່ວມໃນການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການຕ່າງໆທີ່ກ່ຽວກັບ WASH.

**ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ຄວາມຮັບຜິດຊອບຕໍ່ປະຊາກອນທີ່ໄດ້ຮັບຜົນກະທົບ**

ແມ່ຍິງ ແລະ ຜູ້ຊາຍ ມີສ່ວນຮ່ວມໃນການກໍານົດສະຖານທີ່ປອດໄພ ແລະ ສາມາດເຂົ້າເຖິງແຫຼ່ງນໍ້າ ແລະ ສິ່ງອໍານວຍຄວາມສະດວກດ້ານສຸຂາພິບານ. ນອກຈາກນັ້ນ, ສິ່ງອໍານວຍຄວາມສະດວກ ແລະ ຈຸດຮັບນໍ້າ ຈະໄດ້ຮັບການຕິດຕາມ ເພື່ອຮັບປະກັນວ່າມີຄວາມສະອາດປອດໄພ ແລະ ສາມາດເຂົ້າເຖິງໄດ້ (ມີລັອກ, ມີແສງສະຫວ່າງພຽງພໍ, ແລະ ການເຂົ້າເຖິງທີ່ປອດໄພ). ຕົວຢ່າງເຊັ່ນ, ໂດຍຮ່ວມກັບກຸ່ມປົກປ້ອງ, ໃຫ້ມີການປູກຈິດສໍານຶກກ່ຽວກັບການລາຍງານ ແລະ ກົນໄກການຮັບມື ທີ່ລວມເຂົ້າໄວ້ຢູ່ໃນກິດຈະກໍາສົ່ງເສີມສຸຂະອະນາໄມ.

ການເກັບກໍາຂໍ້ມູນເບື້ອງຕົ້ນ, ການອອກແບບການຮັບມື, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນ ລ້ວນແລ້ວແຕ່ແມ່ນຈຸດທີ່ສະມາຊິກຊຸມຊົນສາມາດ ແລະ ຄວນທີ່ຈະມີສ່ວນຮ່ວມໃນການຮັບມືຕໍ່ກັບໄພພິບັດ.

## ສະມາຊິກກຸ່ມ

| | |
|---|---|
| ຜູ້ນໍາພາຝ່າຍລັດຖະບານ: | ກະຊວງສາທາລະນະສຸກ (MoH) |
| ຜູ້ນໍາຮ່ວມ: | UNICEF |
| ສະມາຊິກ: | ກົມນໍ້າປະປາ (ນໍ້າປະປາ), ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT), ສູນອະນາໄມສິ່ງແວດລ້ອມ ແລະ ຈັດຫານໍ້າສະອາດ (ນໍ້າສະອາດ), ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW), ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ , ອົງການກາແດງລາວ, WHO, UN-Habitat, ອົງການຊ່ວຍເຫຼືອເດັກ, ອົງການສຸພານິມິດສາກົນ, ອົງການແຜລນສາກົນ, ອົງການແຄຣ໌ສາກົນ, Catholic Relief Services |

# ການຟື້ນຟູໄລຍະເລີ່ມຕົ້ນ

| ຄົນທີ່ຕ້ອງການ | ປະຊາຊົນທີ່ເປັນເປົ້າໝາຍ | ຄວາມຕ້ອງການ (US$) |
|---|---|---|
| 150,000 | 30,000 | 1,450,000 |

## ຜົນກະທົບຂອງຂະແໜງການ ແລະ ຄວາມຕ້ອງການຮີບດ່ວນທີ່ສຳຄັນ

### ຜົນກະທົບ

- ລັດຖະບານບໍ່ມີຄວາມສາມາດພຽງພໍໃນການວາງແຜນການຟື້ນຟູໄລຍະເລີ່ມຕົ້ນຍ້ອນວ່າຊັບພະຍາກອນໃນຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງໄດ້ປະຕິບັດໜ້າທີ່ໃນວຽກງານດ້ານມະນຸດສະທຳ.
- ພື້ນຖານໂຄງລ່າງຊຸມຊົນໄດ້ຮັບຄວາມເສຍຫາຍ, ລວມທັງ ເສັ້ນທາງທີ່ສາມາດເຂົ້າເຖິງໄດ້, ສິ່ງອຳນວຍຄວາມສະດວກສາທາລະນະ ທີ່ສາມາດນຳໃຊ້ເປັນສູນອົບພະຍົບ, ແລະ ສິ່ງອຳນວຍຄວາມສະດວກດ້ານຊົນລະປະທານ.
- ວຽກເຮັດງານທຳທີ່ສູນຫາຍໄປເນື່ອງຈາກໄພນ້ຳຖ້ວມພື້ນທີ່ກະສິກຳ, ພື້ນຖານໂຄງລ່າງໄດ້ຮັບຄວາມເສຍຫາຍ, ຂາດການເຂົ້າເຖິງ, ແລະ ຕ່ອງໂສ້ການສະໜອງຖືກຕັດຂາດ. ຊີວິດການເປັນຢູ່ຂອງຄອບຄົວທີ່ໄດ້ຮັບຜົນກະທົບ ຕົກຢູ່ໃນສະພາບການອັນຕະລາຍ.
- ໄພນ້ຳຖ້ວມ ແລະ ດິນເຈື່ອນ ອາດຈະເພີ່ມຄວາມສ່ຽງຕໍ່ການສຳຜັດຖືກລະເບີດບໍ່ທັນແຕກ (UXO).

### ຄວາມຕ້ອງການ

- ການຊ່ວຍເຫຼືອການດຳລົງຊີວິດຂອງຄອບຄົວ
- ການຈ້າງງານໃນກໍລະນີສຸກເສີນ
- ກິດຈະກຳກະສິກຳທີ່ໃຫ້ຜົນຜະລິດໄວ ເຊັ່ນ: ສວນຜັກ ແລະ ການລ້ຽງສັດປີກ.
- ການຟື້ນຟູພື້ນຖານໂຄງລ່າງຂອງຊຸມຊົນເຊັ່ນ: ເສັ້ນທາງຊຸມຊົນ, ສູນຟື້ນຟູ, ແລະ ສິ່ງອຳນວຍຄວາມສະດວກໃນຊົນລະປະທານຂະໜາດນ້ອຍ.
- ການຈັດຕັ້ງການທຳຄວາມສະອາດພື້ນທີ່ກະສິກຳ.
- ການໃຫ້ການສຶກສາກ່ຽວກັບຄວາມສ່ຽງຈາກລະເບີດບໍ່ທັນແຕກ, ການສຳຫຼວດ, ການເກັບກູ້, ແລະ ການເກັບກູ້ລະເບີດສຸກເສີນ (EOD).
- ສະໜັບສະໜູນການປະສານງານ ແລະ ການວາງແຜນສຳລັບກິດຈະກຳການຟື້ນຟູ.

## ກິດຈະກຳຮັບມືທີ່ສຳຄັນ

### ໄລຍະ 1: 0-2 ອາທິດ

- ໃຫ້ການສະໜັບສະໜູນດ້ານວິຊາການ ໂດຍຜ່ານການນຳສົ່ງຜູ້ຊ່ຽວຊານແບບຮີບດ່ວນ ເຊັ່ນ: ພະນັກງານຮັບມືເຫດສຸກເສີນ ແລະ ທີ່ປຶກສາຕົວຢ່າງ ER, ການສື່ສານ, ທີ່ປຶກສາດ້ານຄວາມປອດໄພພາກສະໜາມ ແລະ ການລະດົມຊັບພະຍາກອນ.
- ການປະເມີນຄວາມຕ້ອງການແບບຮີບດ່ວນ ແລະ ການລະດົມການຊ່ວຍເຫຼືອ ແລະ ກູ້ໄພ ໃຫ້ກັບປະຊາຊົນທີ່ໄດ້ຮັບຜົນກະທົບ.

### ໄລຍະ 3: 1-2 ເດືອນ

- ການຕອບສະໜອງແບບປະສົມປະສານດ້ວຍເງິນສົດ ແລະ ສິ່ງຂອງ ເພື່ອຟື້ນຟູຈາກວິກິດ.
- ຟື້ນຟູ ແລະ ສ້ອມແປງພື້ນຖານໂຄງລ່າງ.
- ສະໜອງເງິນຊ່ວຍເຫຼືອລ້າທີ່ບໍ່ມີເງື່ອນໄຂໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບ.

- ຈັດຕັ້ງການຊ່ວຍເຫຼືອໃນຮູບແບບເງິນສົດ, ເຊັ່ນ: ໂຄງການເງິນສົດເພື່ອການເຮັດວຽກ (Cash for Work) (CFW), ລວມທັງ:
    - ການຟື້ນຟູພື້ນຖານໂຄງລ່າງຊຸມຊົນເຊັ່ນ: ຖະໜົນຫົນທາງ, ອາຄານຮຽນ, ສູນຊຸມຊົນ, ສິ່ງອຳນວຍຄວາມສະດວກດ້ານຊົນລະປະທານ ແລະ ຊັບສິນດ້ານການທ່ອງທ່ຽວ.
    - ການອະນາໄມ ແລະ ກຳຈັດສິ່ງເສດເຫຼືອອອກຈາກພື້ນທີ່ກະສິກຳ, ເສັ້ນທາງຊຸມຊົນ ແລະ ພື້ນທີ່ທົ່ວໄປອື່ນໆ.
- ເປີດໂຄງການເກັບກູ້ລະເບີດບໍ່ທັນແຕກ ແລະ ແຜນງານສຶກສາຄວາມສ່ຽງ.
- ລະດົມໜ່ວຍງານເກັບກູ້ລະເບີດບໍ່ທັນແຕກປະມານ 5-7 ຄົນ ຢູ່ບັນດາແຂວງທີ່ໄດ້ຮັບຜົນກະທົບ ເຊິ່ງຂຶ້ນກັບຂະໜາດຂອງພື້ນທີ່ໄດ້ຮັບຜົນກະທົບ.
- ສະໜອງຂໍ້ມູນກ່ຽວກັບຄວາມສ່ຽງໃຫ້ແກ່ສະມາຊິກຊຸມຊົນທີ່ມີຄວາມສ່ຽງຢູ່ອ້ອມແອ້ມເຂດພື້ນທີ່ມີວັດຖຸລະເບີດຝັງດິນ.
    - ດຳເນີນການສຳຫຼວດ ແລະ ເກັບກູ້ລະເບີດບໍ່ທັນແຕກໃນເນື້ອທີ່ 500 ເຮັກຕາ.
    - ປະຕິບັດວຽກງານສຸກເສີນ EOD ເພື່ອແກ້ໄຂ UXO.

## ບັນຫາຄອບຄຸມຫຼາຍມິຕິ

### ຮູບແບບການຊ່ວຍເຫຼືອ

ກິດຈະກຳການຟື້ນຟູເບື້ອງຕົ້ນແມ່ນອີງໃສ່ວິທີການພັດທະນາໂດຍໃຫ້ຄວາມຊ່ວຍເຫຼືອໃນຮູບແບບສິ່ງຂອງທີ່ຈຳກັດ. ການຊ່ວຍເຫຼືອທີ່ອີງໃສ່ເງິນສົດແມ່ນເປັນບຸລິມະສິດສຳຄັນ ເພື່ອໃຫ້ສາມາດຈັດສັນການບໍລິການໄດ້ຢ່າງວ່ອງໄວ, ໂດຍສະເພາະສຳລັບການຈ້າງງານສຸກເສີນ.

### ການພິຈາລະນາເພດພາວະ, ຜູ້ພິການ ແລະ ການປົກປ້ອງ

ຢ່າງໜ້ອຍ 15 ເປີເຊັນ ຂອງກອງທຶນສຳລັບກິດຈະກຳການຟື້ນຟູ ຄວນໄດ້ຮັບການຈັດສັນໃຫ້ແກ່ໂຄງການຕ່າງໆທີ່ມີຈຸດປະສົງຕົ້ນຕໍໃນການແກ້ໄຂຄວາມຕ້ອງການສະເພາະດ້ານຂອງແມ່ຍິງ, ສົ່ງເສີມຄວາມສະເໝີພາບລະຫວ່າງຍິງຊາຍ. ກິດຈະກຳຕ້ອງບໍ່ກີດກັນກຸ່ມທີ່ບອບບາງ ທີ່ອາດຈະບໍ່ສາມາດເຂົ້າຮ່ວມຊ່ວຍວຽກທີ່ໃຊ້ແຮງງານໄດ້, ເຊັ່ນ: ຄົນພິການ, ຜູ້ສູງອາຍຸ, ແລະ ຜູ້ທີ່ມີຄວາມຮັບຜິດຊອບໃນການເບິ່ງແຍງ.

### ການປົກປ້ອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ຄວາມຮັບຜິດຊອບຕໍ່ປະຊາກອນທີ່ໄດ້ຮັບຜົນກະທົບ

ກົນໄກທີ່ມີຢູ່ແລ້ວສຳລັບການສະກັດກັ້ນການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA) ແລະ ການປ້ອງກັນການລ່ວງລະເມີດທາງເພດ (PSH) ຂອງສະມາຊິກອົງການຕ່າງໆ ຈະຖືກນຳໄປໃຊ້ກັບກິດຈະກຳຂອງກຸ່ມການຟື້ນຟູເບື້ອງຕົ້ນ, ແລະ ຈຸດປະສານງານແຜນງານຟື້ນຟູເບື້ອງຕົ້ນຈະປະສານງານກັບ PSEA ແລະ ຈຸດປະສານງານ PSH ໃນຂະບວນການວາງແຜນ. ຊຸມຊົນທີ່ໄດ້ຮັບຜົນປະໂຫຍດຈະໄດ້ຮັບການແຈ້ງໃຫ້ຮູ້ກ່ຽວກັບກົນໄກການຮ້ອງທຸກ ແລະ ຊ່ອງທາງການຕອບຮັບຄຳຄິດຄຳເຫັນ, ໂດຍຄຳນຶງເຖິງການຮູ້ໜັງສື, ພາສາ, ນະໂຍບາຍດ້ານສັງຄົມ ແລະ ການປະຕິບັດທາງດ້ານວັດທະນະທຳຂອງເຂົາເຈົ້າ. ຄວາມຕ້ອງການຂອງຊຸມຊົນທີ່ໄດ້ຮັບຜົນກະທົບຈະຖືກເກັບກຳ ແລະ ນຳມາພິຈາລະນາໃນລະຫວ່າງການສຳຫຼວດຄວາມຕ້ອງການ, ໂດຍສ່ວນໃຫຍ່ແມ່ນອີງໃສ່ການປຶກສາຫາລືຂອງຊຸມຊົນ ແລະ ການປະເມີນຄວາມເສຍຫາຍໃນພາກສະໜາມສຳລັບ ຄວາມຮັບຜິດຊອບຕໍ່ຜູ້ໄດ້ຮັບຜົນກະທົບ (AAP). ສະມາຊິກຊຸມຊົນຈະມີສ່ວນຮ່ວມໃນການເລືອກໂຄງສ້າງພື້ນຖານຂອງຊຸມຊົນທີ່ຈະໄດ້ຮັບການຟື້ນຟູ.

## ສະມາຊິກກຸ່ມ

| | |
|---|---|
| ຜູ້ນໍາພາຝ່າຍລັດຖະບານ: | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MLSW) |
| ຜູ້ນໍາຮ່ວມ: | ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) |
| ສະມາຊິກ: | ກະຊວງການຕ່າງປະເທດ (MOFA), ກະຊວງແຜນການ ແລະ ການລົງທຶນ (MPI), ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT), ອົງການອາຫານ ແລະ ການກະເສດ (FAO), Oxfam, ອົງການກາແດງສະວິດ, ອົງການກາແດງລາວ, ອົງການອາຫານໂລກ (WFP ), ອົງການສະຫະປະຊາຊາດ ເພື່ອການຫຼຸດຜ່ອນຄວາມສ່ຽງ ຈາກໄພພິບັດ (UNDRR) |

# ການຂົນສົ່ງ

(ກຸ່ມບໍລິການທົ່ວໄປ)

**ຄວາມຕ້ອງການ (US$)**

**207 ພັນ**

## ຜົນກະທົບຂອງຂະແໜງການ ແລະ ຄວາມຕ້ອງການຮີບດ່ວນທີ່ສໍາຄັນ

### ຜົນກະທົບ

- ພື້ນທີ່ຕ່າງໆ ແມ່ນຍັງບໍ່ສາມາດເຂົ້າໄດ້ເນື່ອງຈາກນໍ້າຖ້ວມ.
- ຄາດວ່າຈະມີບັນຫາໃນການເຂົ້າເຖິງຊຸມຊົນຊົນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ເຊັ່ນ: ຖະໜົນຫົນທາງທີ່ບໍ່ສາມາດຜ່ານໄດ້ ແລະ ສິ່ງເສດເຫຼືອທີ່ກະແຈກກະຈາຍ.
- ລະບົບການສື່ສານ ແລະ ໄຟຟ້າຂັດຂ້ອງ ຢູ່ໃນເຂດທີ່ໄດ້ຮັບຜົນກະທົບຮຸນແຮງ.
- ພື້ນຖານໂຄງລ່າງສາທາລະນະທີ່ເສຍຫາຍ ລວມທັງເສັ້ນທາງ, ຂົວ ແລະ ເສັ້ນທາງທີ່ບໍ່ໄດ້ປູຢາງ.
- ຄວາມເສຍຫາຍ ແລະ ການສູນເສຍພື້ນຖານໂຄງລ່າງ ໃນທ້ອງຖິ່ນ ແລະ ຊັບສິນຂອງປະເທດ.
- ການຢຸດເຊົາຂອງຕະຫຼາດທ້ອງຖິ່ນທີ່ໄດ້ຮັບຄວາມເສຍຫາຍ ເຊິ່ງອາດກໍ່ໃຫ້ເກີດຄວາມເສຍຫາຍ ແລະ ການສູນເສຍ.
- ການຢຸດເຊົາ ແລະ ຄວາມຕ້ອງການທີ່ເພີ່ມຂຶ້ນໃນການຂົນສົ່ງ/ການບໍລິການຂົນສົ່ງສິນຄ້າ.

### ຄວາມຕ້ອງການ

- ການສ້ອມແປງເສັ້ນທາງ ແລະ ຂົວຂ້າມ ຢ່າງຮີບດ່ວນ
- ສາງເກັບມ້ຽນສຸກເສີນ ເພື່ອຮອງຮັບການເກັບຮັກສາ
- ເພີ່ມການເຂົ້າເຖິງຕະຫຼາດ.

## ກິດຈະກຳຮັບມືທີ່ສຳຄັນ

### ໄລຍະ 1: 0-2 ອາທິດ

- ການລະດົມໜ່ວຍເກັບຂໍ້ມູນເຄື່ອນທີ່ (MSUs) ໃນເມືອງທີ່ສາມາດເຂົ້າເຖິງ ແລະ ໄດ້ຮັບຜົນກະທົບ.
- ການຈັດຫາສາງເກັບມ້ຽນ ໃນສຖານທີ່ຕັ້ງສຳຄັນຂອງແຂວງ ເຊັ່ນ: ອຸດົມໄຊ, ປາກເຊ ແລະ ວຽງຈັນ
- ອຳນວຍຄວາມສະດວກໃນການຮັບເອົາເຄື່ອງຊ່ວຍເຫລືອດ້ານມະນຸດສະທຳທີ່ນຳເຂົ້າ.
- ສະໜັບສະໜູນຄວາມຕ້ອງການດ້ານຂົນສົ່ງຂອງກຸ່ມທີ່ສຳຄັນເຊັ່ນ FSAC, ທີ່ພັກອາໄສ, WASH, ສຸຂະພາບ ແລະ ໂພຊະນາການ, ການສຶກສາ, ແລະ ອື່ນໆ.

### ໄລຍະ 2: 2-4 ອາທິດ

- ການລະດົມໜ່ວຍເກັບຂໍ້ມູນເຄື່ອນທີ່ (MSUs) ໃນເມືອງທີ່ສາມາດເຂົ້າເຖິງ ແລະ ໄດ້ຮັບຜົນກະທົບ.
- ການຈັດຫາສາງເກັບມ້ຽນ ທີ່ໃນສະຖານທີ່ສຳຄັນຂອງແຂວງເຊັ່ນ: ອຸດົມໄຊ, ປາກເຊ ແລະ ວຽງຈັນ
- ການຮັບເອົາເຄື່ອງຊ່ວຍເຫລືອດ້ານມະນຸດສະທຳທີ່ນຳເຂົ້າ.
